# ຕຳນານ ດາວປະຫລາດ

ທະຈິມະ ຊິນຈິ

ແປໂດຍ: ອຸທິນ ບຸນຍາວົງ



ເລື່ອງສັ້ນສຳລັບເຍົາວະຊົນເພື່ອປີ 2000

ໂຮມເລື່ອງສັ້ນຍີ່ປຸ່ນ ທີ່ໄດ້ຮັບການຕີລາຄາສູງຈາກນາໆ ຊາດ

# ຕຳນານດາວປະຫຼາດ

ຂຽນໂດຍ **ທະຈິມະ ຊິນຈິ**

ນັກຂຽນ ຍີ່ປຸ່ນ

**ອຸທິນ ບຸນຍາວົງ**

ແປຈາກ ພາສາອັງກິດ

ຈັດພິມໂດຍ ກົມວັນນະຄະດີ

ດ້ວຍການ ອຸປະຖຳ ຂອງ ສະມາຄົມ ຍີ່ປຸ່ນ ເພື່ອສົ່ງປຶ້ມ ໃຫ້ເດັກນ້ອຍລາວ ທີ່ໂຕກຽວ

1990

ທະບຽນອະນຸຍາດ ພິມ ເລກທີ່ 176/ພຈບ ລົງວັນທີ 22.8.1990

ພິມຄັ້ງທີໜຶ່ງ 1990

ຕຳນານດາວປະຫຼາດ

ໂດຍ : ທະຈິມະ ຊິນຈິ ນັກຂຽນຍີ່ປຸ່ນ

ອຸທິນ ບຸນຍາວົງ ແປຈາກ ພາສາອັງກິດ

ພິມທີ່ ວິສາຫະກິດການພິມຈຳໜ່າຍສຶກສາ

ພິມຈຳນວນ : 20 000 ຫົວ

# ຕຳນານດາວປະຫຼາດ



# ຄຳນຳ

ພວກເຮົາຮູ້ຈັກວ່າ ຍີ່ປຸ່ນເປັນປະເທດທີ່ຈະເລີນຮຸ່ງເຮືອງ, ມີເສດຖະກິດທີ່ຮັ່ງມີເຂັ້ມແຂງ, ແຕ່ພວກເຮົາຮູ້ຈັກວັນນະຄະດີຍີ່ປຸ່ນພຽງໜ້ອຍດຽວ. ຄວາມຈິງ ວັນນະກຳຍີ່ປຸ່ນ ປະສົບຄວາມສຳເລັດ ແລະ ເປັນທີ່ລືຊາໄປທົ່ວໂລກ ເພາະຜົນງານຂອງນັກຂຽນຍີ່ປຸ່ນ ໄດ້ຮັບການແປເປັນຫຼາຍພາສາ. ປຶ້ມເຫຼັ້ມນີ້ ກໍເປັນໜຶ່ງ ໃນຈຳນວນຜົນງານອັນຫຼວງຫຼາຍ ທີ່ປະສົບຄວາມສຳເລັດຂອງນັກຂຽນຍີ່ປຸ່ນ ແລະ ໄດ້ຮັບການຕີລາຄາສູງ ຈາກຮອງຜູ້ອຳນວຍການໃຫຍ່ຂອງອຸຍແນດສະໂກ. ຜູ້ຂຽນໄດ້ສ້າງວັນນະກຳນີ້ ເພື່ອອຸທິດແດ່ເດັກນ້ອຍໃນວັນນີ້ ທີ່ຈະປະເຊີນກັບສະຕະວັດທີ 21 ທີ່ພວມຫຍັບນໍ່ເຂົ້າມາເລື້ອຍໆ.

ປຶ້ມໂຮມເລື່ອງສັ້ນທັງວນີ້ ຍົກໃຫ້ເຫັນບັນຫາທີ່ເປັນຄວາມກັງວົນສົນໃຈຂອງມວນມະນຸດ ທີ່ພວມຍ່າງເຂົ້າສູ່ສະຕະວັດໃໝ່. ການຊອກຫາຄຳຕອບ ຫຼື ຊອກຫາທາງອອກສຳລັບບັນຫາທັງຫຼາຍ ແມ່ນເປັນພາລະໜ້າທີ່ຂອງຄົນ ຊຶ່ງວັນນີ້ເປັນເດັກນ້ອຍ ແຕ່ຈະເປັນຜູ້ໃຫຍ່ໃນປີ 2000. ໜ້າທີ່ຂອງຜູ້ໃຫຍ່ ກໍຄືຕ້ອງມີວິທີການອັນສະຫຼາດໃນການອະທິບາຍໃຫ້

ເດັກເຫຼົ່ານີ້ເຫັນແຈ້ງເຖິງໄພພິບັດ ທີ່ອາດຈະເກີດຂຶ້ນໃນອະນາຄົດ ແລະ ຊີ້ແນະແນວທາງ ເພື່ອໃຫ້ເດັກນ້ອຍກຽມຕົວກຽມໃຈ ໃນການປະເຊີນບັນຫາ ແລະ ແກ້ໄຂ ແກ້ບັນຫາໃຫ້ລຸລ່ວງໄປຢ່າງມີຜົນສຳເລັດ.

ດ້ວຍຄວາມເປັນຫ່ວງເປັນໃຍຈາກສ່ວນເລິກຂອງຈິດສຳນຶກ ທະຈິມະ ຊິນຈິ ຜູ້ຂຽນປຶ້ມຫົວນີ້ໄດ້ອຸທິດຕົນເປັນເວລາຫຼາຍປີຂຽນເລື່ອງສັ້ນເຫຼົ່ານີ້ຂຶ້ນມາ, ເປັນວັນນະກຳທີ່ເຕັມໄປດ້ວຍພູມປັນຍາ ແລະ ການເຫັນກວ້າງມອງໄກ, ຂຽນຂຶ້ນມາທັນກັບເວລາ ເພື່ອໃຫ້ຄົນຮຸ່ນໃໝ່ໄດ້ອ່ານເພື່ອປະດັບ ສະຕິປັນຍາ ແລະ ສ້າງຄວາມເຊື່ອໝັ້ນໃຫ້ກັບຕົນເອງ.

ສະເພາະນັກອ່ານ ນັກຂຽນລາວ ປຶ້ມຫົວນີ້ຈະເປັນແບບຢ່າງໃນການສ້າງສັນວັນນະກຳອັນດີເດັ່ນ, ວັນນະກຳສຳລັບຕ້ອນຮັບ ປີ 2000, ເລື່ອງສັ້ນແຕ່ລະເລື່ອງຈະປະທັບໃຈຜູ້ອ່ານໄປຕະຫຼອດການະນານ.

ດ້ວຍຄວາມຮັກແພງ

ວຽງຈັນ, ວັນທີ 20.8.1990

ດຣ. ທອງຄຳ ອ່ອນມະນີສອນ

ຫົວໜ້າກົມວັນນະຄະດີ

# ຄຳປາລົບ

ການພົວພັນມິດຕະພາບລະຫວ່າງປະຊາຊົນລາວ ແລະ ຍີ່ປຸ່ນ ເຄີຍມີມາດົນນານແລ້ວ ແລະ ດຳເນີນໄປ ໃນຫຼາຍຮູບການ. ສະມາຄົມສົ່ງປື້ມຮູບ ໃຫ້ເດັກນ້ອຍລາວ ກໍ່ແມ່ນອົງການໜຶ່ງ ຂອງຍີ່ປຸ່ນ ທີ່ບໍ່ສັງກັດລັດຖະບານ ທີ່ໄດ້ມາພົວພັນ ແລະ ຊ່ອຍເຫຼືອເດັກນ້ອຍລາວ ນັບແຕ່ປີ 1982 ເປັນຕົ້ນມາ ໂດຍຜ່ານຄະນະກຳມາທິການແຫ່ງຊາດລາວ ເພື່ອປີສາກົນເດັກນ້ອຍ.

ສະມາຄົມພວກເຮົາມີຈຸດປະສົງ ແລະ ຄວາມຫວັງດີ ຢາກໃຫ້ເດັກນ້ອຍລາວມີເງື່ອນໄຂສະດວກ ໃນການສຶກສາຮ່ຳຮຽນ ຈຶ່ງໄດ້ຂົນຂວາຍຫາທຶນ ເພື່ອຊື້ຂອງຂວັນ, ຊື້ປື້ມສົ່ງໃຫ້ເດັກນ້ອຍລາວ, ເພື່ອພິມປື້ມພາສາລາວໃຫ້ເດັກນ້ອຍລາວ ແລະ ເພື່ອສົມທົບທຶນສ້າງໂຮງຮຽນບາງແຫ່ງໃນ ສ.ປ.ປ.ລາວ.

ໂດຍທີ່ປີ 1990 ນີ້ ທາງອົງການອຸຍແນສໂກ ປະກາດໃຫ້ເປັນປີສາກົນແຫ່ງການຮູ້ໜັງສື, ສະມາຄົມມີຄວາມຍິນດີ ທີ່ຈະປະກອບສ່ວນໃນເລື່ອງນີ້ ຈຶ່ງໄດ້ຮ່ວມມືກັບກົມວັນນະຄະດີ ໂດຍຮັບອຸປະຖຳຄ່າພິມປື້ມ

"ຕຳນານດາວປະຫຼາດ" ສະບັບພິມເປັນພາສາລາວ ເພື່ອໃຫ້ເດັກນ້ອຍລາວມີປຶ້ມອ່ານມ່ວນໆເພີ່ມຂຶ້ນ. ການອ່ານປຶ້ມດີໆ ເຮັດໃຫ້ເດັກນ້ອຍມີນິໄສມັກອ່ານ, ເປັນການເສີມຂະຫຍາຍສະຕິປັນຍາ ສ້າງຄວາມເຊື່ອໝັ້ນແກ່ເດັກໃຫ້ກ້າວສູ່ອະນາຄົດອັນສົດໃສ ແລະ ເຕີບໃຫຍ່ເປັນກຳລັງແຮງພັດທະນາປະເທດຊາດຕໍ່ໄປ. ນີ້ແມ່ນຈຸດປະສົງອັນສູງສົ່ງຂອງ ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ.

ດ້ວຍຄວາມປາຖະໜາດີ

ຈັນທະສອນ ອິນທະວົງ

ປະທານສະມາຄົມ

24 / VII
ຫ້າມຈຳໜ່າຍ



# ທະຈິມະ ຊິນຈິ

ທະຈິມະ ຊິນຈິ ເກີດເມື່ອປີ 1947 ທີ່ເມືອງ ຮິໂຣຊິມາ ປະເທດ ຍີ່ປຸ່ນ. ພາຍຫຼັງສຶກສາ ວິຊາ ປັດຊະຍາ ແລະ ກົດໝາຍລະຫວ່າງຊາດທີ່ ໂຕກຽວ ແລ້ວ ເຂົາກໍ່ເດີນທາງໄປສຶກສາຫາຄວາມຮູ້ ເພີ່ມເຕີມອີກ ໃນສິບກວ່າປະເທດ ລວມທັງອິນເດຍ, ບັງຄະລາເທດ, ກະເລັກ ແລະເຢຍລະມັນຕາເວັນຕົກ. ເຂົາເປັນຜູ້ລິເລີ່ມຂະບວນການທີ່ເຄື່ອນໄຫວສ່ງປຶ້ມໄປໃຫ້ບັນດາ ປະເທດໃນໂລກທີສາມ.

ນັບແຕ່ປີ 1977 ເປັນຕົ້ນມາ ທະຈິມະ ຊິນຈິ ເຂົ້າຮ່ວມສັງກັດຢູ່ ສູນວັດທະນະທຳອາຊີຂອງ ອຸຍແນສໂກ ທີ່ໂຕກຽວ ແລະ ໄດ້ປະກອບສ່ວນຢ່າງຫ້າວຫັນໃນໂຄງການ ຈັດພິມປຶ້ມສຳລັບເດັກ, ໂຄງການລົບລ້າງຄວາມບໍ່ຮູ້ໜັງສືສຳລັບປະຊາຊົນ ໃນເຂດຊົນນະບົດຂອງປະເທດ ໃນອາຊີ ແລະ ປາຊີຟິກ.

# ສາລະບານ

ກົງກິຈິ ເນົາໂບນພູ .............................. 1

ໃຜຜູ້ໜຶ່ງ .............................. 35

ຕຳນານດາວປະຫຼາດ .............................. 57

ໄດໂນເສົາທະເລຊາຍ .............................. 93

ລະດູບານໃໝ່ມາແຕ່ໃສ ? .............................. 107

# ກົງກິຈິ ເບົາໂບນພູ

ມັນເປັນເດືອນກຸມພາ, ແສງຕາເວັນຍາມລະດູໜາວເຫຼືອມຍິບຍັບ ເມື່ອຕ້ອງກັບຫິມະ ຊຶ່ງປົກຄຸມໄປທົ່ວທຸກແຫ່ງຈົນສຸດສາຍຕາ ປີທີ່ຜ່ານໆ ມານັ້ນ ສັດທຸກໂຕທີ່ອາໄສຢູ່ຕາມໂບນພູແຫ່ງນີ້ ຍັງຄົງນອນຈຳສີນ ແລະ ຫຼັບຢ່າງແຈບຈົມ ໃນລະດູໜາວ, ແຕ່ປີນີ້ ມີໂຕໜຶ່ງຕື່ນມືນຕາໃສໆ ຢູ່.

ເຖິງແມ່ນວ່າ ສາຍລົມອຸ່ນຄັ້ງທຳອິດ ຂອງລະດູບານໃໝ່ຍັງບໍ່ທັນພັດມາໃກ້ ແຕ່ກົງກິຈິໝາຈອກກໍ່ຄານອອກມາຈາກຮູ ທີ່ມັນໄດ້ຄວັດລົງເລິກໆ ເພື່ອນອນພັກຍາມລະດູໜາວແຫ່ງນັ້ນ. ກົງກິຈິ ຜູ້ໜຸ່ມນ້ອຍພວມຄິດໜັກ. ເອີນີ້ ກ່ອນທີ່ເຮົາຈະເວົ້າກັນວ່າໝາຈອກໂຕນີ້ ຊຶ່ງເປັນສັດເດຍລະສານ ບໍ່ອາດຈະຄິດໜັກ ແຕ່ຢ່າງໃດນັ້ນ ຈົ່ງຢ່າລືມວ່າ ໝາຈອກກໍ່ມີຄວາມຮູ້ສຶກຄືກັນ ແລະ ຍາມໃດທີ່ມັນດີໃຈເປັນພິເສດ ຫຼື ໂສກເສົ້າ ມັນກໍ່ຈະເຫົ່າສຽງດັງ " ກົງ ". ສູ່ມື້ນີ້ ມີຫຼາຍສິ່ງຫຼາຍແນວທີ່ໝາ

ຈອກ ຕ້ອງເປັ່ນຫ່ວງເປັ່ນໃຍນ່ຳ.

ຕະຫຼອດລະດູໜາວທີ່ດິນແສນດິນຈິນເບິ່ງຄືວ່າຈະເປັ່ນໄປຢ່າງຕະຫຼອດການນັ້ນ ກິງກິຈິ ຄິດແລ້ວຄິດອີກຈົນຫຼັບຕາບໍ່ລົງໄດ້ ແມ່ນແຕ່ຄັ້ງດຽວ. ດັ່ງນີ້ຈຶ່ງບໍ່ເປັ່ນເລື່ອງປະຫຼາດເລີຍ ເມື່ອມັນອອກມາຈາກຮູ ຕາມັນຈຶ່ງຊົງເມື່ອຍລ້າ, ຂົນພົງຍັບຍູ່ ແລະ ຫາງຊຶ່ງມັນເອກອ້າງພູມໃຈເຫຼືອທີ່ສຸດນັ້ນກໍ່ບໍ່ເປັ່ນສີເງິນເຫຼື້ອມຍິບຍັບອີກ.

ເລື່ອງທີ່ເຮັດໃຫ້ ກິງກິຈິ ຄິດໜັກນັ້ນກໍ່ແມ່ນ. . . ເອີ ບັນຫາເດີ່ນຕີກ້ອນ. ເດີ່ນຕີກ້ອນຊັ້ນຫວະ ?! ໝາຈອກຊິເຮັດຫຍັງໄດ້ກັບເດີ່ນຕີກ້ອນຫັ້ນນ່າ ?

ນັບແຕ່ລະດູບານໃໝ່ປີທີ່ແລ້ວເປັ່ນຕົ້ນມາ, ເມື່ອຄັ້ງໂນນພູຖືກຂຸດຖືກຖາກລົງ ໃຫ້ເປັ່ນເດີ່ນຕີກ້ອນ ກິງກິຈິແນມເບິ່ງໂສມໜ້າມະນຸດ ດ້ວຍ



ຄວາມອິດສາ. ພວກເຂົາຈັບໄມ້ຕີກ້ອນກວັດແກ່ວງໄປມາ ຂະນະທີ່ຍ່າງເລາະລ່ອງໄປມາຢູ່ຕາມເດີ່ນ. ຄົນພວກນີ້ຊຶ່ງເອີ້ນກັນວ່າ "ນັກທຸລະກິດ" ຕ່າງກໍ່ໃສ່ຜ້າຜູກຄໍອັນສະຫງ່າງາມ ເວລາພວກເຂົາຫຍ່ງວໄປຫຍ່ງວມາໂຮງການແຕ່ວັນຈັນຮອດວັນສຸກ ແລະ ເມື່ອຮອດທ້າຍອາທິດປະກົດວ່າວຽກງານຂອງພວກເຂົາ ກໍ່ແມ່ນອອກມາສູ່ໂນນພູຂຽວໆ ແລະ ມ່ວນຊື່ນກັບການຕີບານໜ່ວຍນ້ອຍໆ ຂາວໆ ໃຫ້ພຸ່ງໄປກາງອາກາດແລ້ວກິ້ງລົງໄປໃນຂຸມນ້ອຍໆ ມົນໆ.

ກົງກີຈີ ຈະລີ້ຢູ່ຕາມປ່າຫຍ້າສູງໆ ທີ່ຂຶ້ນອ້ອມເດີ່ນກ້ອນ ແລະ ລັກຈອບເບິ່ງຜູ້ຄົນເຫຼົ່ານີ້ ທີ່ບຸ່ງເຄືອງວຽກງານທັງມ່ວນຊື່ນ ຢູ່ກັບການຕີກ້ອນ, ແລ້ວກົງກີຈີ ກໍ່ຄຶດຢູ່ຜູ້ດຽວວ່າ " ອີຫຼີທັ້ນແຫຼະ ພວກເຮົາເຫຼົ່າໝາຈອກນີ້ ມີຊີວິດຢູ່ຢ່າງລຳບາກ ແລະ ເບື່ອໜ່າຍ; ເອົາແຕ່ໄລ່ຄຸບກະຕ່າຍ ແລະ ໜູນາ, ແລ້ວກໍ່ຖືກຄົນໄລ່ຕິດຕາມເວລາ ພວກເຮົາໄປຈອບມອຍກັດໄກ່ຂອງເຂົາ. "

" ບະ, ຂ້ອຍຢາກເປັນມະນຸດເວີ້ຍ! ຂ້ອຍຈະໃຊ້ຊີວິດເປັນນັກທຸລະກິດເບິ່ງ ເອ... ຂ້ອຍຊິເຮັດຫຍັງໄດ້ລະ ? ເປັນຫຍັງບໍ່ເປັນຄົນບາດດຽວໂລດໃຫ້ມັນແລ້ວເລີຍ ! ເອີ ... ແຕ່ຖ້າຂ້ອຍເປັນຄືວ່າລະ. . . " ນີ້ຄືບັນຫາທີ່ເຮັດໃຫ້ກົງກີຈີນອນບໍ່ຫຼັບ ແລະ ວຸ່ນວາຍໃນໃຈ ຕະຫຼອດລະດູໜາວ.

ຂະນະທີ່ພວກເຮົາຊອກຮູ້ກ່ຽວກັບຄວາມນຶກຄິດຂອງກົງກິຈິ ໃນເລື່ອງລະດູໜາວຢູ່ນັ້ນຄ້ອນພໍດີມັນໂປໂລອອກມາຈາກປາກຮູ ນັ້ງບໍ່ເໜັງບໍ່ຕີງ ແລະ ຄຶດຊຶງລຶງກ່ຽວກັບບັນຫາຕ່າງໆ, ແລ້ວໃນທີ່ສຸດມັນກໍ່ລຸກປຸ່ບປັ່ບ ແລະ ສັ່ນຂົນຈົນຕົວສັ່ນບົ໊ບໆ ແຕ່ປາຍດັງຮອດປາຍຫາງ. " ເຊົາລະອັນເປັນໝາຈອກນີ້ ! " ມັນຮ້ອງຂຶ້ນແຮງໆ ຈົນສຽງດັງກ້ອງຂ້າມທົ່ງຂ້າມພູໄປ ສຽງນີ້ແຮງພຽງພໍທີ່ຈະດັງໄປຮອດມະຫາສະໝຸດ ແລະ ລອຍໄປຕາມເທິງຄື້ນທະເລ ເພື່ອໃຫ້ສະນັ່ນກ້ອງໄປທົ່ວໂລກ. ກົງກິຈິເວົ້າກັບຕົນເອງວ່າ " ນັບແຕ່ນີ້ໄປ ຂ້ອຍຈະເປັນຄົນ, ຂ້ອຍຈະກັບກາຍເປັນຄົນຜູ້ໜຶ່ງ. . . "

ກົງກິຈິ ຕັດສິນໃຈທີ່ຈະໃຊ້ມົນຄາຖາ " ອົມສະຫົມ ". ມົນຄາຖານີ້ເປັນທີ່ຮູ້ຈັກກັນໃນໝູ່ໝາຈອກເທົ່ານັ້ນ. ມັນແມ່ນວິທີທີ່ໝາຈອກໃຊ້ເພື່ອກັບເພດເປັນມະນຸດ ໂດຍເອົາໃບໝາກກໍ່ໃບໜຶ່ງຢອງໃສ່ຫົວ ແລ້ວເວົ້າວ່າ " ອົມ " ໝາຈອກຕົວໃດຕົວໜຶ່ງກໍ່ຈະສາມາດເວົ້າໄດ້ຄືຄົນຢ່າງບໍ່ມີຜິດ, ເມື່ອເວົ້າວ່າ " ສະ " ຮ່າງຄີງໝາຈອກກໍ່ຈະປ່ຽນເປັນຮູບຮ່າງຄົນ ປະເພດໃດກໍ່ໄດ້ຕາມຄວາມຕ້ອງການ. ບັດນີ້ມີແຕ່ຫາງເທົ່ານັ້ນ ທີ່ຍັງເຫຼືອຢູ່. ໃນທີ່ສຸດ - ເອີອີ່ຫຼືໃດ -ໃນທີ່ສຸດ ເມື່ອເວົ້າວ່າ " ຫົມ " ແລ້ວຫາງກໍ່ຈະກຸດຫາຍໄປ, ແລ້ວໝາຈອກໂຕທີ່ຈົ່ມມົນຄາຖານີ້ ກໍ່ຈະກາຍເປັນມະນຸດຢ່າງສົມບູນ ແລະ ຈະບໍ່ກັບຄືນເປັນໝາຈອກໄດ້ອີກຈັກເທື່ອ. ແມ່ຂອງກົງກິຈິເຕືອນແລ້ວເຕືອນອີກ ບໍ່ໃຫ້ລູກເວົ້າສາມຄຳນີ້, ແຕ່ບັດນີ້ກົງກິຈິຕັດສິນໃຈແລ້ວທີ່ຈະບໍ່ເຊື່ອຟັງຄຳຕັກເຕືອນຂອງແມ່.



ໝາຈອກໜຸ່ມເກັບເອົາໃບໝາກກໍ່ແຫ້ງ ທີ່ປູຢູ່ຕາມຮູຍາມລະດູໜາວນັ້ນແລ້ວກໍ່ເອົາຢອງເທິງຫົວມັນເອງ.

" ກົງກິຈິເອີຍ ! ຄິດເບິ່ງຄັກໆ ເດີ ສິ່ງທີ່ໂຕເຮັດຫັ້ນນະ ! " ຜູ້ເປັນແມ່ຮ້ອງດັງມາໃສ່ ແຕ່ປາກປະຕູເຂົ້າເຮືອນຮັງ ທີ່ຕັ້ງຢູ່ເບີ້ນພູ.
" ລູກແມ່, ແມ່ຮູ້ດີເລື່ອງທີ່ລູກຄິດຢູ່ໃນໃຈຕະຫຼອດລະດູໜາວ, ແຕ່ວ່າຊີວິດຄວາມເປັນມະນຸດບໍ່ໄດ້ສຸກສະບາຍ ຄືດັ່ງຜູ້ອື່ນໆ ເຫັນດອກ ເພາະເອົາແຕ່ເບິ່ງດ້ານນອກເທົ່ານັ້ນ "

ກົງກິຈິຕອບວ່າ " ແມ່ ຂ້ອຍໄດ້ຕັດສິນໃຈແລ້ວ, ເປັນຫຍັງກໍເປັນກັນລະ, ຂ້ອຍຈະເປັນຄົນໃຫ້ໄດ້, ອົນມາຕິດຄ້າງຢູ່ເທິງພູຈັ່ງຊີ້ ໂດຍບໍ່ມີອາຫານການກິນຫຍັງເລີຍ ໃນລະດູໜາວ, ທັງຖືກຄົນເອົາປືນ

ໄລ່ຕິດຕາມຈີບອ້ອມທີບ ຂ້ອຍເບື່ອຂີ້ອຍອີ່ມແລ້ວ ! ຂ້ອຍຈະໄປເປັນນັກທຸລະກິດຢູ່ໃນເມືອງ, ເງິນເດືອນທີ່ຫາມາໄດ້ ຂ້ອຍກໍ່ຈະຊື້ກະຕ່າຍຫຼາຍໆໂຕ ເອົາແຕ່ໂຕແຊບໆ ມາຕ້ອນເຈົ້າ. . . " ຟ້າວເວົ້າໃຫ້ສຸດຄວາມ ແລ້ວໝາຈອກໜຸ່ມກໍ່ເອົາສິບແຫຼມເບິດຂຶ້ນຟ້າ ເພື່ອທີ່ຈະເລີ່ມຕົ້ນຈົ່ມມົນຄາຖາ

" ກິງກິຈິ ! " ຜູ້ເປັນແມ່ຮ້ອງໃສ່ອີກ " ແມ່ບໍ່ເຄີຍບອກລູກມາກ່ອນຈັກເທື່ອ ຄືວ່າໝູ່ໝາຈອກພວກເຮົາ ນັບເປັນຮ້ອຍໆ ເຄີຍໃຊ້ມົນຄາຖາ " ອິນສະຫົມ " ເພື່ອໃຫ້ກາຍເປັນຄົນມາແລ້ວ ແລະພາກັນໜີຈາກໂບນພູນີ້ໄປ. ຫຼັງຈາກນັ້ນກໍ່ບໍ່ມີໃຜຮູ້ ວ່າ ພວກເຂົາເປັນຕາຍແນວໃດ. ແມ່ຂໍຮ້ອງນຳລູກໃຫ້ຄິດເບິ່ງຄັກໆ, ເດີລູກແມ່. . ." ກ່ອນທີ່ແມ່ຈະທັນເວົ້າສຸດ ກິງກິຈິກໍ່ຮ້ອງຂຶ້ນ " ແມ່ ! ຂ້ອຍໄປລະເດີ " ເວົ້າແລ້ວ ມັນກໍ່ເອົາຕີນຂວາຈັບໃບໝາກກໍ່ຢອງໃສ່ຫົວຢ່າງໝັ້ນໃຈ ແລະເທົ່າສຽງດັງໆ " ອິນສະຫົມ ".

ໃນທັນທີ ແລະ ຢູ່ກັບບ່ອນທັ້ນໂລດບ່ອນທີ່ເຄີຍມີຕີນຕົວກິງກິຈິກໍ່ປະກົດມີຄົນໜຸ່ມໆ ຢືນຢູ່ພ້ອມທັງມືຂວາວາງຢູ່ເທິງຫົວ ເປັນບ່າວຮ່າງສູງສະຫງ່າຢູ່ໃນຊຸດສາກົນສີຊ້ຳ ແລະ ໃສ່ກາລະວັດ. ກິງກິຈິໃນຮ່າງມະນຸດຄ່ອຍໆ ເອົາມືລົງຈາກຫົວ ແລ້ວລູບກາລະວັດທີ່ຫ້ອຍຢູ່ຊື່ໜ້າອີກດ້ວຍຄວາມບໍ່ໝັ້ນໃຈ, ຕໍ່ມາກໍ່ເດ່ມືໄປທາງຫຼັງຊ້າໆ ແລ້ວຄ່ຳເບິ່ງ. . . ບໍ່ມີຫາງເລີຍ! ກິງກິຈິເຖິງຂັ້ນວ່າສາມາດເວົ້າດ້ວຍສຳນຽງ ແລະ ຄຳເວົ້າຂອງມະນຸດໄດ້ນຳອີກດ້ວຍ. ເຂົາດີໃຈອີ່ຫຼີ ເມື່ອຄິດເຫັນອະນາຄົດ

ຂອງຕົນທີ່ຮຸ່ງເຮືອງສົດໃສໃນຖານະເປັນຄົນຜູ້ໜຶ່ງ  ແລະ ຈະບໍ່ມີວັນ ກັບ
ເປັນ ໝາຈອກອີກຈັກເທື່ອ.

ຂະນະທີ່ ກິງກີຈີ ຊື່ນອົກຊື່ນໃຈຢູ່ນັ້ນ ຜູ້ເປັນແມ່ແນມເບິ່ງເຂົາຢ່າງບໍ່ພັບຕາ ແລ້ວນ້ຳຕາຂອງແມ່ກໍ່ໄຫຼລົງອາບແກ້ມ.  ລູກຊາຍຜູ້ກັບເພດເປັນມະນຸດ  ແນມເບິ່ງແມ່ທີ່ພວມຢູ່ໃນອາການໂສກເສົ້າແລ້ວຈິ່ງເວົ້າຂຶ້ນວ່າ: " ບໍ່ດົນລູກຈະກັບມາດອກ  ໄປລະ . . . " ແລ້ວເຂົາກໍລົງຈາກໂນນພູ ແລະ ລັບຫາຍໄປຢ່າງວ່ອງໄວ.

ເມື່ອແລ່ນລົງຈາກໂນນພູໄປບໍ່ດົນ ກິງກີຈີ ກໍ່ພົບຕົນເອງຢູ່ເທິງຖະໜົນທີ່ຕົວເມືອງ.  ແນ່ນອນ, ທຳອິດເຂົາຄິດຢ້ານວ່າ ຈະມີບາງຄົນໃນບ່ອນນີ້ ຮ້ອງໃສ່ແນວໃດແນວໜຶ່ງເຊັ່ນວ່າ " ຣວາຍ ! ໝາຈອກຕວ່າຫັ້ນ ! ພຸ້ນຢ່າງເລາະລ່ອງຢູ່ໃນຊຸດສາກົນ.  ໝາຈອກອີ່ຫຼີ ! " ດັ່ງນັ້ນ ເຂົາຈຶ່ງຫຼີກເວັ້ນທີ່ຈະເບິ່ງຜູ້ໜຶ່ງຜູ້ໃດໂດຍກົງ.  ແນວໃດກໍຕາມ ຂະນະທີ່ເຂົາຍ່າງໄປເລື້ອຍໆ ມຸ່ງໜ້າສູ່ກາງເມືອງ ແລະ ບໍ່ມີຄົນແມ່ນແຕ່ຄົນດຽວສົງໄສໃນຕົວເຂົາ ກິງກີຈີ ກໍ່ມີຄວາມເຊື່ອໝັ້ນຫຼາຍຂຶ້ນເລື້ອຍໆ ເຖິງຂັ້ນວ່າເຂົາຍ່າງເບີດແອ່ນອົກໄປທາງໜ້າ ສ່ວນບ່າໄຫຼ່ແວ້ນມາຢູ່ທາງ

ຫຼັງເກືອບວ່າຈະຫາຍຫຼັງເອົາໂລດ. ເຂົາແນ່ໃຈວ່າ ບັດນີ້ເຂົາເປັນຄົນແທ້ຈິງ " ຮ້ອຍສ່ວນຮ້ອຍ ".

ຕໍ່ມາ ເຂົາຢຸດ ແລະ ຢືນຢູ່ທາງແຍກ, ປີ້ນໄປອ້ອມໂຕ ແລະແນມໄປຍັງອາຄານ ທີ່ມີແສງເຮືອງຮຸ່ງ ແລະ ສູງເດັ່ນ. ຂະນະທີ່ກວາດສາຍຕາໄປຕາມຕຶກສູງໆນັ້ນ ເຂົາກໍ່ໄປເຫັນປ້າຍແຜ່ນໃຫຍ່ ຕິດຢູ່ຕຶກຫຼັງໜຶ່ງ

ຕ້ອງການດ່ວນ ! ພະນັກງານບໍລິສັດໜຶ່ງ ( ໑ ) ຄົນ
ພວກເຮົາເລືອກຫາຄົນທີ່ຮັກສັດ
ອາຍຸ ໔໕ ປີ ຫຼື ຕ່ຳກວ່ານີ້
ເງິນເດືອນສູງ. ເຊີນສອບຖາມຢູ່ໃນນີ້.
ບໍລິສັດພູດອຍອາພອນຈຳກັດ

" ຖືກກັບຂ້ອຍລະ ! " ເຂົາເວົ້າກັບຕົນເອງ ແລ້ວກໍ່ຍ່າງຂຶ້ນປະຕູໃຫຍ່ດ້ານໜ້າຢ່າງວ່ອງໄວ, ຍູ້ປະຕູໄຂອອກແລ້ວກໍ່ເຂົ້າໄປໃນຕຶກ.

ກິງກິຈິ ກົງໄປທີ່ໂຕະພະນັກງານຕ້ອນຮັບ ແລະ ເວົ້າສຽງດັງ ໆ ກັບຍິງສາວຄົນໜຶ່ງທີ່ນັ່ງຢູ່ຫັ້ນວ່າ " ສະບາຍດີ! ເອີ ອັນປ້າຍປະກາດຕິດຢູ່ດ້ານໜ້າອາຄານທີ່ວ່າ ບໍລິສັດຕ້ອງການພະນັກງານຫັ້ນນ່າ ໝາຍຄວາມວ່າ ຕ້ອງການນັກທຸລະກິດແມ່ນບໍ່ ? "

" ເອະ ! ເອີ... ແມ່ນລະ, ຂ້ອຍຄຶດວ່າແມ່ນ. ຂໍໂທດເດີ, ແຕ່ວ່າ... "

" ເອີ ດີລະຊັ້ນ, ຂ້ອຍມານີ້ເພື່ອສະໝັກເປັນນັກທຸລະກິດ. " ກິງກິຈິເວົ້າ " ຂ້ອຍຄິດວ່ານີ້ແມ່ນບໍລິສັດທີ່ຖືກກັບຈຸດປະສົງຂອງຂ້ອຍ. ຂໍໂທດນ້ອງສາວ ! ປະທານບໍລິສັດເພິ່ນຢູ່ໃສ ? ຂ້ອຍຢາກພົບກັບປະທານດຽວນີ້ໂລດ ".

ພະນັກງານສາວຕ້ອນຮັບພັບຕາຖີ່ໆ ດ້ວຍຄວາມແປກປະຫຼາດໃຈ ແລະ ເວົ້າໂດຍບໍ່ທັນໄດ້ຄິດວ່າ : " ປະທານຢູ່ຫ້ອງການຂອງເພິ່ນ ທີ່ຊັ້ນສາມ, ຫ້ອງເລກທີ 33 ແຕ່. . . " ແລະ ແລ້ວນາງກໍ່ອິດຫິວຂວັນບໍ່ໄດ້ທີ່ເຫັນໃບໜ້າອັນເຄົ້າຂຶມຂອງກິງກິຈິ ທີ່ຄ້າຍຄືກັບໝາຈອກ. ກິງກິຈິອອກຈາກໂຕະພະນັກງານຕ້ອນຮັບໄປຢ່າງຟ້າວຟັ່ງ.

ຂະນະເລາະລຽບຕາມລະບຽງໄປສູ່ຫ້ອງປະທານບໍລິສັດ ກິງກິຈິຜ່ານແວ່ນຈຶ່ງເຫຼືອດຕາເບິ່ງເງົາຕົນເອງ. ເອີ - ໃບໜ້າອັນນີ້ກໍ່ຫາກແມ່ນໃບໜ້າຂອງຄົນອີ່ຫຼີ, ແຕ່ແນວໃດກໍ່ຕາມເທາະ ຢ່າງໜຶ່ງທີ່ຄືໝາຈອກກໍຍັງສັບປົນຄົນເລກັບລັກສະນະມະນຸດຢູ່ - ແວວຕາໃສເຫຼື້ອມ ເປັນລ້ອກແລັກ, ໃບໜ້າແຫຼມໜ້ອຍໜຶ່ງ ພ້ອມກັບແຈປາກແວ້ນຂຶ້ນເທິງ ແລະ ໃບຫູກໍ່ຄືວ່າຕັ້ງຊັນຊິບລິບ.

" ສະບາຍດີທ່ານປະທານ ! ຂະນ້ອຍຫວັງຄັກແນ່ວ່າ ທ່ານຈະອະນຸຍາດໃຫ້ຂະນ້ອຍເປັນນັກທຸລະກິດຢູ່ໃນບໍລິສັດແຫ່ງນີ້. ຂະນ້ອຍຢາກມາເປັນນັກທຸລະກິດ, ເປັນໝາຈອກນັ້ນຈັ່ງແມ່ນບໍ່ . . . "ກິງກິຈິຫຸບປາກທັນໃດແລ້ວກໍ່ເລີ່ມຕົ້ນເວົ້າອີກວ່າ " ບໍ່, ອີ່ຫຼີໃດ, ເຖິງແມ່ນວ່າ ຂະນ້ອຍ

ຈະຄ້າຍຄືໝາຈອກ, ແຕ່ໃນຫົວໃຈແລ້ວຂະນ້ອຍເປັນຄົນເຊື່ອຖືໄດ້ແລະຊື່ສັດປານນັກບຸນແທ້ໆ. "

ຂະນະທີ່ກົງກິຈິເວົ້ານັ້ນ ປະທານຮ່າງຕຸ້ຍຫົວໜ້າແດງ ເງີຍໜ້າຂຶ້ນຈາກເບິ່ງເຈ້ຍທີ່ໜ້າໂຕະ ແລະ ໂດຍທີ່ເອົາແຂ້ວຄາບກອກຢາໃຫຍ່ໄວ້ເຂົາເວົ້າອອກມາດ້ວຍທ່າທາງອິດອ່ອນ ແລະ ເບື່ອໜ່າຍ " ຕົກລົງ, ເອົາຈັ່ງຊີ້ ກ່ອນອື່ນຂໍເບິ່ງຊີວະປະຫວັດຂອງເຈົ້າກ່ອນ".

ປະທານອິດເມື່ອຍເຕັມທີ ເພາະນັບແຕ່ຕອນເຊົ້າມາ ເຂົາໄດ້ສໍາພາດຄົນຕັ້ງຫຼາຍລາຍແລ້ວ.

ຝ່າຍກົງກິຈິເອງ ບໍ່ເຄີຍໄດ້ຍິນຄໍາວ່າ " ຊີວະປະຫວັດ " ເລີຍແມ່ນແຕ່ຄັ້ງດຽວໃນຊີວິດ, ດັ່ງນັ້ນ ເຂົາຈຶ່ງພັບຕາຍິບໆ ດ້ວຍຄວາມສັບສົນ ແລະ ຖາມປະທານວ່າ " ຂໍໂທດທ່ານ ແມ່ນຫຍັງນໍ້ ຊີວະປະຫວັດ? ຂະນ້ອຍບໍ່ໄດ້ເອົາຫຍັງມານໍາແທ້ໆ ມື້ນີ້. "

" ແມ່ນຈັ່ງໃດຫວະ ? ເຈົ້າບໍ່ຮູ້ຈັກວ່າ ຊີວະປະຫວັດແມ່ນຫຍັງຊັ້ນບໍ ? ເອີ, ຂ້ອຍຄິດເອົາວ່າເຈົ້າເວົ້າຫຼິ້ນຊື່ໆ . . . " ປະທານບໍລິສັດມືນຕາອອກກວ້າງໆ ແລະ ຈ້ອງເບິ່ງ ກົງກິຈິ ທັງໃຊ້ລີ້ນປິ່ນຢາກອກໃຫຍ່ໄປມາຢູ່ໃນປາກຕະຫຼອດເວລາ.

" ບໍ່, ທ່ານ, ບໍ່ແມ່ນເວົ້າຫຼິ້ນ " ກົງກິຈິວ່າ " ຂະນ້ອຍບໍ່ຮູ້ອີ່ຫຼີສິ່ງທີ່ທ່ານເອີ້ນວ່າ ຊີວະປະຫວັດຫັ້ນນະ, ແຕ່ມັນຈໍາເປັນເອົາແທ້ເອົາວ່າບໍ ທີ່ຈະຕ້ອງມີມັນເພື່ອຈະເປັນນັກທຸລະກິດ ? "



ປະທານບໍລິສັດຈ້ອງເບິ່ງ ກິງກິຈິ ດ້ວຍສາຍຕາແຫຼມຄົມ ປານວ່າຈະສຽບແທງຮ່າງຄີງກິງກິຈິໃຫ້ຊອດເປັນຮູແລ້ວເວົ້າຫົ້ວໃສ່ວ່າ " ບະ ! ເວີ້ຍ, ຄົນບໍ່ຮູ້ຈັກອີ່ຫຼີ... ຄືຈັ່ງຊີ້ ຊີວະປະຫວັດແມ່ນແຜ່ນເຈ້ຍທີ່ເຈົ້າຂຽນບອກວ່າ ໃຜເປັນພໍ່ແມ່ຂອງເຈົ້າ, ເຈົ້າເກີດຢູ່ໃສ, ເກີດປີໃດ, ເຈົ້າເຄີຍເຂົ້າໂຮງຮຽນປະເພດໃດ ແລະ ເຄີຍເຮັດວຽກຫຍັງແດ່ ມາຮອດດຽວນີ້. ຈັ່ງຊັ້ນຕວ່າ ! ໃຜຊິຮັບເອົາຄົນຜູ້ທີ່ບໍ່ຮູ້ວ່າ ຊີວະປະຫວັດແມ່ນຫຍັງ ເຂົ້າມາເຮັດວຽກໃນບໍລິສັດ ! ບໍລິສັດຂອງຂ້ອຍບໍ່ຈັກຊິໃຊ້ເຈົ້າເຮັດຫຍັງໄດ້. ໄປສາ ! ອອກໄປ, ບໍ່ສຳພາດຫຍັງດອກ ! "

" ເສັດຄັກ ! " ກິງກິຈິຄິດຢູ່ໃນໃຈ " ເຖິງແມ່ນວ່າ ຂ້ອຍເລົ່າອະດີດຜ່ານມາໃຫ້ເຂົາຮູ້... ເຊັ່ນວ່າໃນຊີວິດຢູ່ເທິງພູ ແລະ ໄລ່ກັດກະຕ່າຍ ແລ້ວກໍ່... ບາງເທື່ອກໍ່ຫຼອຍໄປລັກກັດໄກ່ຢູ່ໃນບ້ານ, ແລະ ທີ່ຄັກແທ້ແມ່ນອນກໍ່ຄືວ່າ ຂ້ອຍບໍ່ເຄີຍເຂົ້າໂຮງຮຽນເລີຍ."

ປະທານນັ່ງເບິ່ງກິງກິຈິ ທີ່ມີທ່າທີອຶດອັດໃຈ ແລ້ວກໍ່ເວົ້າຫົ້ວໃສ່ອີກວ່າ " ຂ້ອຍວ່າແລ້ວ, ເຈົ້າຕ້ອງເປັນບັກໂບໂຊ ຜູ້ບໍ່ມີຊື່ສຽງ. ຢ່າງໜ້ອຍກໍ່ຕ້ອງບອກຊື່ຕົນເອງເວລາເຂົ້າມາໃນຫ້ອງ ! ເຈົ້າມີສະຕິປົກກະຕິທຳມະດາຢູ່ບໍ ?"

ກິງກິຈິ ຮູ້ສຶກສັບສົນວຸ່ນວາຍໃນໃຈ ແລະ ເວົ້າກະຕຸກກະຕັກວ່າ "ເອີ ອາ ຄືວ່າຊື່ຂະນ້ອຍບໍ່ແມ່ນໂບໂຊ, ແມ່ນກິງກິຈິ ຂະນ້ອຍຢູ່ເທິງພູພຸ້ນເຮືອນຂະນ້ອຍຢູ່ໂນນພູ, ເຮືອນໂນນພູ, ຂະນ້ອຍຊື່ວ່າ ກິງກິຈິເນົາໂນນພູ". ກິງກິຈິເວົ້າສິ່ງທຳອິດທີ່ເຂົາຄິດອອກ ແລະ ຮູ້ສຶກພໍໃຈທີ່ໄດ້

ເວົ້າອອກໄປແນວນັ້ນ.

"ເອີ ແລ້ວກໍ່ບ່ອນຢູ່ຂະນ້ອຍນັ້ນ ແມ່ນ...ຢູ່ ຢູ່ເທິງພູ, ຢູ່ຮູ ຕາມເຊີ້ນພູ, ຢູ່ບ່ອນນັ້ນລະ, ແມ່ນລະ ເບັ້ນເມືອງຈອມພູ, ຖະໜົນລຽບພູ, ຂະນ້ອຍຢູ່ຫັ້ນລະ."

ເມື່ອໄດ້ຍິນດັ່ງນີ້ ປະທານເຮັດຄິ້ວຫຍຸ້ງ ແລະ ເວົ້າວ່າ "ມາຊື່ແປກແທ້! ແລ້ວກໍ່ຢູ່ເມືອງຈອມພູ, ຖະໜົນລຽບພູ... ຂ້ອຍບໍ່ເຄີຍໄດ້ຍິນຈັ່ງຊີ້ມາກ່ອນເລີຍ..." ແລ້ວເຂົາກໍ່ເບິ່ງໜ້າອັນມີແວວກັງວົນ ຂອງ ກົງກິຈິ. "ຊັ້ນກໍ່ອາດເປັ່ນໄປໄດ້ວ່າ ເຈົ້າເປັ່ນຜີໝາຈອກ ຈາກເທິງພູພຸ້ນ!" ເວົ້າຈັ່ງຊັ້ນແລ້ວ ເຂົາກໍ່ຫົວຂຶ້ນດັງໆ.

ຫົວໃຈຂອງກົງກິຈິເຕັ້ນຕຸບໆ ປານວ່າຊິຫຼຸດອອກມາທາງປາກ ເຂົາຄິດວ່າ: "ສິ້ນສຸດກັນບາດນີ້ລະ! ເພິ່ນຮູ້ຈັກອີ່ຫຼີຫວະນີ້?" ແລະ ຂະນະທີ່ຍຶດເຫື່ອເຢັ່ນໆ ອອກເຕັມທົ່ວຮ່າງຄົງມະນຸດ ອັນເປັ່ນຮ່າງຄົງໃໝ່ຂອງເຂົາ ກົງກິຈິກໍ່ຕອບໄປວ່າ " ບໍ່ແມ່ນສັດເດຍລະສານຢ່າງໝາຈອກເລີຍ. ເປັ່ນຫຍັງ, ເບິ່ງແມ້! ແມ່ນແຕ່ຫາງກໍ່ບໍ່ມີ, ຂະນ້ອຍເປັ່ນຄົນທີ່ໜ້ານັບຖື ເປັ່ນຄົນອີ່ຫຼີ!"

ປະທານຫົວສຽງດັງ ແຮງຂຶ້ນແຮງຂຶ້ນ: "ຮະຮະຮາ... ຈັ່ງແມ່ນເປັ່ນຕາຫົວ ເປັ່ນຕາຫົວເວີ້ຍ! ແນວໃດກໍ່ຕາມ, ປາກເຈົ້າມີອັນໃດອັນໜຶ່ງ

ທີ່ເຮັດໃຫ້ຂ້ອຍຄິດເຫັນໝາຈອກ ແລະ ຂ້ອຍອໍາໄວ້ບໍ່ໄດ້ທີ່ຈະບໍ່ເວົ້າເລື່ອງນີ້. ຮູ້ຕວ່າວ່າໝາຈອກເປັນໆ ແທ້ໆ ນັ້ນ ໜ້ອຍໜັກໜ້ອຍໜາ ທີ່ຈະຢຽບຢ່າງເຂົ້າມາສໍານັກງານຂອງຂ້ອຍ. ເສຍໃຈເດີ ຖ້າຂ້ອຍເວົ້າຕໍາໃຈເຈົ້າ. " ປະກົດວ່າປະທານບໍລິສັດມີອາລົມດີຂຶ້ນໃນຕອນນີ້.

"ເອົາລະ ບາດນີ້ ເມື່ອເຈົ້າບໍ່ມີໃບຊີວະປະຫວັດ ເປັນຫຍັງຈຶ່ງບໍ່ບອກຂ້ອຍ ຈຸດທີ່ສໍາຄັນໆ ໂລດ. ເຈົ້າຮຽນສໍາເລັດຈາກໂຮງຮຽນໃດບໍ່ ? "

" ໂຮງຮຽນ ? " ກົງກິຈິພົບບັນຫາອີກ. ເຂົາບໍ່ເຄີຍຮຽນສໍາເລັດຈາກໂຮງຮຽນໃດເລີຍ. ຄວາມຈິງແລ້ວ ບໍ່ມີໝາຈອກຕົວໜຶ່ງ ຕົວໃດໃນໂລກນີ້ ທີ່ໄດ້ຜ່ານໂຮງຮຽນເລີຍ, ແຕ່ໂດຍຄິດວ່າ ບໍ່ມີຜູ້ໃດຈະເຂົ້າເຮັດວຽກ ໃນບໍລິສັດນີ້ໄດ້ ເມື່ອຜູ້ນັ້ນບໍ່ໄດ້ສໍາເລັດຈາກໂຮງຮຽນ ກົງກິຈິຈຶ່ງພ້າວເວົ້າຂຶ້ນວ່າ " ຂະ. . . ຂະນ້ອຍຮຽນສໍາເລັດໝົດທຸກໂຮງຮຽນ, ແຕ່ໂຮງຮຽນປະຖົມຈົນຮອດມະຫາວິທະຍາໄລ ທັງໝົດເລີຍ. . . ກຶງ ! "

" ເອີ ຈັ່ງຊັ້ນຫວະ ? ອັນໂຮງຮຽນນີ້ມັນກໍ່ມີທຸກປະເພດນີ້, ຊັ້ນເຈົ້າສໍາເລັດຈາກມະຫາວິທະຍາໄລໃດ?"

" ຄືວ່າ. . . ເອີ. . . ມະຫາວິທະຍາໄລອຸດທິຍານສັດແຫ່ງຊາດ " ກົງກິຈິ ຄິດເຫັນອຸດທິຍານແຫ່ງຊາດຂຶ້ນມາທັນໃດ ຊຶ່ງບໍລິເວນມັນກວມເນື້ອທີ່ ດ້ານຫຼັງເດີ່ນຕີກອບ.

" ໂຫ ຄັກແລ້ວຊັ້ນ! ມະຫາວິທະຍາໄລແຫ່ງຊາດຊັ້ນຕິ ? " ປະ

ທານກັບມາສົນໃຈຢ່າງຈິງຈັງ " ຄັກລະ, ແມ່ນແທ້, ຄວາມຈິງແລ້ວ ຂ້ອຍເຄີຍຄິດຢູ່ສະເໝີວ່າ ຢາກໄດ້ຜູ້ທີ່ສຳເລັດຈາກ ມະຫາວິທະຍາໄລ ຜູ້ເກັ່ງໆ.ແນວໃດກໍ່ຕາມ ຖ້າເປັນມະຫາວິທະຍາໄລແຫ່ງຊາດ ຈະເປັນອຸທິຍານປ່າ ຫຼື ອຸດທິຍານສັດ ບໍ່ເປັນບັນຫາ. ເມື່ອເຈົ້າເປັນຜູ້ສຳເລັດຈາກ ມະຫາວິທະຍາໄລແຫ່ງຊາດແລ້ວ ຈັ່ງໃດຂ້ອຍກໍ່ຢາກໃຫ້ເຈົ້າເລີ່ມຕົ້ນເຮັດວຽກ ໃນບໍລິສັດຂອງຂ້ອຍໂລດ! "

ກິງກິຈິດີໃຈເອົາແທ້ເອົາວ່າ, ໂດຍບໍ່ຄິດໜ້າຄິດຫຼັງເຂົາເກືອບຫຼົງຮ້ອງ " ກຶງ " ດັງໆ ແລະ ເກືອບຈະເຕັ້ນລຳຈັງຫວະໝາຈອກ.

" ແຕ່ ເອີ... ທ່ານເນົາໂນນພູ ຂ້ອຍວ່າ..." ປະທານເວົ້າດອດຂຶ້ນ ຂັດຈັງຫວະຄວາມມ່ວນຊື່ນຂອງກິງກິຈິ ດ້ວຍທ່າທາງເອົາການເອົາງານ " ເຈົ້າມີຄວາມຊຳນານພິເສດບາງຢ່າງບໍ່? ເຖິງແມ່ນວ່າ ພວກເຮົາທັງໝົດເປັນຄົນ ແຕ່ມັນກໍ່ຍັງມີຄວາມແຕກຕ່າງກັນຫຼາຍ ລະຫວ່າງຄົນຜູ້ຊຳນານກັບຄົນຜູ້ບໍ່ຊຳນານ ! "

ກິງກິຈິ ຕື່ນຍຸບອີກ, ແຕ່ເຂົາຫາຍໃຈເລິກໆ ແລ້ວເລີ່ມກ່າວວ່າ " ເອີ...ກໍ່ມີຢູ່, ຄືຢ່າງພວກ... ກະຕ່າຍ, ໝູນາ ໄກ່ ເຫຼົ່ານີ້ຂະນ້ອຍໄລ່ຈັບ... ເອີຂະນ້ອຍໝາຍຄວາມວ່າ ຂະນ້ອຍລ້ຽງກະຕ່າຍ ໝູແລະໄກ່ ຂະນ້ອຍເປັນຜູ້ອຳນວຍການສວນສັດທີ່ຊ່ຳນິຊຳນານ ".

ຕອນນີ້ ແມ່ນຝ່າຍປະທານເປັນຜູ້ມີຄວາມເບີກບານມ່ວນຊື່ນ.

" ໂອ ໂອ ຈັ່ງຊັ້ນຫວະ? ແມ່ນໃດບໍ, ປະກົດວ່າ ຍິ່ງເບິ່ງເຈົ້າ

ເທົ່າໃດ ກໍ່ຍິ່ງເຫັນເປັນຄົນເໝາະສົມກັບບໍລິສັດຂ້ອຍ, ທ່ານເນົາໂບນພູ ຂ້ອຍນີ້ຕັ້ງວ່າຊອກຫາພະນັກງານ ຜູ້ຮູ້ຈັກເລື່ອງລາວ ກ່ຽວກັບສັດດີ ມາຕັ້ງແຕ່ໃດ, ແລ້ວເຈົ້າກໍ່ຍ່າງໂປໂລເຂົ້າມາຍັງບໍລິສັດຂ້ອຍ. ແນວໃດກໍ່ຕາມ, ຮູ້ຕວ່າວ່າ ພວກເຮົາເປັນບໍລິສັດຂາຍຂົນສັດ ທີ່ໃຫຍ່ທີ່ສຸດໃນປະເທດນີ້. ເອົາຈັ່ງຊີ້ນໍ ທ່ານເນົາໂບນພູ, ເປັນອັນວ່າຕົກລົງ ຂ້ອຍຢາກໃຫ້ເຈົ້າເລີ່ມເຮັດວຽກນຳຢູ່ທີ່ນີ້ ມື້ອື່ນເລີຍໂລດ."

ປະທານຮ່າງຕຸ້ຍ ພະຍາຍາມໂຍ້ລຸກຂຶ້ນ ແລະ ເມື່ອຍືນໄດ້ແລ້ວເຂົາກໍ່ຕົບບາໄຫຼ່ ກິງກິຈິດ້ວຍຄວາມຊື່ນຊົມຍິນດີ.

ບໍລິສັດຂົນສັດ - ເມື່ອໄດ້ຍິນຄຳສັບເຫຼົ່ານີ້ແລ້ວ ກິງກິຈິຮູ້ສຶກເຈັບແປັບໆ ເລິກໆ ຢູ່ໃນອົກທັນໃດ ອັນເນື່ອງມາຈາກເຫດຜົນບາງຢ່າງທີ່ບໍ່ອາດເຜີຍໄດ້.

ກິງກິຈິ ອອກຈາກອາຄານບໍລິສັດ ຍ່າງເລາະໄປຕາມຖະໜົນໃນຕົວເມືອງ, ເຂົາຄຶດວົນວຽນໄປມາກ່ຽວກັບບໍລິສັດຂົນສັດ. ແນວໃດກໍ່ຕາມ ເກືອບວ່າບໍ່ຖືເປັນບັນຫາເລີຍ ຈະເປັນບໍລິສັດອີຫຍັງກໍ່ຕາມ ທີ່ເຂົາຈະເຮັດວຽກນຳ, ສິ່ງທີ່ສຳຄັນແມ່ນເຂົາຄື ກິງກິຈິຜູ້ນີ້ມີວຽກເຮັດງານທຳ. ເປັນອັນວ່າໃນທີ່ສຸດ ເຂົາກາຍເປັນນັກທຸລະກິດ.

ເມື່ອເປັນນັກທຸລະກິດແລ້ວ ບັດນີ້ກໍ່ບໍ່ຕ້ອງຢູ່ອາໄສໃນຮູມົດໆ ອີກຕໍ່ໄປ, ບໍ່ຮ້ອນບໍ່ເຄືອງ ຖ້າຝົນຕົກ, ບໍ່ອຶດບໍ່ຫິວຕິດຕໍ່ກັນຫຼາຍວັນຖ້າໄລ່ກະຕ່າຍບໍ່ໄດ້ ຫຼື ລັກກັດໄກ່ບໍ່ໄດ້. ມາບັດນີ້ ເຂົາສາມາດຮັບເງິນເດືອນ

ຈາກແຮງງານ ແລ້ວກໍ່ໄປຊື້ໄກ່ ແລະ ຊີ້ນກະຕ່າຍຫຼາຍໆ ແລ້ວກໍ່ເອົາໃສ່ຕູ້ເຢັນ ຫຼື ຕູ້ນ້ຳກ້ອນໄວ້, ເມື່ອຢາກກິນຍາມໃດ ເຂົາກໍ່ຈະກິນຍາມນັ້ນ.

" ກົ໊ງ ! ກົ໊ງ ! ກົ໊ງ ! " ເມື່ອກັບຄືນ ຮອດຫ້ອງພັກແຫ່ງໃໝ່ແລ້ວ ກົງກິຈິກໍ່ແຫງນໜ້າແຫຼມໆ ໄປຍັງເພດານ ແລະ ຮ້ອງດັງໆ ຢ່າງມີຄວາມສຸກ ທັງພັບຕາຍິບໆ ດ້ວຍຄວາມຊື່ນອົກຊື່ນໃຈ.

ຄືນນັ້ນ ກົງກິຈິ ນອນຫຼັບທ່າມກາງ ບັນຍາກາດ ສົດຊື່ນແຈ່ມໃສ, ຫົວຂອງເຂົາເຕັມໄປດ້ວຍລາງຜັນທີ່ກ່ຽວກັບໂນນພູ.

ຊີວິດຂອງກົງກິຈິໃນຖານະນັກທຸລະກິດ ເລີ່ມຕົ້ນໃນມື້ຕໍ່ມາ. ໜ້າທີ່ທຳອິດຂອງເຂົາຄືຢູ່ພະແນກຂາຍ ບ່ອນທີ່ເຂົານັບເງິນ ຊຶ່ງໄດ້ມາຈາກການຂາຍຊີ້ນສັດ. ແນ່ນອນ, ທຳອິດເຂົາຕ້ອງຮຽນຮູ້ທຸກສິ່ງທຸກຢ່າງຈາກເພື່ອນຮ່ວມງານ, ແຕ່ກົງກິຈິກໍ່ຮຽນຮູ້ ເລື່ອງທັງໝົດກ່ຽວກັບວຽກງານໄດ້ໄວ. ປະກົດວ່າເຂົາຢູ່ໃນອາການງຽບຂຶມ ໃນເວລາທຳງານ, ຄວາມຈິງແລ້ວ ເຂົາມີຄວາມສຸກທີ່ໄດ້ເຮັດວຽກໃນຖານະນັກທຸລະກິດ, ແລະ ບໍ່ດົນເຂົາກໍ່ເປັນທີ່ຮູ້ຈັກກັນວ່າ ເປັນຜູ້ເຂັ້ມແຂງອົດທົນທີ່ສຸດໃນບໍລິສັດ.

ເມື່ອສັງເກດເຫັນວ່າ ນັບແຕ່ກົງກິຈິມາເຮັດວຽກໃນບໍລິສັດ ພວກກຳມະກອນອື່ນໆ ຕ່າງກໍ່ມີນ້ຳໃຈບຸກໜ້າບືນຕົວ ແລະ ການຂາຍກໍ່ເພີ່ມຂຶ້ນເລື້ອງໆ ປະທານຈຶ່ງພໍອົກພໍໃຈຢ່າງໃຫຍ່ຫຼວງ ຈົນຮອດວ່າເລີ່ມຈ່າຍເງິນເດືອນໃຫ້ກົງກິຈິສູງຂຶ້ນ.

ກົງກິຈິເອງເປັນຄົນທີ່ມີຄວາມສຸກສົດຊື່ນ, ເມື່ອຮອດທ້າຍອາທິດເຂົາກໍ່ອອກໄປທີ່ເດີ່ນຕີກັອບ ຕາມທີ່ເຂົາເຄີຍປາຖະໜາມາກ່ອນ. ແທ້ຈິງນັ້ນ, ພາຍຫຼັງທີ່ເຂົາທົດລອງຕີກັອບມາແລ້ວ ເຂົາກໍ່ບໍ່ເຫັນວ່າມັນຊິມ່ວນປານໃດ, ຫາກແຕ່... ມັນເປັນເລື່ອງສຳຄັນ ສຳລັບອະດີດໝາຈອກທີ່ມີຄົນອີກຜູ້ໜຶ່ງຫິ້ວຖົງຕີກັອບໃຫ້ ໂດຍເລາະອ້ອມເດີ່ນຕີກັອບອັນກວ້າງໃຫຍ່ ໃນຂະນະທີ່ເຂົາເອງຕີລູກກັອບນ້ອຍໆ ຂາວໆ ດ້ວຍຄວາມພາກພູມໃຈ.

ເດີ່ນຕີກັອບແຫ່ງນີ້ ຢູ່ໂນນພູ ເປັນບ່ອນທີ່ ກົງກິຈິ ໄດ້ຖືກຳເນີດບ່ອນທີ່ໝາຈອກກົງກິຈິ ເຄີຍລີ້ຢູ່ຕາມພຸ່ມຫຍ້າສູງໆ ຂະນະຈອບເບິ່ງຜູ້ຄົນ ແລະ ເມື່ອເຂົາຕີກັອບຢູ່ແຫ່ງນີ້ ເຂົາກໍ່ເກືອບວ່າອົດບໍ່ໄດ້ທີ່ຈະຮ້ອງອອກມາດ້ວຍຄວາມດີໃຈວ່າ " ກົ໊ງ , ກົ໊ງ !" ຫຼື ຫຼິ້ງເຕັ້ນຕາມແບບໝາຈອກ.

ປະທານນັກຍ້ອງຍໍ ກົງກິຈິ ຕໍ່ໜ້າເພື່ອນຮ່ວມງານເລື້ອຍໆວ່າ " ເວົ້າແທ້, ເຈົ້າເປັນສິ່ງເອກອ້າງທະນົງໃຈຂອງບໍລິສັດຂ້ອຍ. ພະນັກງານໝົດທຸກຄົນຈົ່ງເບິ່ງນີ້ ເນົາໂນນພູເປັນຕົວຢ່າງທີ່ດີທີ່ຄວນປະຕິບັດຕາມ. ຈົ່ງເບິ່ງລາວເຮັດ ແລະ ຮຽນນຳລາວ ".

ເມື່ອເລື່ອງດຳເນີນຕໍ່ໄປແນວນີ້ ກົງກິຈິຕັດສິນໃຈ ເຮັດວຽກໜັກຂຶ້ນຕື່ມອີກ. ເຂົາເຮັດວຽກເກືອບວ່າປານເຂົາມີຖ່ານໄຟຮ້ອນໆ ຢູ່ໃນຖົງ, ຫຼາຍວັນຜ່ານໄປເປັນອາທິດ ແລະ ເປັນເດືອນ, ແລະ ໃບໜ້າເຂົາສະແດງອອກວ່າເຂົາມີຄວາມສຸກ ກັບຊີວິດໃນຖານະເປັນນັກທຸລະກິດ.

ແຕ່ກົງກິຈິບໍ່ລືມເຮືອນຮັງຂອງຕົນທີ່ຢູ່ໃນພູຈັກເທື່ອ. ທຸກໆ ເດືອນ ທັນທີ ທີ່ໄດ້ຮັບເງິນເດືອນ ເຂົາມັກຈະໄປຊື້ກະຕ່າຍເປັນໆ ແລະ ໄກ່ເປັນໆ ເອົາໄປຕ້ອນແມ່ທີ່ຢູ່ເປີ້ນພູ ໃກ້ໆ ກັບເດີ່ນຕີກອບນັ້ນ.

ທຸກຄັ້ງ ເມື່ອເຂົາໄປຮອດເຮືອນຮັງໃນອະດີດທີ່ເປັນເດັກນ້ອຍ ແມ່ເຂົາຈະຕ້ອນຮັບຢ່າງອົບອຸ່ນ ແຕ່ກໍມີແວວໂສກເສົ້າເລິກໆ ຢູ່ໃນດວງຕາສະເໝີໆ.



" ກີ໊ງ ກີ໊ງ ! ກິງກິຈິລູກຮັກ, ແມ່ຂອບໃຈທີ່ລູກເອົາແນວດີໆ ມາໃຫ້, ແຕ່ມັນບໍ່ຈຳເປັນທີ່ຈະເອົາມາອີກຕື່ມ. ເວົ້າທົ່ວໄປແລ້ວ ດຽວນີ້ລູກເປັນມະນຸດຜູ້ສະຫງ່າງາມ - ກີ໊ງ - ແລະ ເພື່ອໃຫ້ເປັນມະນຸດຢ່າງຄົບຖ້ວນສົມບູນ ລູກຕ້ອງພະຍາຍາມລືມທຸກສິ່ງທຸກຢ່າງກ່ຽວກັບອະດີດທີ່ເປັນໝາຈອກ, ມັນແມ່ນເພື່ອຄວາມສຸກຂອງລູກເອງ. ຈະເປັນແນວໃດກໍ່ຕາມແມ່ເອງສາມາດດຳເນີນຊີວິດໄປໄດ້ - ກີ໊ງ ".

ກິງກິຈິ ເຂົ້າໃຈຄວາມຮູ້ສຶກຂອງແມ່ດີ ແຕ່ບໍ່ຮູ້ຈັກຈະເວົ້າແນວໃດທັງນີ້ເພາະເຂົາຮູ້ແຈ້ງວ່າ ຕົນເອງລືມວິທີປາກເວົ້າພາສາໝາຈອກໄປເກືອເລັກເກືອໜ້ອຍແລ້ວ. ເຂົາເອົາແຕ່ເບິ່ງໜ້າແມ່ ແລະ ຍິ້ມຢ່າງສົດຊື່ນດີໃຈ ແລ້ວກໍ່ລົງຈາກໂນນພູກັບຄືນໃນເມືອງ. ເມື່ອຮອດວັນຈ່າຍເງິນເດືອນຄັ້ງຕໍ່ໄປ, ເປັນທີ່ແນ່ນອນສົມຄວນລະວ່າ ຈະເຫັນກິງກິຈິປີນຂຶ້ນເນີນພູ ໂດຍຫອບເອົາກະຕ່າຍ ແລະ ໄກ່ໄປຕ້ອນແມ່.

ຫຼາຍເດືອນຜ່ານໄປ, ຈາກລະດູບານໃໝ່ ເປັນລະດູຮ້ອນ, ແລະ ຈາກລະດູຮ້ອນ ເປັນລະດູໃບໄມ້ຫຼົ່ນ. ກິງກິຈິສືບຕໍ່ເຮັດວຽກໃນໜ້າທີ່ການງານຢ່າງເຂັ້ມແຂງ, ແລ້ວວັນໜຶ່ງໃນເດືອນພະຈິກ ຂະນະທີ່ລະດູໜາວຫຍັບໃກ້ເຂົ້າມາ ເຂົາກໍ່ສັງເກດເຫັນວ່າ ເສື້ອໜາວຂົນສັດສຳລັບຂາຍຍັງເຫຼືອຢູ່ໃນຮ້ານພຽງໜ້ອຍດຽວ.

" ເອະ ! ຈັ່ງຊີ້ບໍ່ເປັນຕາ " ກິງກິຈິ ເວົ້າກັບຕົນເອງ, ນ້ຳສຽງປານວ່າ ເປັນປະທານບໍລິສັດເອງ " ຍ້ອນເຂົ້າລະດູໜາວ ພວກເຮົາຄວນຂາຍເສື້ອຂົນສັດໃຫ້ໄດ້ຫຼາຍໆ " ເວົ້າແລ້ວເຂົາກໍ່ກົງໄປຍັງສາງມ້ຽນເຄື່ອງ.

ຈົນມາຮອດດຽວນີ້ ກິງກິຈີບໍ່ເຄີຍໄປທີ່ສາງມັງນເຄື່ອງເລີຍ ແມ່ນແຕ່ຄັ້ງດຽວ ທັງນີ້ເພາະເຂົາມົວແຕ່ຫຍຸ້ງຢູ່ກັບການຄິດໄລ່ ລາຍການຂາຍ ແລະ ຂຽນຕົວເລກລົງໃນເຈ້ຍ.

ພໍແຕ່ກິງກິຈີໄຂປະຕູສາງ ທັນໃດເຂົາກໍ່ແຜດສຽງຮ້ອງອອກດ້ວຍຄວາມເຈັບແຄ້ນແໜ້ນໃຈ. ໃນສາງມີຄາບໜັງສັດຫ້ອຍຫົວລົງເປັນຊາບລາບຕັ້ງຫຼວງຫຼາຍ - ມີກະຮອກ, ກະຕ່າຍ, ເສືອແມວ, ເຫງັນ, ເສືອດາວ, ໝີ... ຫຼາຍໂພດຈົນນັບບໍ່ຖ້ວນ, ທັງໝົດປານວ່າຖືກບີ່ດອອກຈາກຕົວສັດ. ຂະນະທີ່ກິງກິຈີ ກ້າວເຂົ້າໄປຍ່າງຊ້າໆ ນັ້ນ ປະກົດຄືວ່າດວງຕາທີ່ປາສະຈາກແວວເຫຼົ່ານັ້ນ ຈ້ອງເບິ່ງເຂົາກິງໆ.

" ໂທ ! ມັນແມ່ນ... ໂອຍຟ້າເອີຍ! ເຕັມແຕ່ຂົນສັດ, ບໍລິສັດນີ້ມີຄາບໜັງສັດ ຫຼາຍພິລຶກແທ້... ແຕ່ໂອ ຈົ່ງແມ່ນໜ້າສົງສານ, ພວກເຫງັນ, ເສືອແມວທັງໝົດເຫຼົ່ານີ້ ກໍ່ຄືຈຳພວກທີ່ຂ້ອຍເຄີຍຮູ້ມາແລ້ວແມ່ນຖືກຄົນຂ້າແລ້ວລອກໜັງອອກ... ຈົ່ງແມ່ນໂຊກຮ້າຍອີ່ຫຼີ. ເອີ... ບໍ ຊ່ອຍຫຍັງບໍ່ໄດ້, ມີທາງອື່ນໃດລະ ທີ່ບໍລິສັດຂອງເຮົາສາມາດຂາຍເສື້ອຂົນສັດໃຫ້ໄດ້ຫຼາຍຂຶ້ນເລື້ອຍໆ ? ແມ່ນລະ, ນັ້ນມັນອັບບີ່ແທ້ໆ... ເວີ້ຍ ?! "

ກິງກິຈີ ເຕັ້ນດ່ອງເລີຍ ເມື່ອສາຍຕາໄປພົບສິ່ງໜຶ່ງ. ຢູ່ດ້ານໃນຂອງສາງ ມີຄາບໜັງໝາຈອກຫ້ອຍຫົວລົງ ລຽນກັນຖີ່ໆ. ມີຈຳນວນໜຶ່ງຫ້ອຍຕ້ອນແຕ້ນ ທັງຫຼັບຕາຄືວ່າເຈັບປວດ, ສ່ວນອີກຈຳນວນໜຶ່ງຊ້າ





ພັດມືນຕາເຄົ່າໜຶ່ງໄວ້ ແລະ ຈ້ອງເບິ່ງຢ່າງເສີຍເມີຍ ໂດຍບໍ່ມີຈຸດໝາຍ, ມີກະທັ້ງໃບໜ້າຈຳນວນໜຶ່ງ ທີ່ເຮັດໃຫ້ກິງກິຈິຄິດເຫັນອ້າຍນ້ອງ ແລະ ພວກໝູ່ເພື່ອນທັງຫຼາຍ.

ກິງກິຈິຢືນຢູ່ບໍ່ເໜັງບໍ່ຕີງ ຍົກເວັ້ນຂາຂອງເຂົາສັ່ນ ແລະ ແຂ້ວກະທົບກັນດັງກັ່ບໆ ຍ້ອນຄວາມສະທຍົດສະທຍອງ. ບໍ່ດົນ ນ້ຳຕາກໍ່ໄຫຼຈາກຫົວໃຈຂອງເຂົາອອກມາທີ່ຕາ ແລ້ວຍ້ອຍລົງອາບແກ້ມ.

" ອະນິດຈາ... ເພື່ອນຂ້ອຍຈຳນວນຫຼວງຫຼາຍຖືກຂ້າ... ຖືກລອກໜັງອອກ... ຖືກນຳໄປຂາຍ... ຂ້ອຍບໍ່ຄິດມາກ່ອນເລີຍວ່າເລື່ອງທຳນອງນີ້ດຳເນີນຢູ່ຕໍ່ມາ... "

ບໍ່ດົນ ກົງກິຈິທີ່ບັດນີ້ຕາສີແດງໆ ກໍ່ຍ່າງເນີບນາບຍ່າງອ່ອນອົກອ່ອນໃຈອອກຈາກສາງມ້ຽນເຄື່ອງ. ດວງຕາເວັນຍາມຄ້ອຍຄ່ຳລອຍຕ່ຳລົງລັບອາຄານຂະໜາດໃຫຍ່ຂອງບໍລິສັດ, ແຕ່ມື້ນີ້ ກົງກິຈິບໍ່ເອົາຈິດໃສ່ໃຈຊາກັບຄວາມງົດງາມຂອງຕາເວັນພວມຕົກດິນນັ້ນເລີຍ.

ຄືນນັ້ນ ກົງກິຈິ ນອນບໍ່ຫຼັບລົງໄດ້. ທັນທີ ທີ່ເຂົາຫຼັບຕາລົງເພື່ອຈະເຊືອບ ຈັກໜ່ອຍ ກໍ່ປະກົດມີໃບໜ້າຂອງໝາຈອກຕາຍ ທີ່ຄ້າຍຄືກັບເພື່ອນເກົ່າທັງຫຼາຍ ມາລອຍວົນວຽນຢູ່ຕໍ່ໜ້າຕໍ່ຕາເຂົາ, ຫຼືບໍ່ ກໍ່ຝັນວ່າມີໝາພານຫຼາຍໂຕໄລ່ຕິດຕາມເຂົາມາ. ແລ້ວເຂົາກໍ່ລຸກຂຶ້ນນັ່ງບຸ່ບບັ່ບກັບເທິງຕຽງ, ເຮັດຕາເຫຼືອກໂລ້ ແລະ ຕົນໂຕປຽກຊຸ່ມໄປດ້ວຍເຫື່ອເຍັ້ນໆ " ຂ້ອຍເປັນຄົນ, ບໍ່ມີຫຍັງຊິກ່ຽວກັບຂ້ອຍ " ເຂົາຈົ່ມແລ້ວຈົ່ມອີກຢູ່ຜູ້ດຽວ, ແຕ່ເຂົາຫຼັບບໍ່ໄດ້ຈັກງີບເລີຍ ຄືນນັ້ນ.

ເມື່ອເຂົ້າທຳງານຕອນເຊົ້າມື້ຕໍ່ມາ ກົງກິຈິຖືກເອີ້ນໄປທີ່ຫ້ອງການຂອງປະທານ. ປະທານຖາມສະບາຍດ້ວຍໃບໜ້າຍິ້ມແຍ້ມ ແຕ່ເວົ້າດ້ວຍນ້ຳສຽງເຄັ່ງຂຶມ.

" ເນົາໂນນພູເອີຍ ... ນີ້ນະ, ເຈົ້າເຮັດວຽກໄດ້ດີສະເໝີມາ, ເຈົ້າເປັນພະນັກງານຕົວຢ່າງໃນບໍລິສັດຂ້ອຍ ຢ່າງແທ້ຈິງ. ຂ້ອຍດີອົກດີໃຈຫຼາຍທີ່ເຈົ້າຢູ່ນຳ ແນວໃດກໍ່ຕາມ ມາດຽວນີ້ພວກເຮົາມີບັນຫາແດ່ເລັກນ້ອຍ. ດີເຈົ້າຮູ້ແລ້ວ ພວກເຮົາພວມຂາດເຂີນຊີນສັດ ແລະລະດູໜາວຊໍ້າພັດຢ່າງເຂົ້າມາ. ພວກເຮົາຕ້ອງຫາຊີນສັດໃຫ້ໄດ້ຕື່ມອີກ, ຈັ່ງຊັ້ນແລ້ວ ແລະ ບັດນີ້ປະກົດວ່າເຈົ້າຮູ້ຈັກເລື່ອງສັດຫຼາຍແທ້ໆ, ດັ່ງນີ້ຂ້ອຍວ່າຊິດີກຫຼາຍ ຖ້າມື້ອື່ນເຈົ້າໄປຍັງໂນນພູ ແລະ ຈັບສັດຈຳນວນໜຶ່ງເພື່ອເອົາຊີນສັດຕື່ມອີກ. ຖ້າເຈົ້າເຮັດວຽກນີ້ສຳເລັດເປັນຢ່າງດີ ຂ້ອຍຕັ້ງໃຈ ຈະຂຶ້ນເງິນເດືອນໃຫ້ ແລະ ແຕ່ງຕັ້ງໃຫ້ເປັນຫົວໜ້າພະແນກວັດສະດຸເລີຍ ".

ເມື່ອກົງກິຈິ ໄດ້ຍິນຄຳເວົ້າເຊັ່ນ " ຂຶ້ນເງິນເດືອນ " ແລະ " ຫົວໜ້າ " ເຂົາກໍ່ລືມເລື່ອງອື່ນໆ ທັງໝົດ ແລະ ເລີ່ມສັ່ນບົ້ນໆ ດ້ວຍຄວາມຕື່ນເຕັ້ນ. " ທ່ານປະທານ, ຂະນ້ອຍຂໍຂອບໃຈ. ໄດ້, ມື້ອື່ນເຊົ້າຂະນ້ອຍຈະອອກໄປທີ່ໂນນພູ ເພື່ອຫາເອົາຊີນສັດມາຕື່ມ " ເຂົາຕອບ.

ພາຍຫຼັງທີ່ກົງກິຈິ ອອກຈາກຫ້ອງການຂອງປະທານແລ້ວ ເຂົາເວົ້າກັບຕົນເອງວ່າ " ເຫັນຕວ່າ, ມຶງເປັນຄົນຜູ້ໜຶ່ງແລ້ວ ມຶງຕ້ອງບໍ່ເຮັດຄືໝາຈອກ. ມຶງເປັນນັກທຸລະກິດໃນບໍລິສັດນີ້, ດັ່ງນັ້ນ ມຶງຕ້ອງເຮັດທຸກຢ່າງທີ່ຈຳເປັນ ເພື່ອຊ່ວຍໃຫ້ບໍລິສັດຂາຍເສື້ອຊີນສັດໄດ້ຫຼາຍ.

ລືມສະ ! ອັນທີ່ມຶງເຫັນມື້ວານນີ້. ເພື່ອໃຫ້ໄດ້ສັດ ກໍ່ຕ້ອງອອກໄປຍັງໂນນພູ ແລະ ກໍ່ບໍ່ມີຫຍັງທີ່ຈະໄປຮູ້ສຶກເສຍໃຈເລີຍ."

ເຊົ້າມື້ຕໍ່ມາ ນາຍພານກຸ່ມໃຫຍ່ ພາກັນອອກໄປຍັງໂນນພູ. ກິງກິຈິກໍ່ໄປນຳຄົນກຸ່ມນີ້ ແລະ ເຂົາເອງກໍ່ມີປືນຕິດມືເຊັ່ນກັນ. ມີໝາພານລ່າເນື້ອຫຼາຍໂຕ ຕິດຕາມຫຼັງນາຍພານເຫຼົ່ານີ້ ແລະ ບາງຄັ້ງບາງຄາວໝາພານບາງໂຕກໍ່ມາສືບດົມກົ່ນກິງກິຈິ ຄືຈັ່ງວ່າມັນຮູ້ຈັກວ່າ ກິງກິຈິ ເຄີຍເປັນໝາຈອກມາກ່ອນ, ແລ້ວກິງກິຈິເອງກໍ່ເຫື່ອແຕກດ້ວຍອາລົມອຶດອັດ. ເຂົາຟ້າວຍ່າງຂຶ້ນໜ້າໄປຫາພວກນາຍພານທີ່ຢູ່ແຖວໜ້າ ເພື່ອໃຫ້ຢູ່ໄກໆ ເທົ່າທີ່ຈະໄກໄດ້ຈາກໝາພານທີ່ມັກລົບກວນເຂົາ.

ມີສຽງປືນດັງຂຶ້ນໜຶ່ງນັດ ແລ້ວການໂຫ່ເນື້ອກໍ່ເລີ່ມຕົ້ນ. ຕາພວກໝາພານເປັນສີແດງເລືອດ ແລະ ພາກັນແລ່ນລີ້ວໄປສູ່ໂນນພູ ຢ່າງພິດສະນັ່ນ. ພວກນາຍພານເອົາລູກປືນເຂົ້າລຳກ້ອງ ແລະ ລີ້ຢູ່ພຸ່ມໄມ້ ກິງກິຈິໝອບລົງພື້ນ, ນິ້ວມືເກາະຢູ່ໄກປືນ, ເຂົາສັ່ນແດ່ຈັກໜ່ອຍ.

" ຫຼາຍຄັ້ງຫຼາຍຄາວ " ກິງກິຈິຄິດ " ແມ່ເຕືອນວ່າ ຈົ່ງລະວັງຕົວເພື່ອຫຼີກເວັ້ນພວກນາຍພານ, ແຕ່ບັດນີ້ຂ້ອຍເອງຈັບປືນ " ໂດຍບໍ່ຮູ້ວ່າເປັນຫຍັງເຂົາຍິ້ມດ້ວຍຄວາມຂົມຂື່ນ.

ສຽງໝາເຫົ່າດັງພິດສະນັ່ນ ເຂົ້າມາໃກ້ບ່ອນພວກນາຍພານຈອບຢູ່ນັ້ນເລື້ອຍໆ. " ເອົາເລີຍບັດນີ້ " ຄົນໜຶ່ງເວົ້າດ້ວຍນ້ຳສຽງຂຶງຂັງ ທັງ





ຍົກປືນຂຶ້ນຈ້າບ່າ. ແລ້ວເລື່ອງມັນກໍ່ເກີດຂຶ້ນຈົນໄດ້. ກົງກິຈິເຫັນພຸ່ມຫຍ້າເລົາຢູ່ຕໍ່ໜ້າສັ່ນ ແລະ ເນັ້ງ ແລະ ມີສິ່ງໃດສິ່ງໜຶ່ງແລ່ນກົງມາຊື່ບ່ອນເຂົາຈອບຢູ່, ແລ່ນຕິດຕາມສິ່ງນັ້ນມາຕິດໆ ແມ່ນໝາພານໂຕໜຶ່ງ, ຕາຂອງມັນມີແວວປ່າເຖື່ອນ ອັນເກີດຈາກຄວາມຕື່ນເຕັ້ນໃນການໄລ່ຄຸບເຫຍື່ອ. ສັດໂຕທີ່ແລ່ນໜີເພື່ອເອົາຊີວິດລອດເປັນໝາຈອກສີເງິນ ທີ່ມີຂົນອັນງົດງາມ.

"ປັດໂທ! ນັ້ນແມ່ນຂົນສັດຊັ້ນໜຶ່ງ ມີຄ່າໄລ່ເປັນເງິນຕັ້ງຫຼວງຫຼາຍ!" ໂດຍບໍ່ຄິດເລີຍວ່າຕົນເອງພວມເຮັດຫຍັງ ກົງກິຈິຍົກປືນຂຶ້ນແລ້ວກົດໄກປືນ.

ປັ້ງ !

ໝາຈອກສີເງິນເຕັ້ນສະເດີດ ຂຶ້ນກາງອາກາດ, ຂາໜ້າພັບງໍເຂົ້າ, ຮ້ອງສຽງດັງ "ກີ້ງ!" ບາດດຽວ ແລ້ວກໍ່ຕົກອາບຟາບລົງດິນ.

ປັ້ງ! ປັ້ງ! ປັ້ງ! ປັ້ງ! ສຽງປືນດັງກ້ອງສະນັ່ນໄປທົ່ວເປັນພູ, ສ່ວນໝາພານກໍ່ເຫົ່າຢ່າງບ້ວງບ້າ ເພື່ອໄລ່ສັດລົງໂນນພູໄປຫາພວກນາຍພານທີ່ຈອບຖ້າຢູ່. ແລ້ວໃນທັນໃດ ທຸກຢ່າງກໍ່ງຽບສະຫງົບລົງ.

ກົງກິຈິ ຍ່າງກ້າວຊ້າໆ ຂຶ້ນໄປຫາໝາຈອກສີເງິນທີ່ລົ້ມອາບຟາບຢູ່ ແລະ ເກືອບບໍ່ຫຼຽວເບິ່ງ ເຂົາຈັບຫາງແລ້ວຫິ້ວມັນໄປຍັງບ່ອນທີ່ພວກນາຍພານຍືນເປັນກຸ່ມກັນຢູ່. ໂດຍຮູ້ສຶກສະທ້ານໃຈຢ່າງໜຶ່ງ ຊຶ່ງເຂົາເອງບໍ່ສາມາດອະທິບາຍໄດ້ ກົງກິຈິຍ່າງຕົວແຂງກື້ທື້, ຕາຂອງເຂົາເປັນສີແດງຈ້ອງເບິ່ງໄປທາງໜ້າ ແລະ ໃບໜ້າຊຶ່ງບັດນີ້ເປັນສີມ້ານໆ ບ່ງວາກໄປທາງ

ໃດ ແລະ ມີວາດແວວແປກປະຫຼາດ.

ເຂົາໄປຢຸດຢູ່ຕໍ່ໜ້າກຸ່ມນາຍພານ ຍົກໝາຈອກຂຶ້ນສູງໆ ເພື່ອໃຫ້ໝົດທຸກຄົນເຫັນ, ແຂນຂອງເຂົາສັ່ນດິດໆ.



" ໂອຍຍຍ. . . ! " ສຽງຖອນຫາຍໃຈ ແລະສຽງຕື່ນເຕັ້ນຂອງຫຼາຍຄົນດັງເຂົ້າຫູກິງກິຈິ. ຕໍ່ມາເຂົາກໍ່ໄດ້ຍິນສຽງປະທານບໍລິສັດ ທີ່ໄດ້ມາຕິດຕາມເບິ່ງ ແລະ ເວົ້າດ້ວຍຄວາມຕື່ນເຕັ້ນວ່າ: " ເນົາໂບນພູເອີຍ, ເຈົ້າເຮັດວຽກສຳເລັດອີກແລ້ວ ! ຂ້ອຍເອງຢູ່ໃນທຸລະກິດນີ້ ມາຫຼາຍພໍ່າຫຼາຍປີແລ້ວ ແຕ່ຂ້ອຍບໍ່ເຄີຍເຫັນ ໝາຈອກສີເງິນງາມປານນີ້ຈັກເທື່ອ. ເໜືອສິ່ງອື່ນໃດ ເຈົ້າໄດ້ພິສູດຕົນເອງວ່າ ເປັນມືປືນອັນດັບໜຶ່ງ. ແມ່ນແທ້ໆ, ຂ້ອຍເບິ່ງເຈົ້າບໍ່ຜິດ ນັບແຕ່ທຳອິດເລີຍ... "

ເມື່ອໄດ້ຍິນຄຳຍ້ອງຍໍເຫຼົ່ານັ້ນ ໃນທີ່ສຸດກິງກິຈິກໍ່ຍິ້ມອອກມາໄດ້. ເຂົາຮູ້ສຶກພູມໃຈໃນຕົວເອງ ແລະ ເພື່ອເຮັດໃຫ້ປະທານມີຄວາມປະທັບໃຈ ເຂົາຈຶ່ງຈັບໜ້າສັດ ທີ່ເຂົາຍິງຕາຍນັ້ນ ໃຫ້ຫງາຍຂຶ້ນ ເມື່ອຫຼຽວເບິ່ງໜ້າໝາຈອກສີເງິນ ທີ່ຫຼັບຕາດ້ວຍອາການເຈັບປວດຢ່າງສຸດແສນນັ້ນ ບາງສິ່ງບາງຢ່າງພາຍໃນຕົວຂອງກິງກິຈິກໍ່ລະເບີດອອກ.

" ອະນິດຈາ ! " ເຂົາໄດ້ຍິນສຽງຕົນເອງຮ້ອງອອກມາ ແລະ ເຂົາກໍ່ວາງໝາຈອກລົງ. ແລະແລ້ວ ໂດຍບໍ່ຫົວຊາ ຕໍ່ສາຍຕາທີ່ເຕັມໄປດ້ວຍຄວາມແຕກຕື່ນຂອງປະທານບໍລິສັດ ແລະພວກນາຍພານ ກິງກິຈິວາງປືນຈາກມືອີກເບື້ອງໜຶ່ງລົງ, ຫັນຫຼັງແລ້ວແລ່ນໜີໄປຢ່າງໄວ ເທົ່າທີ່ຂາຂອງເຂົາຈະພາໄປໃຫ້ໄວໄດ້. ທັງແລ່ນຕຳຕົ້ນໄມ້ ຕົ້ນນັ້ນຕົ້ນນີ້, ທັງສະດຸດເຄືອເຂົາ, ຂອນໄມ້ ແລະ ຕໍໄມ້, ເຂົາອີ່ລາກອີ່ເລືອແລ່ນ

ຂຶ້ນເທິງພູຢ່າງຫຼັບຫູຫຼັບຕາ. ໂທ ! ເຂົາໄດ້ເຮັດຫຍັງລົງໄປນໍ ! ໝາຈອກສີເງິນສວຍງາມ ໂຕທີ່ກົງກີຈີໄດ້ຍິງຈົນເຖິງແກ່ຄວາມຕາຍນັ້ນ ແມ່ນແມ່ຂອງເຂົາເອງແທ້ໆ .

ຂາຂອງເຂົາຫຼ່ອຍ ແລະ ສັ່ນຍິກໆ ພາຍຫຼັງທີ່ແລ່ນສຸດຂີດແລ້ວ ກົງກີຈີ ກໍ່ລົ້ມພຸບລົງເທິງກອງໃບໄມ້ ທັງຮ້ອງໄຫ້ຢ່າງໜ້າເວດທະນາ.

ຄ່ຳຄືນ ອັນດຳມືດທີ່ປາສະຈາກດວງດາວ ປົກຄຸມໄປທົ່ວໂນນພູ. ຕົ້ນໄມ້ໄຫວເນັ້ງ ແລະ ມີສຽງດັງລັ່ນຍ້ອນລົມພັດແຮງຈາກທິດເໜືອ ຄ້າຍຄືວ່າຢາກໃຫ້ຖ້ວມສຽງຮ້ອງໄຫ້ຂອງກົງກີຈີ.

" ໂທ ແມ່ ! ຂ້ອຍເຮັດຫຍັງຈັ່ງຊີ້. . . "

" ເບິ່ນນັກທຸລະກິດນີ້ ບໍ່ເໝາະສຳລັບຂ້ອຍ ! ຂ້ອຍບໍ່ຕ້ອງການເງິນເດືອນ ! "

" ເອົາແມ່ຂ້ອຍຄືນມາ ! ສົ່ງແມ່ຂ້ອຍຄືນມາ ! "

ສຽງເສົ້າໆ ຂອງກົງກີຈີດັງຢ່າງສິ້ນຫວັງອອກມາຈາກສ່ວນເລິກຂອງຫົວໃຈ ແລະ ລົມກໍ່ພັດແຮງຂຶ້ນແຮງຂຶ້ນ. ຍາມເດິກດື່ນທ່ຽງຄືນ ສຽງໃບໄມ້ແຫ້ງ ແລະ ສຽງຕົ້ນໄມ້ສຽດສີກັນ ດັງແຮງຈົນໜ້າຂົນລຸກ, ກິ່ງໄມ້ແຂງໆ ແລະ ໝາກໄມ້ຫຼົ່ນຈາກຕົ້ນ ຕົກຖືກຕົນຕົວຂອງກົງກີຈີທີ່ນອນອາບຟາບຢູ່ດຽວດາຍ.

ສຽງປີ໊ກເບີ໊ກ, ສຽງໂອຍຄວນ
ຜູ້ຄົນ, ມະນຸດ, ໃບໄມ້, ເມືອເຮືອນ
ສຽງປີ໊ກເບີ໊ກ, ສຽງໂອຍຄວນ
ຜູ້ຄົນໜີໄປ, ມະນຸດໜີໄປ
ສຽງປີ໊ກເບີ໊ກ, ສຽງໂອຍຄວນ
ຜູ້ຄົນ, ມະນຸດຈາກໄປ, ເມືອເຮືອນ
ສຽງປີ໊ກເບີ໊ກ, ສຽງໂອຍຄວນ
ຜູ້ຄົນ . . .

ໃນທີ່ສຸດ ກິງກິຈິກໍ່ໂງຫົວຂຶ້ນ ແລະ ເບິ່ງໄປອ້ອມຕົວ. ໃນຄວາມມືດທຸກຂ້າງ ແລະ ບູດເບົ່າຕາມຕົ້ນໄມ້ເບິ່ງຄ້າຍຄືໜ້າໝາຈອກ ແລະ ໃບໜ້າໝອງເສົ້າ ແລະ ເຈັບປວດເຫຼົ່ານັ້ນປະກົດຄືວ່າ ຈ້ອງເບິ່ງເຂົາກົງໆ.

ກິງກິຈິຫາຍໃຈເລິກໆ ແລະ ຈົ່ມລຳພັນ " ຂ້ອຍກັບຄືນເປັນໝາຈອກບໍ່ໄດ້ອີກແລ້ວ. ເຖິງແມ່ນວ່າເປັນໄປໄດ້ , ພູຜາປ່າດົງກໍ່ຈະບໍ່ປ່ອຍໃຫ້ຂ້ອຍດຳລົງຊີວິດຢູ່ບ່ອນນີ້ອີກຕໍ່ໄປ. ມັນຄືກັບວ່າ ຂ້ອຍກັບກາຍເປັນຄົນແທ້ໆແລ້ວ. ແຕ່ນີ້ຕໍ່ໄປຂ້ອຍຕ້ອງດຳເນີນຊີວິດໃນຖານະເປັນຄົນ "

ກິງກິຈິຍືນຂຶ້ນ ແລະ ຍ່າງໂຊເຊລົງພູໄປຊ້າໆ ມຸ່ງໜ້າສູ່ແສງໄຟໃນຕົວເມືອງທີ່ຮຸ່ງວອນແວມຢູ່ເບື້ອງລຸ່ມພຸ້ນ.

ແສງພຸມພູ່ຕອນທຳອິດຂອງຍາມເຊົ້າພວມຈະເບີກຟ້າ ເມື່ອກີງກີຈິມາຮອດຫ້ອງພັກ. ທັນທີ ທີ່ເຂົາເຂົ້າໄປໃນຫ້ອງ ເຂົາກໍ່ເປີດປ່ອງຢ້ຽມທີ່ງອຍໄປສູ່ໂນນພູອອກກວ້າງໆ. ແລະແລ້ວ ໂດຍທີ່ບໍ່ໄດ້ເຈດຕະນາວ່າເຂົາຈະເຮັດຫຍັງ ເຂົາອວ່າຍໜ້າໄປຍັງໂນນພູແລ້ວຮ້ອງດັງໆ.

" ກີງ ກີ໊ງ ! ກີງກີ໊ງ ! ກີງກີ໊ງ ! "

ສຽງນີ້ດັງກ້ອງຂ້າມທົ່ງ ແລະ ລອຍຂ້າມໂນນພູໄປສູ່ທົ່ງ ແລະ ເນີນພູຖັດໆ ໄປ. ຕໍ່ມາສິ່ງທີ່ເຂົາໄດ້ຍິນກໍ່ມີແຕ່ສຽງເສົ້າສ້ອຍ ຮຽກເອີ້ນມາຫຼາຍໆ ສຽງ :

" ກີງກີ໊ງ ! ກີງກີ໊ງ ! ກີງກີ໊ງ ! " ມັນດັງມາຈາກບ່ອນນັ້ນບ່ອນນີ້ ດັງກ້ອງຟ້າທີ່ຢູ່ເໜືອຕົວເມືອງ. ກີງກີຈິ ຖອນຫາຍໃຈເລິກໆແລະເວົ້າຕໍ່ໂລກສຽງຄ່ອຍ ໆ " ເຣີ໊ຍ, ທຸກໆຄົນ, ພວກເຈົ້າທັງໝົດ. . . " ແລ້ວຢ່າງຊ້າໆ ງຽບໆເຂົາກໍ່ອັດປ່ອງຢ້ຽມໃຫ້ປິດບັງໂນນພູແລະ ໂລກທັງໝົດ.

ນັບແຕ່ນັ້ນມາ ບໍ່ມີຜູ້ໃດເຫັນຫຼືໄດ້ຍິນຂ່າວ ກີງກີຈິເລີຍ. ແຕ່ທຸກຄົນຖ້າທ່ານເປີດປ່ອງຢ້ຽມຕອນເຊົ້າເດິກ ກ່ອນຕາເວັນຂຶ້ນແລ້ວຕັ້ງໃຈຟັງ ທ່ານອາດໄດ້ຍິນສຽງໝາຈອກຫອນດັງມາແຕ່ໄກໆ " ກີງກີ໊ງ ! ກີງກີ໊ງ !ກີງກີ໊ງງງ ! ! " ມັນອາດແມ່ນ " ກີງກີຈິ " ແຫ່ງເມືອງຂອງທ່ານກໍ່ເປັນໄດ້ . . .

( ຮູບປະກອບໂດຍ ອ. ຣາມາຈັນດຣານ )

# ໃຜຜູ້ໜຶ່ງ

ເມື່ອ " ໃຜຜູ້ໜຶ່ງ " ຫາຍໃຈອອກ ສິ່ງອາກາດອຸ່ນໆ ອອກມານັ້ນ ປະຕູບ່ອນໜຶ່ງ ນະແຫ່ງໃດແຫ່ງໜຶ່ງໄຂອອກຄ່ອຍໆ ເບົາໆ ແລະ ບໍ່ມີສຽງໃດໆ ເລີຍ.

ປະຕູນັ້ນ ປະກົດວ່າໜຸ່ມນວນຢ່າງສຸດແສນ ແລະເບົາບາງຄືດັ່ງຂົນນົກ. ຈະຢ່າງໃດກໍຕາມທີ່ຈິງແລ້ວ ປະຕູເຮັດດ້ວຍນ້ຳກ້ອນເປັນທ່ອນໜາໆ ພ້ອມກັບມີອາຍສີຂາວລອຍອອກມາ.

ດ້ານໃນຂອງປະຕູທີ່ແໜ້ນໜາ ແມ່ນຫ້ອງຂະໜາດມະຫຶມາ ທີ່ມີນ້ຳກ້ອນຍ້ອຍ ເປັນຍອຍແຂງເຢັນ ຫ້ອຍຕິດຕາມເພດານ ນັບເປັນພັນໆຊໍ່. " ລົມເໜືອ " ພັດອ້ອມຫ້ອງສຽງດັ່ງອຶກກະທຶກ ຄືດັ່ງທີ່ເຄີຍພັດສະເໝີມາ ພ້ອມກັບມີຜ້າຄຸມສີຂາວປົວສະບັດຕິດຕາມຢູ່ຂ້າງຫຼັງ.



“ ນາຍພົນລະດູໜາວ ” ນັ່ງຢູ່ກາງຫ້ອງອັນກວ້າງໃຫຍ່ ສົ່ງສຽງ
ເປັ່ນຄຳສັ່ງອອກມາລຽນຕິດລຽນຕໍ່ໃຫ້ແກ່ຜູ້ເປັ່ນມືຂວາຄື “ ລົມເໜືອ ” ແລະ “ ມົ່ງຂວັນຫິມະ ”, “ ເຖົ້າຫິມະກ້ານ ”, “ ນ້ຳກ້ອນໄພສານ ” ແລະ ທະຫານບໍລິວານອື່ນໆ . ມີຫຼຽນໄຊຂະໜາດໃຫຍ່ຫຼາຍອັນຫ້ອຍ



ຕິດຢູ່ໜ້າອົກເຄື່ອງແບບສີຂາວ ຂອງ " ນາຍພົນລະດູໜາວ " ແລະ ມີ
ເສັ້ນສາຍສັງວານຄຳຢູ່ບ່າໄຫຼ່ເຫຼື້ອມຍິບຍັບ. ໜວດເຄົາອັນດົກໜາຂອງ
ເຂົາຍາວເປັນແມັດໆ ແລະ ປົກຄຸມດ້ວຍຫິມະກ້ານ ທີ່ສິ່ງແສງເປັນປະກາຍ
ຍິບຍັບສີຂາວບໍລິສຸດ. ໃນມືຂອງເຂົາ ມີງ້າວດວງໃຫຍ່ ທີ່ເປັນນ້ຳກ້ອນ

ແຫຼມຄົມ ຊຶ່ງເຂົາໃຊ້ບັນຊາໃຫ້ໂລກ ລະດູ ໜາວ ຢູ່ໃຕ້ການຄວບຄຸມຂອງເຂົາ.

ແນວໃດກໍຕາມ ປະກົດວ່າບໍ່ດົນມານີ້ " ນາຍພົນລະດູໜາວ " ໄດ້ເຊົາອອກຄຳສັ່ງຢ່າງບໍ່ຄາດມາກ່ອນ, ທັງນີ້ ເພາະເຂົາເຊືອບຫຼັບ ຫົວງັກຫົວແງ້ນຄ່ອຍໆ. ດັ່ງນີ້ ບັນດາທະຫານບໍລິວານ ຈຶ່ງບໍ່ເອົາໃຈໃສ່ຕໍ່ວຽກງານເທົ່າໃດ.

ແມ່ນໃນຕອນນີ້ເອງທີ່ " ໃຜຜູ້ໜຶ່ງ " ເບົາລົມຫາຍໃຈໄປຍູ້ປະຕູນ້ຳກ້ອນອັນແໜ້ນໜາ ໃຫ້ໄຂອອກຄ່ອຍໆ ຈົນວ່າ ລຳແສງຂອງດວງຕາເວັນໄດ້ສ່ອງລອດເຂົ້າມາໃນຫ້ອງ ຄືກັບວ່າ ມັນຄອຍຖ້າໂອກາດຢູ່ແລ້ວ. ເມື່ອເຂົ້າມາຮອດຂ້າງໃນແລ້ວ ແສງຕາເວັນ ກໍ່ຍິ່ງແດງໃສ ແລະ ສະຫວ່າງແຈ້ງຂຶ້ນ, ສ່ອງເຂົ້າໄປຮອດແຈຫ້ອງນ້ຳກ້ອນ ແລະ ໃນທີ່ສຸດ ກໍ່ສ່ອງໄປຕ້ອງປາຍດັງ " ນາຍພົນລະດູໜາວ " ທີ່ພວມເຊືອບຫຼັບຢູ່.

ຫົວຂອງ " ນາຍພົນລະດູໜາວຜູ້ຊະລາ " ເຊົາງັກແງ້ນທັນທີທັນໃດ. ເຂົາໂດດເຕັ້ນຂຶ້ນແລ້ວຊັກງ້າວອອກຢ່າງວ່ອງໄວ ແລະ ຮ້ອງທົ່ງໃສ່ບັນດາທະຫານບໍລິວານວ່າ " ເຮີ້ຍ ! ສູພວກຂີ້ສູດ, ມັນຕັ້ງຫຼາຍເທື່ອແລ້ວທີ່ກູບອກວ່າບໍ່ໃຫ້ປ່ອຍໝໍບັ້ນເຂົ້າມາໃນຫ້ອງ ! ຫຼາຍຮ້ອຍ ຫຼາຍພັນປີມາແລ້ວ ທີ່ກູໄດ້ສູ້ຮົບຕົບຕີ ເພື່ອບໍ່ໃຫ້ມັນເຂົ້າມາໃນນີ້, ແຕ່ພວກສູເຫງົາກຫາງາກ ເຮັດວຽກບໍ່ສຳເລັດເລີຍ. ບະ ! ຈັ່ງແມ່ນມັນໜ້າດ້ານອີ່ຫຼີເວີ້ຍ ! ມັນບັງອາດເຂົ້າມານີ້, ເອົາ " ເຖົ້າຕາເວັນ " ມາພ້ອມ ແລະ ພົ່ນແປ້ງນອນຫຼັບ ອ້ອມທົບ ເພື່ອເຮັດໃຫ້ພວກເຮົາເຫງົານອນ. "

" ແນວໃດກໍຕາມ, ມັນຫຼ້າສວາຍເກີນໄປແລ້ວທີ່ຈະສູ້ຮົບໃນປີນີ້ ເພາະ " ເຖົ້າຕາເວັນ " ໄດ້ເຂົ້າໄປຮອດທຸກຈອກທຸກແຈໃນຖານທີ່ໝັ້ນ ພວກເຮົາແລ້ວ, " ລົມເໜືອ " ນັ້ນພຽງພໍລະ. ປີນີ້ເຊົາສາກ່ອນ, ເອີ ແຕ່ອັນນີ້ບໍ່ແມ່ນອະວະສານໃດ ! ອອກໄປໄວໆ ແລ້ວກໍກະກຽມບັ້ນຮົບສຳ ລັບປີໜ້າ. ເອົາລະທຸກໆ ຄົນກຽມຕົວຖອຍ. ໄວໆ ຮີບໄປ ! "

ທະຫານບໍລິວານພາກັນກະກຽມເປັນສົນລະວົນ,ຈັດການພັບເຄື່ອງ ແບບສີຂາວສະຫງ່າງາມຂອງ " ນາຍພົນລະດູໜາວ " ແລ້ວເອົາລົງໃສ່ຫີບ ຂະໜາດໃຫຍ່ ທີ່ເຮັດດ້ວຍນ້ຳກ້ອນ, ດຶງເອົາຊໍ່ນ້ຳກ້ອນຍ້ອຍຈາກ ເພ ດານແລ້ວຜູກຕິດກັນເປັນມັດໆ, ປັ້ນເອົາຫິມະໃຫ້ເປັນໜ່ວຍອຸ້ມລຸ້ມແລ້ວ ຈັດການໃສ່ຫີບທໍ່. " ລົມເໜືອ " ຜູ້ຢາກສູ້ຮົບຕົບຕີຕື່ມອີກຈັກຍົກນັ້ນ ມີສີໜ້າບູດບຶ້ງ ຂະນະທີ່ແກ້ຜ້າຄຸມສີຂາວອອກ ແລະ ຈັດການພັບໄວ້.

ຂະນະທີ່ແສງຕະເວັນຈັດການໃຫ້ຫິມະກ້ານ ແລະ ນ້ຳກ້ອນຢູ່ໃນ ຫ້ອງມະຫຶມາເປື່ອຍຢ່າງໄວວານັ້ນ ຄື້ນອາກາດຮ້ອນເປັນຍິບຍັບ ກໍ່ປະກົດ ໃຫ້ເຫັນ ໂດຍພື້ອນແອ່ນ ແລະ ເລີ່ມສິ່ງສຽງໄປຕາມເສັ້ນທາງສະເພາະ ຂອງມັນ. ບໍ່ມີໃຜຮູ້ວ່າ ຄື້ນອາກາດເວົ້າຫຍັງ, ແຕ່ເວລາມັນເນົ້າໂອນ ເອນ ແລະ ບິດຕົວ ລອຍຂຶ້ນເທິງຄ່ອຍໆເບົາໆ ນັ້ນ ມັນກໍ່ຫົວສະອຶກສະ ອື້ນຢ່າງງຽບໆ.

ພູຜາຢູ່ໄກໆພຸ້ນ ພັກຜ່ອນຢ່ອນອາລົມ, ນອນຂວາງຂອບຟ້າຢ່າງ ສຳບາຍ ແລະ ພວມຄອງຖ້າສິ່ງໃດສິ່ງໜຶ່ງທີ່ເບີກບານດ້ວຍຄວາມດີອົກດີ



ໃຈ. ນ້ຳຫ້ວຍທີ່ບໍ່ໄຫຼມາດົນນານ ເພາະແຂ້ງກ້າມຕະຫຼອດລະດູໜາວອັນຍາວນານ ກໍ່ເລີ່ມໄຫຼລ່ອງອອກສູ່ທະເລ, ສິ່ງສຽງຍ້ຳງມ່ວນຊື່ນບໍ່ເບີ່ນຖ້ອຍເບີ່ນຄວາມ. ປາຊິວ ແລະ ປານ້ອຍອື່ນໆ ທີ່ຫຼົບຢູ່ຫຼືບຫີນ ຕາມລຳຫ້ວຍ ກໍ່ພາກັນຕື່ນນອນ, ທຳອິດ ພຽງແຕ່ເສືອກຕາໄປມາ ແລະ ເໜັງ



ທາງຄ່ອຍ ໆ. ກ້ອນເຟື້ອສີຂາວ ລອຍມາຈາກຟາກຟ້າເໜືອມະຫາສະໝຸດ ໂດຍຫອບເອົາສາຍລົມອຸ່ນມາພ້ອມ. ກົງຫັນໂຮງສີເກົ່າແກ່ ສົ່ງສຽງດັງລັ່ນ ແລະ ເລີ່ມຕົ້ນປິ່ນຢ່າງລື່ນເລົ້າ, ແລະ ໃບໜ້າຂອງຊາວບ້ານຕ່າງກໍ່ເບັ່ງບານດ້ວຍຄວາມສະໜຸກສະໜານ ທີ່ພື້ນຄືນມາໃໝ່ອີກ.

ມັນເປັນລະດູບານໃໝ່ແລ້ວ, ທຸກສິ່ງທຸກຢ່າງ ເລີ່ມຕົ້ນໝູນວຽນ ແລະ ປ່ຽນໄປຢ່າງໄວວາ, ແຕ່ເບິ່ງແລ້ວ ກໍ່ເປັນໄປດ້ວຍຄວາມລະມັດລະວັງ. ຢູ່ພື້ນດິນ ບ່ອນທີ່ແສງຕາເວັນເຂົ້າໄປບໍ່ຮອດ ຈຳພວກຫົວສະລຶມສະລືຫຼາຍຫົວ ນອນຫຼັບຢ່າງແຈບຈົມ ແລະ ຍັງໂກນກົ້ກໆ.

ເຖິງແມ່ນວ່າ ບໍ່ສາມາດສົ່ງແສງໄປຊອດໃສ່ຫົວສະລຶມສະລືເຫຼົ່ານັ້ນ ແຕ່ຕາເວັນກໍ່ເວົ້າດ້ວຍສຽງໜຸ່ມນວນ ດັງໄປຮອດຈຳພວກຫົວທີ່ຂີ້ຄ້ານຊຶ່ງຍັງນອນຢ່ອນອາລົມຢູ່ໃຕ້ດິນນັ້ນຢູ່.

" ເຮີຍ ! ພວກນັ້ນ, ຮອດລະດູບານໃໝ່ແລ້ວເດີ, ເບິ່ງແມ ມັນອົບອຸ່ນສໍ່າໃດແລ້ວ ! ເບິ່ງແມ ຜູ້ໃດໆ ກໍ່ເລີ່ມເຮັດວຽກກັນລະ ໜ້າຜາກເຕັມໄປດ້ວຍເຫື່ອເປັນເມັດສີເງິນໃສ ໆ ! ບັດນີ້ມັນປອດໄພ ແລະ ອອກມາໄດ້ແລ້ວ ເພາະ " ນາຍພົນລະດູໜາວ " ພ່າຍໜີໄປແລ້ວ. ບັດນີ້ ໃຫ້ອອກມາຈາກບ່ອນມືດ ຈາກໃຕ້ດິນມືດ ໆ ມາສູ່ແສງສະຫວ່າງຍາມລະດູບານໃໝ່ເທາະ ! "



ເມື່ອຕາເວັນມີດວງບລິງແດ່ ດິນກໍ່ໂປຂຶ້ນບ່ອນນັ້ນບ່ອນນີ້ ແລ້ວກໍ່ມີສິ່ງງອກຂຶ້ນມາ ຄືຫຍ້າແລະພືດອື່ນ ໆ. ພວກມົດ, ງູ ແລະ ຈິໂກະບໍ່ລໍ່ຫິວອອກມາ ພັບຕາຍິບໆເພາະເຫຼື້ອມຍ້ອນແສງຕາເວັນຮຸ່ງແຈ້ງ ແລ້ວກໍ່ພາກັນຕັ້ງຕົ້ນເຮັດວຽກຢ່າງສົນລະວົນ ທັງແນມເບິ່ງຕາເວັນທີ່ລອຍເດັ່ນຢູ່ເທິງຟ້າດ້ວຍຄວາມສົດຊື່ນດີໃຈ.

ໃນຂະນະທີ່ສິ່ງທັງໝົດນີ້ ພວມເກີດຂຶ້ນຢູ່ຂ້າງນອກ ທ່າມກາງບັນຍາກາດຂອງລະດູບານໃໝ່, ມີສອງສ່ຽວ ຄື ໝໍ່ຕັນໂປໂປະ ດອກໄມ້ສີເຫຼືອງກັບໝໍ່ພູກິ-ໂນ-ໂຕະ ດອກໄມ້ສີມ່ວງຍັງຄາງຢູ່ໃຕ້ພື້ນດິນ ແລະ ພວມລົມກັນດ້ວຍສຽງເຫງົານອນ.

" ເອີ ຕັນໂປໂປະ, ຢູ່ນອກພຸ້ນ ແມ່ນລະດູບານໃໝ່ແລ້ວໃດ. ຈັ່ງໃດຮື ເພິ່ນຈຶ່ງເອີ້ນລະດູບານໃໝ່ ? ແມ່ນຢູ່ວ່າ ມັນຮຸ່ງແຈ້ງຈ່າງປ່າງແຕ່ເຮົາກໍ່ຄິດແລ້ວຄິດອີກຢູ່, ເຖິງມັນຊິຮຸ່ງແຈ້ງປານໃດກໍ່ຕາມ ຢູ່ເໜືອພື້ນດິນຫັ້ນນະ ແຕ່ໃຊ້ຊີວິດຢູ່ລຸ່ມພີ້ຄືພວກເຮົາຢູ່ມາດົນນານ ແມ່ນສະບາຍກວ່າໃດ, ຊີວິດຢູ່ຂ້າງນອກພຸ້ນ ຈັ່ງໃດກໍ່ຕ້ອງມີບັນຫາເບິ່ນກອງອຸບຸອະຍະພຸ້ນລະ "

" ໂຕເວົ້າຖືກ " ດອກໄມ້ສີເຫຼືອງວ່າ " ຢູ່ໃຕ້ດິນ ນີ້ ມັນແສນສໍາບາຍ, ເຖິງແມ່ນວ່າ ຕາເວັນຊິເວົ້າວ່າ ຊີວິດຢູ່ເທິງພຸ້ນຄັກຫຼາຍກໍ່ຕາມ, ພວກເຮົາພາກັນຢູ່ລຸ່ມນີ້ແຫຼະມີຄວາມສຸກດີ. ຖ້າເຮົາອອກໄປນອກພຸ້ນ

ເຮົາກໍ່ສາມາດບິ່ງໃບອອກຕາມຕົ້ນຕິວ ແລະ ອອກດອກປອງຕ້ອດບ້ອດຢູ່ທົ່ວຕົນເອງ ແຕ່ວ່າເຮົາຊ້ຳບໍ່ສາມາດທົນຢູ່ໄດ້ ແມ່ນແຕ່ນາທີດຽວ. ແລ້ວ ເວລາດອກຂອງເຮົາກາຍເປັນແກ່ນ, ແກ່ນເຫຼົ່ານັ້ນ ຈະຖືກລົມພັດໄປທົ່ວທິບ, ໄປໄກໆ ຈົນບໍ່ມີໃຜຮູ້ວ່າຮອດໃສ ! ເຮົາຄິດວ່າຢູ່ລຸ່ມນີ້ເຮົາມີຄວາມສຸກທີ່ສຸດ, ນອນຫຼັບ ແລະ ບໍ່ເໝັ້ງບໍ່ຕື່ງຈັກດີ້ເລີຍ. ”

ເຖິງແມ່ນວ່າ ດອກໄມ້ສີເຫຼືອງກັບດອກໄມ້ສີມ່ວງຈະລົມກັນແນວນີ້ຢູ່ກໍ່ຕາມ ແຕ່ສຽງມ່ວນຊື່ນເຮຮາຢູ່ເທິງພຸ້ນ ກໍ່ດັງມາຮອດຫູ , ປະກົດຄືມີຄວາມສະໜຸກສະໜານຫຼາຍ ປານວ່າພວມມີງານມະໂຫລານ, ມີສຽງທົ່ວສຽງເວົ້າເຈື້ອຍແຈ້ວຂອງຕົ້ນໄມ້ ທີ່ແຕກໜໍ່ອ່ອນ ແລະ ຈູມຈີ ແລະ ພວກສັດຕ່າງໆ ກໍ່ພາກັນສ້ອມແປງເຮືອນຮັງ ທີ່ “ ລົມເໜືອ ” ໄດ້ພັດຈົນເພພັງ - ເຫດການດັ່ງກ່າວ ຄືວ່າເຮັດໃຫ້ທົ່ວໃຈບໍ່ວ່າດວງໃດ ຕ່າງກໍ່ສົດໃສ ແລະ ປີຕິຊົມຊື່ນ. ສອງສ່ຽວ ທີ່ຢູ່ໃຕ້ພື້ນດິນ ໄດ້ຍິນສຽງເຫຼົ່ານັ້ນ ກໍ່ເກີດຄວາມສັບສົນກ່ຽວກັບອັນມ່ວນ ແລະ ອັນໂສກເສົ້າຈົນບໍ່ສະບາຍໃຈ.

“ ຕົ້ນໂປໂປະ ສ່ຽວ, ມາລອງບໍ່ລໍທົ່ວຂຶ້ນຈັກວິນາທີເບິ່ງເທາະ, ພຽງແຕ່ເບິ່ງລວາດໄປບຶດດຽວເນາະ ? ອັນເຮົານີ້ ທັນທີ ທີ່ເລີ່ມຕົ້ນບົ່ງຂຶ້ນ ຄົນກໍ່ຈະມາຫາ ແລ້ວກໍ່ເດັດເອົາເຮົາໄປເຮັດແກງ ຫຼື ດອງໂລດ ແຕ່ວ່າເຮົາຊ້ຳອົດບໍ່ໄດ້ ຄິດທຸ່ມໆ ຢູ່ ແຕ່ວ່າມີຫຍັງເກີດຂຶ້ນນຢູ່ເທິງພຸ້ນ ”.

" ເອີ... ເຮົາກໍ່ຄຶດຈັ່ງຊັ້ນ ພູ່ກິ-ໂບ-ໂຕະ, ເຮົາຄືກັນປວດຈ້າວໆ ຢາກຂຶ້ນໄປເບິ່ງຫົວທັດນອກພຸ້ນ... ແຕ່... ເບິ່ງແປັບດຽວໃດ ຕິກລິງ ເນາະ ? "

ດັ່ງນີ້ ດອກໄມ້ສີເຫຼືອງ ແລະ ດອກໄມ້ສີມ່ວງຈຶ່ງພາກັນຫາຍໃຈເຂົ້າເລິກໆ ແລ້ວເອົາຫົວບຸດິນຂຶ້ນເທິງ, ໜ້າດິນ ຢູ່ເໜືອພວກເຂົານັ້ນປະກົດເປັນໂນນນ້ອຍໆ ແລະ ແລ້ວ ກໍ່ມີຮູຈ່ອງບ່ອງສອງຮູສ່ອງໄປຫາຟ້າ ແລະ ສອງສ່ຽວກໍ່ບໍ່ລໍອອກຮູນັ້ນມາ. ທັນທີ ທີ່ ຕັນໂປໂປະ ແລະ ພູ່ກິ-ໂບ-ໂຕະ ປ່ອນຫົວອອກມາ ທັງສອງກໍ່ພັບຕາຍິບໆ ຍ້ອນເຫຼື້ອມແສງສະຫວ່າງແຈ້ງ, ຕາເວັນທີ່ຢູ່ເທິງຫົວພວກເຂົາ ຍິ້ມລົງມາໃສ່ຢ່າງເປັນກັນເອງ.

" ຂ້ອຍດີໃຈຫຼາຍທີ່ພົບພວກເຈົ້າ ຕັນໂປໂປະ ແລະພູ່ ກິ-ໂບ-ໂຕະ ເອີຍ. ພວກຂ້ອຍພາກັນຄອງຖ້າຢູ່, ໃຈຈົດໃຈຈໍ່ວ່າ ປານໃດພວກເຈົ້າຊິອອກມາ. ເອົາລະ ບັດນີ້ ມືນຕາອອກກວ້າງໆ ແລ້ວເບິ່ງອ້ອມຂ້າງອ້ອມແອວພວກເຈົ້າ ທັ້ນ ".

" ອຸຍ ແຈ້ງເອົາແທ້ເອົາວ່າ !... " ພູ່ກິ-ໂບ-ໂຕະ ຮ້ອງຂຶ້ນ, ເອົາມືທັງສອງ ກັ້ງໂກບບັງຕາໄວ້. " ແສງແດດເຮັດໃຫ້ເທິງພື້ນດິນຮຸ່ງເຫຼື້ອມໄປໝົດ, ອັນນີ້ ຊິເຮັດໃຫ້ຕາຂ້ອຍພົບຈຸດດັບ ຄັກແທ້ແນ່ນອນ ແລ້ວກໍ່ສຽງອຶກກະທຶກຕ່າງໆ ເຫຼົ່ານີ້ນ່າ ! ຢູ່ໃຕ້ພື້ນດິນພຸ້ນ ທັງມືດ ທັງມິດງຽບແທ້ໆ ໃດ ... ເອີ ແຕ່ລົມພັດເຢັນສະບາຍໆ ອີ່ຫຼີ ... ແຕ່ວ່າ



ຕົ້ນໂປໂປະ ພວກເຮົາເຮັດຫຍັງບາດນີ້ ? ພວກເຮົາພຽງຢາກລັກເບິ່ງບຸ່ບ ບັ້ບບຶດດຽວໃດ..."

ໃນທີ່ສຸດ ຕາຂອງເຂົາກໍລົ້ງກັບແສງຕາເວັນ, ດອກໄມ້ສີມ່ວງເບິ່ງໄປອ້ອມໆ ດ້ວຍອາການຍຸ່ດໆ ຍ່ອນໆ. ສາຍລົມອັນອົບອຸ່ນຂອງລະດູບານໃໝ່ ພັດຄ່ອຍໆ ງຽບໆ ແຕ່ພັດຢູ່ບ່ອນນັ້ນບ່ອນນີ້ບໍ່ຢຸດບໍ່ເຊົາ ທັງ

ເດັດເອົາໃບໄມ້ ແລະ ດອກໄມ້ອອກຈາກຕົ້ນໄປຫວ່ານລົງທົ່ງຫຍ້າ ອັນກວ້າງໃຫຍ່. ພວກງູ ແລະ ກົບເໜັງຍຸບຍິບໆ ຕາຍັງແດງຍ້ອນນອນຫຼັບຕະຫຼອດລະດູໜາວ ອັນດົນນານ. ໝີເລາະລ່ອງຜ່າພຸ່ມໄມ້ໄປຕາມເປີ້ນພູ, ມັນຫິວ ເພາະບໍ່ໄດ້ກິນຫຍັງມາຫຼາຍເດືອນ.

ຕັນໂປໂປະ ເບິ່ງທຸກສິ່ງທຸກຢ່າງ ທີ່ຢູ່ອ້ອມໂຕ ດ້ວຍຄວາມດີອົກດີໃຈ ແລ້ວກໍເວົ້າອອກມາດ້ວຍຄວາມເຊື່ອໝັ້ນ.

" ພູ່ກີ-ໂນ-ໂຕະ ! ແມ່ນແທ້ບໍ ວ່າຊີວິດຢູ່ໃຕ້ພື້ນດິນພຸ້ນສະດວກສະບາຍ, ແຕ່ອາດແມ່ນຍ້ອນວ່າສິ່ງທັງໝົດ ທີ່ພວກເຮົາເຮັດກໍ່ຄືເອົາແຕ່ນອນຫຼັບ, ນອນຫຼັບຈັ່ງຊັ້ນນະ ພວກເຮົາບໍ່ເຫັນຫຍັງ, ບໍ່ໄດ້ຍິນຫຍັງ, ບໍ່ໄດ້ກິນຫຍັງ ແລະ ບໍ່ຮູ້ສຶກຫຍັງໝົດ, ແບບນັ້ນ ກໍ່ບໍ່ແມ່ນດຳລົງຊີວິດຢ່າງແທ້ຈິງ ແມ່ນຕວ່າ ? ໃຫ້ຄັກແທ້ ກໍ່ແມ່ນອອກມານອກ ແລະ ຫາຍໃຈເອົາອາກາດເຂົ້າ ເລິກໆ , ແຫງນໜ້າເບິ່ງສະຫວັນ ແລະ ຄ່ອຍໆ ໃຫຍ່ຂຶ້ນໃຫຍ່ຂຶ້ນ, ຈັ່ງຊີ້ ມັນຈຶ່ງມ່ວນອົກມ່ວນໃຈ " .

" ແຕ່ວ່າ " ພູ່ກີ-ໂນ-ໂຕະ ຕັດຄວາມ " ຈື່ໄວ້ເນີ ເມື່ອໂຕໃຫຍ່ຂຶ້ນ ແລະ ມີແກ່ນ, ລົມຈະມາຫາ ແລະ ພັດເອົາແກ່ນປິວໜີໄປ. ສ່ວນເຮົານັ້ນແຮ່ງເຕັກ, ເຮົາຈະຖືກຄົນເອົາໄປກິນ. ໃນຂະນະທີ່ໂຕຖືກພັດພາໄປ ຍ້ອນແປະໆ ທ່າມກາງສາຍລົມ, ເຮົາອາດຈະຢູ່ໃນກະເພາະຂອງໃຜຜູ້ໜຶ່ງແລ້ວກໍ່ເປັນໄດ້."

" ອັນໂຕເວົ້າວ່າ ຊິແຫງນໜ້າເບິ່ງສະຫວັນ ແລະ ໃຫຍ່ຂຶ້ນທັ້ນນະໂຕກໍ່ຮູ້ຈັກອີ່ຫຼືບໍ່ວ່າ ສະຫວັນຢູ່ທາງໃດ. ພວກເຮົາເຮັດຫຍັງບໍ່ເປັນມີ

ແຕ່ໃຫຍ່ຂຶ້ນ, ແລະ ຍິ່ງໃຫຍ່ໄວ ກໍ່ຍິ່ງຕາຍໄວ. ເຮົາບໍ່ຢາກກ່ຽວຂ້ອງຫຍັງໝົດກັບຄວາມຕາຍ ! ".

ຕົ້ນໂປໂປະ ຍື່ນກິ່ງໂກະ ຄຶດໄປມາແລ້ວກໍ່ຕອບສ່ຽງວ່າ : " ເອົາລະ, ອັນນັ້ນກໍ່ຖືກແທ້. ເຮົາຄຶດວ່າໃຫຍ່ຂຶ້ນໄວພາໃຫ້ເຖົ້າແກ່ແລ້ວກໍ່ຕາຍ. ບະ ແຕ່ເຮົາຫຼີກບໍ່ໄດ້ ອັນເລື່ອງຢາກໃຫຍ່ຂຶ້ນນີ້ ! ສ້າງດອກໄມ້ແລ້ວກໍ່ສ້າງແກ່ນນ້ອຍໆຫຼາຍໆແກ່ນ, ແລ້ວບໍ່ດົນກໍ່ມີໜໍ່ນ້ອຍໆອອກມາຈາກແກ່ນເຫຼົ່ານັ້ນ - ລອງຄຶດເບິ່ງດູວ່າ ເລື່ອງອວ່າຍໜ້າໄປຫາຕາເວັນຍາມລະດູບານໃໝ່ ແລ້ວໃຫຍ່ຂຶ້ນໃຫຍ່ຂຶ້ນ ມັນເຮັດໃຫ້ຫົວໃຈຮູ້ສຶກອົບອຸ່ນແທ້ໆໃດ ! "

" ແລ້ວກໍ່. . . " ດອກໄມ້ສີເຫຼືອງລັງເລໃຈ " ເລື່ອງສະຫວັນ ໄປທາງໃດນັ້ນເຮົາຄຶດວ່າ ມັນຕ້ອງຢູ່ເທິງພຸ້ນ ບ່ອນທີ່ຕາເວັນພວມຮຸ່ງແຈ້ງ, ຢູ່ສູງກວ່າຍອດຟ້າອີກ. ເບິ່ງພຸ້ນ, ໂຕເຫັນນົກຈາບໂຕໜຶ່ງບິນຂຶ້ນຈາກທົ່ງບໍ່ ມັນເຈີດຂຶ້ນສູງໆໄປເທິງຟ້າ. ເຮົາຄຶດວ່າມັນກໍ່ເຊື່ອຄືກັນກັບເຮົາ. . "

" ເອີ. . . ຈັ່ງໃດກໍ່ຕາມ " ພູກົ-ໂນ-ໂຕະ ວ່າ " ເຮົາເສຍໃຈ, ແຕ່ເຮົາຊິບໍ່ຢູ່ໜີ້ ເພື່ອເຕີບໃຫຍ່ຂຶ້ນໃດເດີ. ເຮົາບໍ່ຢາກຄຶດເຖິງເລື່ອງວອດວາຍຕາຍດັບ. ເຮົາມັກຢູ່ໃຕ້ພື້ນດິນ ແລະ ນອນຫຼັບຕະຫຼອດໄປ. " ແລ້ວດອກໄມ້ສີມ່ວງກໍ່ກົ້ມລົງ ແລະ ເອົາສອງມືຂຸດ ເພື່ອລົງສູ່ໃຕ້ດິນຢ່າງຈິນປົ່ນຍາ. ແນວໃດກໍ່ຕາມ ມັນພົບວ່າພື້ນດິນແໜ້ນແກ່ນ ແລະ ບໍ່ປ່ອຍໃຫ້ມັນລົງໄປເລີຍ, ແລ້ວພື້ນດິນກໍ່ເວົ້າສຽງຮ້າຍໆໃສ່.

" ເປັນຈັ່ງໃດຫວະ ພູ່ກົ-ໂນ-ໂຕະ ! ຢ່າຖ່ອຍຫຼາຍແມ້ ! ບໍ່ມີໃຜຊິເວົ້າເຖິງເລື່ອງກັບຄືນໄປຢູ່ໃຕ້ດິນດອກ ພາຍຫຼັງທີ່ເອົາຫົວບຸດິນຂຶ້ນມາສູ່ອາກາດພາຍນອກແລ້ວ. ມັນໂງ່ຈ້າທີ່ວ່າຢາກກັບຄືນໄປຫາໂລກທີ່ມືດມິນ ພາຍຫຼັງທີ່ອອກມາສູ່ໂລກແຫ່ງຊີວິດແລ້ວ "

ພື້ນດິນບໍ່ເວົ້າຫຍັງຕື່ມອີກ, ແຕ່ໃນທັນໃດ ຕາມໜ້າດິນອ້ອມແອ້ມພູ່ກົ-ໂນ-ໂຕະ ກໍ່ປະກົດ ມີປ້າຍຂຽນວ່າ "ຫ້າມເຂົ້າ" ແລະ "ຫ້າມລ່ວງລ້ຳ". ເປັນເລື່ອງໜັກໃຈສຳລັບດອກໄມ້ສີມ່ວງຜູ້ໂຊກຮ້າຍ ທີ່ຈະທົນຕໍ່ໄປໄດ້, ດັ່ງນີ້ມັນຈຶ່ງເລີ່ມຮ້ອງໄຫ້ນ້ຳຕາໄຫຼ. ແລ້ວຕໍ່ມາ ສຽງຄ່ອຍໆເບົາໆທີ່ເຄີຍລື່ງຫູອັນເປັນສຽງຂອງຕົ້ນໂປໂປະ ກໍ່ດັງມາເຂົ້າຫູ.

" ພູ່ກົ-ໂນ-ໂຕະ ! ລືມສະເລື່ອງທີ່ພວກເຮົາຄິດຈະກັບຄືນລົງໄປພື້ນລຸ່ມນັ້ນ. ຈັ່ງໃດກໍ່ຕາມ, ພວກເຮົາຕື່ນແລ້ວບາດນີ້, ຈັ່ງຊັ້ນ ເປັນຫຍັງພວກເຮົາຈຶ່ງຊິກັບຄືນໄປນອນແຈບຈົມອີກ? ເວົ້າກໍ່ເວົ້າເທາະ ສຳລັບເຮົາແລ້ວ ເລື່ອງກັບຄືນໄປນັ້ນຄືເປັນຕາອິກສັ່ນຂວັນເສຍຫຼາຍກວ່າພວກເຮົາສ່ຽງໂຊກຢູ່ບ່ອນນີ້. ພູ່ກົ-ໂນ-ໂຕະ ເອີຍ, ເຮົາກໍ່ຄືກັນແກ້ບໍ່ຕົກໄດ້ແຕ່ຢ້ານຖືກເຂົາກິນ ແລະ ຢ້ານຕາຍ ແຕ່ມັນກໍ່ເກີດບໍ່ວ່າກັບຜູ້ໃດ. ສະຫຼຸບຄວາມແລ້ວ ຊິມີຫຍັງແຕກຕ່າງລະຫວ່າງນອນຫຼັບກັບນອນຕາຍ? ຖ້າພວກເຮົາອອກມາສູ່ໂລກ ເຕີບໃຫຍ່ຂຶ້ນຢ່າງຊ້າໆ ພວກເຮົາຍັງສາມາດເຫັນຫຼາຍສິ່ງຫຼາຍຢ່າງທີ່ຢູ່ອ້ອມຕົວເຮົາ ແລະ ບາງທີຮອດຂັ້ນວ່າມີໂອກາດທ່ອງທ່ຽວໄປອ້ອມທົບຕາມລົມ ແລະ ໄປຕາມນ້ຳ. ນອນຫຼັບຢູ່ໃຕ້ພື້ນດິນນັ້ນ ພວກເຮົາພຽງແຕ່ເຫັນໂລກນ້ອຍໆ ໃນຄວາມຝັນ ທີ່

ເກີດຂຶ້ນຢູ່ໃນຫົວນ້ອຍໆ ຂອງພວກເຮົາ. ສ່ຽວເຮີຍ ພວກເຮົາຈຶ່ງຕັດສິນໃຈເພື່ອໃຫ້ຕົນເອງໄດ້ໃຫຍ່ຂຶ້ນ ເທື່ອເລັກເທື່ອໜ້ອຍ, ເດ່ຂຶ້ນໄປຫາຕາເວັນທີ່ອົບອຸ່ນ ແລະ ຈົບດີດວງນັ້ນ!"

ຕະຫຼອດເວລາທີ່ກອດແຂນພັ້ງຢູ່ນັ້ນ ພູ່ກິ-ໂນ-ໂຕະ ງຶກຫົວຂຶ້ນລົງຊ້າໆ.

" ເອີແມ່ນແທ້! ເອົາແຕ່ນອນຫຼັບກໍ່ອາດຄືກັບນອນຕາຍ. ບັດນີ້ພວກເຮົາຕື່ນແລ້ວ ລົງມືເຮັດວຽກເທາະ, ຂໍໃຫ້ໃຫຍ່ກ້າໜ້າບານ ພາຍໃຕ້ແສງຕາເວັນອັນອົບອຸ່ນນີ້. ເອີ ເອີ ເຮົາຮູ້ສຶກມີເທື່ອມີແຮງຂຶ້ນແລ້ວໃດນີ້!"

" ແມ່ນແມ່ນ!" ຕົນໂປໂປະຕອບ ທັງຍິ້ມສິດຊື່ນ.

ຕົນໂປໂປະ ແລະ ພູ່ກິ-ໂນ-ໂຕະ ຮ້ອງເພງ ທັງພື້ອນແອະພື້ອນແອ່ນ ທັງປົ່ດດົນ ແລະ ຊາຍອອກຈາກຫົວ ແລະ ເລີ່ມຕົ້ນເຕີບໃຫຍ່ຂຶ້ນ. ຕາເວັນສ່ອງລົງມາເບິ່ງແລ້ວຍິ້ມໆ, ແລະ ມີເຜື້ອສີຂາວກ້ອນໃຫຍ່ລອຍກົງມາຫາສອງສ່ຽວ ຈາກສາຍພູສີຂຽວໆໄກໆພຸ້ນ. ເພື່ອຢຸດພັກຜ່ອນຢູ່ຊື່ເທິງຫົວພວກເຂົາ ແລ້ວທັງສອງພາກັນສິ່ງສຽງ ດັງຂຶ້ນເປັນເພງອັນມ່ວນຊື່ນ ຂະນະດຽວກັບພວກເຂົາກໍ່ໃຫຍ່ໂຕເຂັ້ມແຂງຂຶ້ນກວ່າເວລາໃດໆ. ຕໍ່ໄປພວກເຂົາອວ່າຍໜ້າໄປຫາຕາເວັນ ແລະ ຫຼັບຕາຂ້າງໜຶ່ງໄວ້ຊົ່ວໄລຍະສັ້ນໆ ແລ້ວກໍ່ຂະຍິບຕາໃສ່.







ຕອນນີ້ເອງ ປາດນ້ຳຜຶ້ງອຸ່ນໆແຫ່ງລະດູບານໃໝ່ສອງປາດຕົກລົງຖືກຫົວ ຕົ້ນໂປໂປະ ແລະ ພູ່ກິ-ໂບ-ໂຕະ ຜູ້ລະປາດ, ປາດນ້ຳພື້ງກະເດັນໄປ. ບໍ່ມີຄຳສັບໃດທີ່ຈະມາພັນລະນາໄດ້ວ່າ ປາດຜຶ້ງດັ່ງກ່າວນັ້ນເຢັນອອນຊອນແນວໃດ ເມື່ອສອງສ່ຽວຜູ້ເບີກບານໄດ້ສຳຜັດກັບມັນ.

ຕັ້ງແຕ່ເວລານັ້ນໄປ ຕົ່ນໂປ ໂປະ ແລະ ພູ່ກິ-ໂບ-ໂຕະ ເຕີບໃຫຍ່ຂຶ້ນໃຫຍ່ຂຶ້ນ ທັງເດ່ໄປຫາຕາເວັນ, ເດ່ໄປຫາຕາເວັນສະເໝີໆ ຢ່າງສິດຊື່ນເບີກບານ ແລະ ທັນມັງ. . .

“ເວລາໃດຂ້ອຍທວນຄືນຫຼັງ ເຖິງສິ່ງທີ່ເກີດຂຶ້ນກັບສອງສ່ຽວນັ້ນແລ້ວ, ປະກົດວ່າຫົວໃຈຂ້ອຍອີ່ມເອີບ ແລະ ດົດດ່ອງຄືກວາງນ້ອຍ. ແມ່ນລະ ມັນເປັນເລື່ອງອັດສະຈັນອີ່ຫຼືທີ່ເຕີບໃຫຍ່ຂຶ້ນຢ່າງບໍ່ຢຸດບໍ່ຢັ້ງ...”

ເມື່ອເວົ້າປະໂຫຍກເຫຼົ່ານັ້ນຄ່ອຍໆເບົາໆ “ ໃຜຜູ້ໜຶ່ງ ” ກໍ່ຫາຍໃຈອອກ ແລະ ສົ່ງສາຍລົມອຸ່ນໆອີກກະແສໜຶ່ງໃຫ້ໄປຕາມເສັ້ນທາງຂອງມັນ.

( ແຕ້ມຮູບປະກອບໂດຍ ລີວ ແຈ-ຊູ )

# ຕຳນານດາວປະຫຼາດ

ນະຈຸດໜຶ່ງຂອງກຸ່ມດາວ " ທາງຊ້າງເຜືອກ ", ຫ່າງອອກໄປໄກແສນໄກຈາກໂລກທີ່ພວກເຮົາຢູ່ນີ້ ມີດາວນ້ອຍດວງໜຶ່ງຊື່ວ່າດາວ " ປະຫຼາດ ". ດາວປະຫຼາດລ່ອງລອຍປົ່ນຊ້າໆ ຢູ່ທ່າມກາງດວງດາວຈຳນວນນັບບໍ່ຖ້ວນໃນເວຫາອັນດຳມືດ. ບໍ່ມີໃຜສາມາດເຫັນດາວດວງນີ້ ຖ້າໃຊ້ພຽງແຕ່ກ້ອງສ່ອງທຳມະດາ. ແນ່ນອນ ຈຳເປັນຕ້ອງໃຊ້ກ້ອງສ່ອງ ແຕ່ສິ່ງສຳຄັນຍິ່ງ ໃນການທີ່ຈະແນມເຫັນດາວປະຫຼາດນັ້ນ ຜູ້ເບິ່ງຕ້ອງເບິ່ງໂດຍຜ່ານກ້ອງສ່ອງດ້ວຍຈິດໃຈສະຫງົບ ແລະ ໃສແຈ້ງ.ດັ່ງນີ້ ຈຶ່ງພະຍາຍາມເບິ່ງດາວປະຫຼາດໂດຍຜ່ານແກ້ວອັນໃສແຈ້ງຂອງຈິດໃຈທ່ານເອງ...

ກ່ອນອື່ນໝົດ ຈົ່ງຄົ້ນຄວ້າເບິ່ງວ່າ ດາວນີ້ໄດ້ຊື່ມາຈັ່ງໃດ.

ປະຊາຊົນທີ່ອາໄສຢູ່ດາວດວງນີ້ ມັກເຮັດສິ່ງໃດສິ່ງໜຶ່ງປະຫຼາດສະເໝີ ແລະ ສຽງຮ້ອງ " ປະຫຼາດ! " ຍ້ານມ່ວນຊື່ນກໍ່ໄດ້ຍິນຕະຫຼອດປີ. ເອີ ແຕ່ວ່າສິ່ງທີ່ປະຫຼາດກວ່າໝູ່ຢູ່ດາວດວງນີ້ ແມ່ນມີຂອງປະຊາຊົນນັ້ນເອງ. ມັນເປັນສິ່ງແປກຕ່າງແທ້ໆ ! ເວລາໃດທີ່ຄົນຄິດຢາກເຮັດສິ່ງໃດ

ສິ່ງໜຶ່ງ ສິ່ງນັ້ນກໍ່ຈະຖືກເຮັດຂຶ້ນມາທັນທີ ໂດຍມີດັ່ງກ່າວເຊັ່ນ: ກ້ອງສ່ອງ, ເງິນ, ສະແຕມໄປສະນີ, ລົດຖີບ, ເຂົ້າໜົມປັ້ງ, ໂມງ, ຄີມໜີບ ແລະຫຼາຍສິ່ງຫຼາຍຢ່າງ. ຫຼາຍສິ່ງຫຼາຍຢ່າງຍັງຖືກເຮັດຂຶ້ນທັນທີໂດຍ ຄຳເວົ້າ.

" ຄຳເວົ້າເປັນສິ່ງທີ່ໃຊ້ເປັນປະໂຫຍດຫຼາຍ "

" ຄຳເວົ້າ ສາມາດເຮັດສິ່ງທີ່ພວກເຮົາເບິ່ງບໍ່ເຫັນ, ສ່ວນມີສາມາດເຮັດສິ່ງທີ່ແນມເຫັນຂຶ້ນມາຈາກຄຳເວົ້າ "

ໂດຍທີ່ປະຊາຊົນທັງເວົ້າທັງເຮັດສັບພະສິ່ງແປກປະຫຼາດ ປີຕົດປີຕໍ່ຈັ່ງຊັ້ນຕະຫຼອດມາ ບໍ່ດົນດາວນີ້ກໍ່ເອີ້ນກັນວ່າ " ປະຫຼາດ ". ສຳລັບພວກເຮົາທີ່ຢູ່ເທິງດາວໂລກ ມັນກໍ່ຄືວ່າເປັນເລື່ອງມະລຳມະລອຍ, ແຕ່ຢູ່ພຸ້ນເທິງດາວປະຫຼາດ ຕະຫຼອດມື້ມີແຕ່ສຽງກ້ອງສະນັ່ນຂອງຄຳວ່າ" ປະຫຼາດ! ປະຫຼາດ! "ດັງກັງວານໄປທົ່ວທຸກແຫ່ງ.

✻

ເປັນເວລາດົນນານມາແລ້ວ ທີ່ປະຊາຊົນຢູ່ດາວປະຫຼາດແຍງເບິ່ງດາວດວງສຸກໃສສີຂຽວໆຂອງພວກເຮົາ ນັ້ນຄືດາວໂລກນີ້ເອງ. ປະກົດວ່າບໍ່ມີໃຜຈັກຄົນ ທີ່ຮູ້ວ່າຜູ້ໃດເປັນຄົນບອກເຂົາເຈົ້າກ່ຽວກັບດາວໂລກນີ້, ແຕ່ແນວໃດກໍ່ຕາມ ດາວໂລກກໍ່ເປັນສິ່ງທີ່ເຂົາເຈົ້າເວົ້າຮອດເວົ້າເຖິງຫຼາຍກວ່າສິ່ງອື່ນໃດ. ເວົ້າແທ້ແລ້ວ ດາວໂລກແຕກຕ່າງຢ່າງຂາດຂັ້ນ ກັບດາວປະຫຼາດ ອັນເປັນດາວທີ່ປົກຄຸມໄປດ້ວຍເນື້ອທີ່ແຫ້ງແລ້ງແບບທະເລຊາຍ.



ໃນບັນດາດາວທັງໝົດທີ່ຢູ່ໃນຫ້ວງອະວະກາດອັນໄພສານນີ້ ມີແຕ່ດາວໂລກເທົ່ານັ້ນ ທີ່ມີນໍ້າສີຟ້າເປັນປະກາຍກັບປ່າໄມ້ ແລະ ອາກາດສົດຊື່ນ.

ເວົ້າກັນວ່າ ຢູ່ດາວອັນແມ່ນໜ່ວຍໂລກນີ້ ມີສັດທີ່ໜ້າອັດສະຈັນທີ່ສຸດ ໃນຈັກກະວານນັ້ນແມ່ນສັດມະນຸດ, ແມ່ນຄົນເດີນດິນ. ອັນທີ່ໜ້າຕື່ນເຕັ້ນເປັນພິເສດກໍ່ແມ່ນຄໍາເວົ້າ ທີ່ຄົນເດີນດິນປະດິດຂຶ້ນ ແລະ ວິທີທີ່ພວກເຂົາເຈົ້າຫາລ້ຽງຊີບໂດຍໃຊ້ມື. ເປັນເລື່ອງຈິງບໍ່ໜ້ອຍເລີຍທີ່ຈະເຮັດໃຫ້ຜູ້ໃດຜູ້ໜຶ່ງ ໃນຈັກກະວານນີ້ໝົດລົມຫາຍໃຈ-ຈັ່ງແມ່ນປະຫຼາດອີ່ຫຼີ.

ປະຊາຊົນຢູ່ດາວປະຫຼາດ ມີຊີວິດຢ່າງເບີກບານມ່ວນຊື່ນ, ປາສະຈາກຄວາມວິຕົກກັງວົນ ແລະ ມີອາຍຸຍືນໂດຍບໍ່ເຖົ້າບໍ່ແກ່. ເຖິງປານນັ້ນກໍ່ຕາມ ມີສິ່ງໜຶ່ງທີ່ເຂົາເຈົ້າປາຖະໜາຍິ່ງກວ່າສິ່ງອື່ນໃດ – ນັ້ນຄືຢາກພົບພໍ້ກັບປະຊາຊົນຢູ່ດາວໂລກ.

ໂຊກບໍ່ດີປານໃດ, ຄວາມປາຖະໜາອັນຍິ່ງໃຫຍ່ນີ້ບໍ່ກັບກາຍເປັນຄວາມຈິງຢ່າງງ່າຍດາຍໄດ້ເລີຍ. ບັນຫາໃຫຍ່ກວ່າໝູ່ກໍ່ແມ່ນເຂົາເຈົ້າບໍ່ມີສິ່ງໃດທີ່ຈະຂີ່ເດີນທາງຂ້າມອະວະກາດອັນໄກແສນໄກ ນັບເປັນລ້ານໆປີແສງ. ດັ່ງນີ້ ທຸກໆຄົນຢູ່ເທິງດາວປະຫຼາດເຊັ່ນເຈົ້າຊີວິດ, ປະຊາຊົນ, ໝາ ແລະ ແມວ, ແມ່ນແຕ່ແມງສາບ ຕ່າງກໍ່ພາກັນຄອງຖ້າຢ່າງໃຈຈົດໃຈຈໍ່ວັນທີ່ຂ່າວຈາກດາວໂລກ ຈະໄປເຖິງ.



ວັນນັ້ນເປັນວັນທີສິບເກົ້າ, ເດືອນກັນຍາ ປີ 1999, ຕາມປະຕິທິນຂອງດາວໂລກພວກເຮົາ. ທ້ອງຟ້າເໜືອດາວປະຫຼາດສົດໃສ ແລະຮຸ່ງແຈ້ງພ້ອມກັບມີເຝືອສີຂາວລອຍຢູ່ສູງໆ ຕາມທີ່ເຄີຍເປັນມາ.

ທັນໃດ ຈາກຟາກຟ້າສູງໆ ດ້ານຕາເວັນອອກ ມີຈະຫຼວດສີເງິນເຫຼື້ອມໆ ພຸ່ງມາດ້ວຍຄວາມໄວຢ່າງໜ້າອັດສະຈັນ. ຜູ້ທຳອິດທີ່ເຫັນສິ່ງແປກປະຫຼາດນີ້ແມ່ນ ດັອກເຕີ ໄອແລສ ຊຶ່ງຢູ່ທີ່ຫໍສ່ອງດາວ.

" ໂຫ້ ! ປະຫຼາດ ! " ເຂົາຮ້ອງຂຶ້ນ ແລ້ວອວ່າຍໄປຈັບໂທລະສັບຢ່າງວ່ອງໄວ ແລະ ເວົ້າກັບລັດຖະມົນຕີກະຊວງຖະແຫຼງຂ່າວຢ່າງຕື່ນເຕັ້ນ.

" ແມ່ນຫຍັງເກາະ ດຣ. ໄອແລສ? ເວົ້າແຮງໆ, ເວົ້າລະອຽດຕື່ມອີກ, ຂ້ອຍຟັງບໍ່ເຂົ້າບໍ່ອອກ ຈັກເຈົ້າເວົ້າຫຍັງບຸ, ພະຍາຍາມຢ່າໃຫ້ສຽງສັ່ນ. ແຮ່ງເປັນເລື່ອງປະຫຼາດເຈົ້າກໍ່ແຮ່ງເວົ້າໃຫ້ແຈ່ມແຈ້ງຄັກໆ " ລັດຖະມົນຕີກະຊວງຖະແຫຼງຂ່າວວ່າ.

" ແມ່ນລະ, ສິ່ງນັ້ນເຫຼື້ອມໆ ຄືເງິນ. . . ໝາຍຄວາມວ່າ ສິ່ງນັ້ນມັນເຫຼື້ອມມາປາໆ „ ດຣ. ໄອແລສ ເວົ້າກະຕຸກກະຕັກ ທັງເຊັດເຫື່ອຕາມໜ້າຜາກ. " ເບິ່ງຕາມຄວາມໄວ ແລະ ທິດທາງທີ່ມັນບິນມາແລ້ວ ແນ່ນອນວ່າວັດຖຸທີ່ຄືຈະຫຼວດນີ້ແມ່ນຂອງຂວັນຈາກດາວໂລກ. ແມ່ນລະທ່ານລັດຖະມົນຕີ ທີ່ເຄົາລົບ, ປະກົດວ່າ ຄຳທຳນາຍໃນຕຳນານບູຮານກັບກາຍເປັນຈິງຂຶ້ນມາແລ້ວບາດນີ້ ".

" ເອົາ, ຈັ່ງຊັ້ນ ວັດຖຸທີ່ບິນຢູ່ຍ່ານໃດດຽວນີ້ ? ບອກແດ່ວ່າ ເຮັດ



ຈັ່ງໃດ ພວກເຮົາຈະຈັບຈຸດມັນໄດ້ ຖ້າສິ່ງນັ້ນບິນຂ້າມທ້ອງຟ້າໄປໄວພິລຶກປານນັ້ນ ? "

" ທ່ານລັດຖະມຸນຕີ, ມັນແມ່ນໂຊກດີຂອງພວກເຮົາ ທີ່ວັດຖຸໄດ້ເຂົ້າສູ່ວົງໂຄຈອນອ້ອມດາວປະຫຼາດແລ້ວ ".

ລັດຖະມຸນຕີກະຊວງຖະແຫຼງຂ່າວຕື່ນເຕັ້ນຢ່າງໃຫຍ່ ຈົນວ່າເຮັດໂທລະສັບຫຼຸດມື ແລະ ແລ່ນວິນໄປວຽນມາຢູ່ພາຍໃນຜາສາດຂະໜາດໃຫຍ່ທັງຮ້ອງໂຮຄືລີງປ່າ, ໜ້າຂອງເຂົາແດງຮອບໆ , ແລະ ແລ້ວກໍ່ແລ່ນເຂົ້າໄປຫາເຈົ້າຊີວິດ. ຂະນະທີ່ເຂົາແຈ້ງຂ່າວດ້ວຍຄວາມຕື່ນເຕັ້ນນັ້ນ ເສນາອາມາດທີ່ມາຂາບໄຫວ້ເຈົ້າຊີວິດຕ່າງກໍ່ລືມຄືງ ເພາະຕື່ນເຕັ້ນສຸດຂີດ ເລີຍພາກັນຕັ້ງຫົວຜັກຫງຽມ ແລະ ນອນສັ່ນແດັດໆ ຢ່າງດີອົກດີໃຈຢູ່ເທິງພົມຜືນໜາສີແດງຂອງເຈົ້າຊີວິດ. ເອີແມ່ນອີ່ຫຼີ, ເຂົາເຈົ້າໃຈຈົດໃຈຈໍ່ມາຕັ້ງດົນນານທີ່ຈະຕິດຕໍ່ພົວພັນກັບປະຊາຊົນຢູ່ດາວໂລກ.

ເຈົ້າຊີວິດແຫ່ງດາວປະຫຼາດ ບໍ່ເປັນຄົນຄືດັ່ງລັດຖະມຸນຕີກະຊວງຖະແຫຼງຂ່າວຂອງພະອົງຫຼືບ່າວໄພ່ທັງຫຼາຍ ເພາະໃນຈຳນວນປະຊາຊົນທັງໝົດທີ່ອາໄສຢູ່ດາວດວງນີ້ ພະອົງເປັນຄົນສະຫງົບສະຫງ່ຽມ ແລະ ທຸ່ນທ່ຽງກວ່າໝູ່. ເພາະແນວນັ້ນລະ ພະອົງຈຶ່ງເປັນເຈົ້າຊີວິດ. ພະອົງນັ່ງຢູ່ນິດໆ ແລະ ຟັງລາຍງານຂອງລັດຖະມຸນຕີ, ພະອົງເໜັງຕີງຍົກຍັກເປັນບາງຄັ້ງບາງຄາວເທົ່ານັ້ນ ແລະ ເວົ້າອອກມາສຽງຄ່ອຍໆ: " ອືອອ " " ຮືຣຣ ".

ພວກເສນາອາມາດທີ່ນັ່ງຢູ່ໃກ້ໆ ເຈົ້າຊີວິດນັ້ນ ຕ້ອງໄດ້ລະມັດລະ

ວັງທີ່ສຸດ ເພື່ອບໍ່ໃຫ້ເພິ່ນຕື່ນເຕັ້ນຕົກໃຈ, ດັ່ງນີ້ເພິ່ນຈຶ່ງມີຜ້າມ່ານດຳນ້ອຍໆ ຫ້ອຍໄວ້ເໜືອຕາ. ຫູຂອງເພິ່ນມີຍອງຝ້າຍອັດໄວ້, ແລະ ປາກນັ້ນກໍ່ມີຜ້າຢາງຕິດໄວ້ຫຼາຍແຜ່ນ ເພື່ອບໍ່ໃຫ້ເພິ່ນອ້າປາກອອກກວ້າງ. ເຖິງປານນັ້ນ ຈິດໃຈຂອງເພິ່ນກໍ່ບໍ່ອາດຖືກອັດອຳ ຫຼືບີບກົດເລີຍ...

ເມື່ອ ລັດຖະມົນຕີກະຊວງຖະແຫຼງຂ່າວລາຍງານສຸດ ເຈົ້າຊີວິດກໍ່ກ່າວຄຳປາໄສອອກທາງວິທະຍຸເປັນພິເສດ :

" ປະຊາຊົນແຫ່ງດາວປະຫຼາດທັງຫຼາຍ, ໃນທີ່ສຸດ ວັນນັ້ນກໍ່ມາເຖິງວັນທີ່ຄອງຄອຍກັນມາແຕ່ດົນແສນດົນ. ມັນເປັນວັນເວລາທີ່ຕຳນານກ່ຽວກັບໂລກໄດ້ເປັນທີ່ປະຈັກຄັກແທ້ແນ່ນອນ. ຜູ້ໃດຜູ້ໜຶ່ງຈະຕ້ອງຄວ້າເອົາຂອງຂວັນອັນນີ້ທີ່ມາຈາກດາວໂລກ ຊຶ່ງພວມໂຄຈອນອ້ອມດາວຂອງພວກເຮົາຢູ່ນີ້ ແລ້ວນຳລົງສູ່ພື້ນດິນ. ຂ້າພະເຈົ້າຂໍປະກາດວ່າ ບຸກຄົນໃດທີ່ນຳເອົາສິ່ງດັ່ງກ່າວລົງມາຢ່າງປອດໄພ ບຸກຄົນນັ້ນຈະໄດ້ຮັບການແຕ່ງຕັ້ງເປັນປະທານຄະນະກຳມາທິການວ່າດ້ວຍກິລະນີປະຫຼາດ ".

ໃນມື້ຖັດມານັ້ນໂລດ ປະຊາຊົນແຫ່ງດາວປະຫຼາດພາກັນສ້າງຍານອະວະກາດແບບຄືວ່າວ ແລ້ວປ່ອຍຂຶ້ນໄປຕາມກະແສລົມ, ແລະ ແລ້ວຈະຫຼວດສີເງິນກໍ່ຖືກນຳເອົາລົງມາໄດ້. ຢູ່ຈຸດທີ່ຈະຫຼວດລົງສູ່ພື້ນດິນນັ້ນເພິ່ນໄດ້ສ້າງສິ່ງເປັນອະນຸສອນຂຶ້ນຢ່າງໄວວາ ໂດຍສະຫຼັກຂໍ້ຄວາມໄວ້ດັ່ງນີ້:








ມື້ຕໍ່ມາ ປະຊາຊົນແຫ່ງດາວປະຫຼາດທັງໝົດ ພາກັນມາຫຸ້ມເບິ່ງສິ່ງທີ່ຄ້າຍຄືຈະຫຼວດຢູ່ກະໂຕບ່ອນທີ່ມັນລົງມາສູ່ພື້ນດິນນັ້ນ. ເຂົາເຈົ້າເຝົ້າເບິ່ງຢູ່ທັ້ນວັນຕິດວັນຕໍ່ ທັງພໍອົກພໍໃຈຫຼາຍໃນການໄດ້ເບິ່ງສິ່ງທີ່ແສນປະຫຼາດນີ້. ເນື່ອງຈາກວ່າມີປະຊາຊົນມາໂຮມຢູ່ບ່ອນດຽວຫຼາຍໂພດໄປເລີຍເຮັດໃຫ້ດາວເສຍຄວາມດຸ່ນດ່ຽງ ແລະ ເລີ່ມຕົ້ນເດື່ອງວູບອອກນອກເສັ້ນໂຄຈອນ. ວັນ ແລະ ຄືນ, ຄວາມສະຫວ່າງ ແລະ ຄວາມມືດຜ່ານມາແລະ ຜ່ານໄປຢ່າງໄວວາຜິດປົກກະຕິ ແຕ່ປະຊາຊົນປະກົດວ່າບໍ່ສັງເກດເຫັນ, ເຂົາເຈົ້າມົວນຳແຕ່ສິ່ງປະຫຼາດໃໝ່ອັນນີ້.

ຄືນໜຶ່ງ ເດືອນຫງາຍ, ດວງດາວໃນກຸ່ມດາວຫາງຊ້າງເຜືອກ ສົ່ງແສງເຫຼື້ອມຍິບຍັບຢູ່ເທິງຟ້າ, ຂະນະນັ້ນເອງ ເຈົ້າຊີວິດຂຶ້ນໄປເທິງແທ່ນທີ່ສ້າງຂຶ້ນສຳລັບການຊຸມນຸມຄັ້ງຍິ່ງໃຫຍ່ນີ້. ເພິ່ນອວ່າຍໜ້າໄປຫາວັດຖຸທີ່ຈອດຢູ່ຢ່າງມິດງຽບກາງແທ່ນແລ້ວກົ້ມຫົວລົງຢ່າງນອບນ້ອມ, ແລ້ວກໍ່ຍົກມືຂວາຂຶ້ນ ແລະ ເລີ່ມຕົ້ນກ່າວຄຳປາໄສ. ມວນຊົນຈຳນວນໄພສານ ອັນມີຄົນຂາຍເຄື່ອງຍ່ອຍ, ຊ່າງແປງລົດຖີບ, ນັກສຶກສາ, ຜູ້ເຖົ້າທັງຍິງທັງ

ຊາຍ ແລະ ປະ... ໃຫ້ວ່າປະຊາຊົນທັງໝົດໃນດາວປະຫຼາດນັ້ນແຫຼະຕ່າງ
ກໍ່ພົ້ງຢ່າງຕັ້ງອົກຕັ້ງໃຈອີ່ຫຼີອີ່ຫຼໍ່.

" ເຫີງນານມາແລ້ວ, ເອີ ເຫີງນານອີ່ຫຼີອີ່ຫຼໍ່..." ເຈົ້າຊີວິດກ່າວ ແລະ ຢຸດເພື່ອດື່ມນ້ຳເຢັນໆ " ພວກເຮົາປະຊາຊົນແຫ່ງດາວປະຫຼາດຕ່າງກໍ່ເຝົ້າຖະໜອມໃຈຈົດໃຈຈໍ່ນຳດາວທີ່ເອີ້ນວ່າໂລກ. ພວກທ່ານທັງໝົດຮູ້ແລ້ວວ່າ ພວກເຮົາຕ່າງກໍ່ເຄົາລົບນັບຖືດາວໂລກ ແລະ ຖະຫວິນຫາທີ່ຈະໄດ້ຕິດຕໍ່ພົວພັນກັບປະຊາຊົນດາວໂລກ "

ຮອດຕອນນີ້ ມວນຊົນກໍ່ສົ່ງສຽງຮ້ອງໂຮ ດ້ວຍຄວາມຍິນດີຊົມຊື່ນ ແລະ ຕົບມືດັງພົ່ດສະນັ່ນ. ເຈົ້າຊີວິດເວົ້າຕໍ່ :

" ດາວໂລກ ເປັນສີຂຽວ ສົດໃສ ພ້ອມກັບມີມະຫາສະໝຸດໃສເຫຼື້ອມຍິບຍັບຢູ່ໃຕ້ເມກສີຂາວ, ແລະ ມີປ່າໄມ້ຂຽວອຸ່ມທຸ່ມທີ່ອຸດົມ ໄປດ້ວຍສັດນາໆ ຊະນິດ ນີ້ລະ ຄືຕຳນານອັນຍິ່ງໃຫຍ່ຂອງຈັກກະວານ. ແມ່ນແລ້ວໃນທົ່ວຈັກກະວານອັນກວ້າງໃຫຍ່ໄພສານນີ້ ບໍ່ມີບ່ອນໃດທີ່ຈະໄປທຽບເທົ່າກັບດາວໂລກທີ່ມີທຳມະຊາດສວຍສົດງົດງາມເປັນໜ້າອັດສະຈັນ. ມັນຕ້ອງແຕກຕ່າງກັບດາວພວກເຮົາຢ່າງຂາດຂັ້ນ ເພາະດາວພວກເຮົານີ້ ດິນແຫ້ງແລ້ງແຜ່ລາມໄປທົ່ວທຸກທິດທຸກທາງ ຢ່າງບໍ່ມີບ່ອນສິ້ນສຸດ. ແນວໃດກໍ່ຕາມ ຍັງມີບາງສິ່ງບາງຢ່າງຢູ່ດາວໂລກທີ່ຍິ່ງປະຫຼາດກວ່າທຳມະຊາດອີກ "

ຮອດຕອນນີ້ ປະຊາຊົນທັງໝົດ ແຫ່ງດາວປະຫຼາດສົ່ງສຽງຮ້ອງປະສານໄປພ້ອມກັບເຈົ້າຊີວິດ :

" ນັ້ນລະ ຄືປະຊາຊົນ
ປະຊາຊົນແຫ່ງດາວໂລກ
ໃນຈຳນວນສັບພະສັດທັງໝົດແຫ່ງຈັກກະວານ
ພວກເຂົາເປັນຜູ້ໃຊ້ມືສ້າງສິ່ງທີ່ໜ້າງຶດງໍ້ທີ່ສຸດ.
ຄຳເວົ້າຂອງເຂົາສະແດງຄວາມສະຫຼຽວສະຫຼາດ "

ຂະນະທີ່ສຽງຮ້ອງນີ້ດັງກ້ອງໄປທົ່ວດາວປະຫຼາດນັ້ນ ສາວນ້ອຍດວງຕາໃຫຍ່ທີ່ຢືນຢູ່ໃກ້ໆແທ່ນກໍ່ເວົ້າຂຶ້ນດ້ວຍທ່າທາງສົງອາຍໆ: " ຂໍນ້ອມຂາບພະອົງ, ຂ້ານ້ອຍຢາກຂໍຊາບຕື່ມກ່ຽວກັບຫົວຂອງປະຊາຊົນແຫ່ງດາວ ໂລກ. ແມ່ນຫົວນັ້ນບໍ່ ທີ່ເຮັດໃຫ້ມີການເຄື່ອນໄຫວ ແລະເຮັດໃຫ້ມີ ຄຳເວົ້າ ? "

" ແມ່ນລະ, ແມ່ນອີ່ຫຼີ " ເຈົ້າຊີວິດວ່າ " ພວກເຮົາຈະໄຂເບິ່ງຂອງຂວັນດຽວນີ້ ແລະ ຈົ່ງພ້ອມກັນມ່ວນຊື່ນຕື່ນເຕັ້ນ ກັບສິ່ງທີ່ຈະພົບຢູ່ໃນນັ້ນ ຂ້າພະເຈົ້າຄິດວ່າ ມື້ນີ້ ພວກເຮົາອາດຈະພົບ ຫຼັກຖານທີ່ວ່າປະຊາຊົນແຫ່ງດາວໂລກ ມີໃບໜ້າຄືກັບພວກເຮົາ, ແລະ ເຄື່ອນເໜັງຮ່າງກາຍ ແລະມີແບບດຽວກັບພວກເຮົາ. ແນວໃດກໍ່ຕາມ, ຫົວທີ່ບັນຊາໃຫ້ມືພວກເຂົາເຄື່ອນເໜັງນັ້ນ ຕ້ອງແຕກຕ່າງຢ່າງຂາດຂັ້ນກັບສິ່ງໃດໆ ທັງໝົດ ເທົ່າທີ່ພວກເຮົາສຳນຶກວາດພາບໄດ້. ດັ່ງນັ້ນ, ເຫັນກັນແລ້ວວ່າຂ້າພະເຈົ້າຮູ້ເລື່ອງຫົວມະນຸດພຽງໜ້ອຍດຽວເທົ່ານັ້ນ ".

" ແລ້ວບາດນີ້ ພວກເຮົາມາພາກັນເບິ່ງຂອງຂວັນອັນນີ້ທີ່ມາຈາກດາວໂລກນີ້ "

ເຈົ້າຊີວິດໃຫ້ສັນຍານແກ່ພວກທີ່ກຽມພ້ອມຢູ່ໃກ້ໆ ຊຶ່ງມີທໍ່ນ້ຳ ແລະ ຈັກດູດນ້ຳໃຫ້ເລີ່ມປະຕິບັດໜ້າທີ່. ຖ້າສັນຍານດັ່ງກ່າວບໍ່ແມ່ນເພື່ອບອກພວກນັ້ນແລ້ວ ສາວນ້ອຍທີ່ຢືນຢູ່ໃກ້ແທ່ນອາດຈະຈີມນ້ຳເຫື່ອທີ່ໄຫຼອອກມາ ຈາກຮ່າງກາຍຂອງເຈົ້າຊີວິດພຸ້ນແຫຼະ. ແລ້ວເພິ່ນກໍ່ສືບຕໍ່ກ່າວຄຳປາໄສທີ່ຍາວທີ່ສຸດ ຍິ່ງໃຫຍ່ທີ່ສຸດ ເທົ່າທີ່ເຄີຍກ່າວມາຢູ່ດາວປະຫຼາດໜ່ວຍນີ້.

" ຂ້າພະເຈົ້າແນ່ໃຈວ່າ ພວກເຮົາທັງໝົດ ຕ່າງກໍ່ໃຈຈົດໃຈຈໍ່ວ່າຈະແມ່ນສິ່ງປະຫຼາດແນວໃດ ທີ່ເພື່ອນພວກເຮົາສົ່ງມາຈາກດາວສີຂຽວອຸ່ມທຸ່ມໜ່ວຍນັ້ນ. ຈົ່ງເອົາວັດຖຸນີ້ມາເຜີຍອອກເບິ່ງຕໍ່ໜ້າຕໍ່ຕາ ປະຊາຊົນທັງໝົດເລີຍ. ຂ້າພະເຈົ້າຄິດວ່າ ແລ້ວພວກເຮົາກໍ່ຈະຫາຍໃຈເຂົ້າປອດດ້ວຍຄວາມໂລ່ງອົກໂລ່ງໃຈໃນວັນອັນຕື່ນເຕັ້ນນີ້ ແລະ ກຽມຕົວສ້າງສາອະນາຄົດອັນສະຫວ່າງສະໄຫວ ໃນດາວພວກເຮົານັບແຕ່ມື້ອື່ນນີ້ເປັນຕົ້ນໄປ. ກະໂຕດາວປະຫຼາດເອງນີ້ແຫຼະ ຄືຄວາມສຸກອັນ.ຕົມປຽມຂອງພວກເຮົາ ".

ພໍຄຳເວົ້າຄຳສຸດທ້າຍມິດາງບລົງ ເຈົ້າຊີວິດກໍ່ບີດມືງກຸດອອກແລ້ວໂຍນຂຶ້ນໄປສູງໆ ເໜືອຫົວຜູ່ງຊົນ. ຕໍ່ມາເພິ່ນໄປນັ່ງລົງບ່ອນຄັກໆ ເພື່ອເບິ່ງວັດຖຸສີເງິນນັ້ນໃຫ້ເຕັມຕາ.

"ເຂົ້າມາໃກ້ໆ ບັນດາທ່ານທີ່ປຶກສາມະຫາກະສັດແຫ່ງດາວປະຫຼາດ ".

ຜູ້ທີ່ນຸ່ງຊຸດຂາວຈຳນວນສີ່ຄົນ ກົ້ມຫົວເຄົາລົບເຈົ້າຊີວິດຢ່າງນອບນ້ອມ ແລ້ວຍ່າງຂຶ້ນເທິງແທ່ນ ດ້ວຍອາການສະຫງົບສະຫງ່ຽມ. ຖົງເຂົ້າ

ເຈົ້າເຕັມໄປດ້ວຍເຄື່ອງມືເຊັ່ນ ເຫຼັກໄຂຄວງ, ເຫຼັກສະວ່ານ ແລະ ເລື່ອຍ. ທັງສີ່ຄົນຈັບເອກະສານເປັນຊຸດໜາໆ ແລະ ເບິ່ງຊິງທຳຕົວເປັນຜູ້ສະຫຼາດຫຼັກແຫຼມ ໃຫ້ຫຼາຍທີ່ສຸດ. ແນວໃດກໍ່ຕາມ ບໍ່ມີຈັກຄົນເລີຍທີ່ຈະບໍ່ຂາສັ່ນດ້ວຍຄວາມຕື່ນເຕັ້ນ.

ຈັ່ງແມ່ນເຂົາເຈົ້າປັ່ງມລົ້ນໄປດ້ວຍຄວາມຮອບຮູ້ ແລະ ຄວາມສະຫຼຽວສະຫຼາດພິລຶກພິລ້ຳ ຈົນວ່າຖ້ວມຫົວແລ້ວໄຫຼອອກມາແປດເປື້ອນຕາມໜ້າແທ່ນ. ມີຄົນກຸ່ມໜຶ່ງຖືຜ້າເສດກຽມພ້ອມເພື່ອເຊັດຖູ ຕາມແທ່ນໃຫ້ສະອາດ.

ທຳອິດທີ່ປຶກສາໃຫຍ່ສີ່ທ່ານນັ້ນ ຈັບແວ່ນຕາອອກມາໃສ່ແລ້ວພິຈາລະນາເບິ່ງວັດຖຸ ແຕ່ຫົວຮອດຫາງ, ໃຊ້ມືລູບໆ ຄຳໆ ບ່ອນນັ້ນບ່ອນນີ້ຢ່າງລະມັດລະວັງ. ຕໍ່ໄປເຂົາເຈົ້າກໍ່ເລີ່ມໃຊ້ເລື່ອຍ ເຮັດໃຫ້ປະກາຍໄຟຊຸຫຼົ່ນລົງພື້ນ. ບໍ່ດົນ, ເລື່ອຍຂອງເຂົາເຈົ້າກໍ່ກະທົບກັບບາງສິ່ງທີ່ແຂງເປັນພິເສດ ເຂົາເຈົ້າຈຶ່ງວາງມື ເພື່ອໄປປຶກສາກັນ ແລະ ເປີດເບິ່ງເອກະສານ, ແລ້ວກໍ່ລົງມືເຮັດວຽກອີກໃໝ່ ດ້ວຍເຄື່ອງມື, ທັງເລື່ອຍທັງເຈາະ ດ້ວຍສະວ່ານຢ່າງເອົາການເອົາງານ ຈົນວ່າໃນທັນໃດກໍ່ປະກົດເຫັນຮູນ້ອຍໆ.

" ໂທທທ ! " " ອຸຍ ! ! " " ອືຮື ! " ແລະ ຄຳອຸທານອື່ນໆຫຼາຍໆ ຄຳດັງມາຈາກປະຊາຊົນຈຳນວນຫຼວງຫຼາຍ.

ໃຜເດ ຈະຄາດຄິດວ່າຕໍ່ໄປຂ້າງໜ້າ ແມ່ນຫຍັງຈະເກີດຂຶ້ນ? ! ແລະ ສິ່ງທີ່ໄຫຼອອກຈາກຮູ ຕາມຈະຫຼວດນັ້ນແມ່ນແປ້ງສີຂາວເຫຼື້ອມຍິບ

ຍັບ, ມັນໄຫຼອອກຢ່າງຊ້າໆ ແລະ ງຽບໆ. ເຈົ້າຊີວິດເປັນຜູ້ທຳອິດທີ່ເຫັນສິ່ງດັ່ງກ່າວ, ເພິ່ນແລ່ນໄປກຳເອົາແປ້ງປະຫຼາດແລ້ວຊູມືຂຶ້ນ ເພື່ອໃຫ້ປະຊາຊົນເບິ່ງ.

ທັນໃດນັ້ນ ລົມພັດມາຢ່າງແຮງ ແລະ ເປົ່າແປ້ງໃຫ້ປິວໄປກາງອາກາດ. ແປ້ງຈຳນວນໜ້ອຍໜຶ່ງປິວໄປ ຖືກໜ້າເຈົ້າຊີວິດ ແລະ ທັນໃດນັ້ນໂລດ ເພິ່ນກໍ່ຮ້ອງອອກມາແຮງໆ ແລ້ວກໍ່ລົ້ມທາງາຍຫຼັງລົງກັບແທ່ນນັ້ນເອງ.

ໃນບັນດາທີ່ປຶກສານັ້ນ ມີສາມຄົນຄິດວ່າ ເຈົ້າຊີວິດພຽງແຕ່ເປັນລົມຊື່ໆ ຍ້ອນຕື່ນເຕັ້ນໂພດ ຈຶ່ງພ້າວພາກັນກວາດເກັບເອົາແປ້ງໄດ້ໜ້ອຍໜຶ່ງ ແລ້ວເອົາໃຫ້ຄົນເບິ່ງ. ເຊັ່ນດຽວກັນ ເຂົາເຈົ້າຕ່າງກໍ່ລົ້ມລົງຕຶ້ງຕຶ້ງໄປຕາມໆ ກັນ.

" ອຸຍ ! " " ໂອ ! ! " " ໂອຍຍ ! " ຝູງຊົນສິ່ງສຽງຮ້ອງອຸທານດ້ວຍຄວາມປະຫຼາດ ແລະ ແລ້ວເຂົາເຈົ້າກໍ່ພ້ອມກັນຮ້ອງເພງ :

" ມະນຸດ ! ມະນຸດ ! ມະນຸດ !
ຜູ້ປົກຄອງກຸ່ມດາວຊ້າງເຜືອກ ".

ບັດນີ້ ທີ່ປຶກສາທີ່ຍັງເຫຼືອຢູ່ຄົນດຽວນັ້ນ ບໍ່ແມ່ນຜູ້ຮອບຮູ້ຫຼາຍ ແຕ່ເຂົາເປັນຜູ້ທີ່ສະຫຼາດຫຼວງຫຼາຍ.




JUSXAR
E-1997
0235H

ຢູ່ດາວປະຫຼາດນີ້ ມີທີ່ປຶກສາຢູ່ສອງປະເພດຄື ບຸລຸດຜູ້ຮອບຮູ້ ທີ່ເອີ້ນກັນວ່າ ນັກວິທະຍາສາດ ແລະ ບຸລຸດຜູ້ມີປັນຍາ ທີ່ເອີ້ນກັນວ່ານັກປັດຊະຍາ.

ນັກວິທະຍາສາດຮູ້ຈັກຫຼາຍສິ່ງຫຼາຍແນວ, ສ່ວນນັກປັດຊະຍານັ້ນເວົ້າກັນວ່າ ເປັນຜູ້ຊຳນິຊຳນານໃນການນຳເອົາຄວາມຮູ້ໄປໃຊ້ເພື່ອໃຫ້ປະຊາຊົນມີຄວາມສຸກ. ສັງຄົມຢູ່ດາວປະຫຼາດ ໄດ້ຮັບການສ້າງຕັ້ງຂຶ້ນ ແລະພັດທະນາໃຫ້ຈະເລີນ ໂດຍພວກທີ່ປຶກສາສອງປະເພດດັ່ງກ່າວເຮັດວຽກຮ່ວມກັນ. ແຕ່ໂຊກບໍ່ດີເລີຍ, ໃນວັນອັນຕື່ນເຕັ້ນສຸດຂີດນີ້ ທີ່ປຶກສາສາມຄົນນັ້ນບໍ່ເອົາຫົວຊາຕໍ່ຄຳແນະນຳຂອງບຸລຸດຜູ້ມີປັນຍາຜູ້ດຽວນີ້ ຊຶ່ງໄດ້ແນະນຳເຂົາເຈົ້າວ່າໃຫ້ດຳເນີນໜ້າທີ່ຕໍ່ໄປຢ່າງສະຫງົບງຽບ ແລະ ຢ່າງລະມັດລະວັງ, ທັງປຶກສາຫາລືກັນທຸກໆ ບາດກ້າວກ່ອນທີ່ຈະລົງມື.

ຂະນະທີ່ປະຊາຊົນແຫ່ງດາວປະຫຼາດ ເວົ້າລົມກັນຢ່າງຕື່ນເຕັ້ນນັ້ນບຸລຸດຜູ້ມີປັນຍາ ຖືກປ່ອຍໃຫ້ຢູ່ຕາມລຳພັງຄົນດຽວ ເພື່ອຈະຄົ້ນຄວ້າເບິ່ງວ່າ ເປັນຫຍັງເຈົ້າຊີວິດ ແລະ ທີ່ປຶກສາສາມຄົນນັ້ນຈຶ່ງລົ້ມລົງພ້ອມທັງສະແດງອາການ ເຈັບປວດແບບນັ້ນ ທີ່ໃບໜ້າ. ດ້ວຍທ່າທາງໜຸ່ມນວນ ເຂົາເອົາມືແລ້ວກໍ່ເອົາຫູ ແປະໃສ່ເອິກຂອງຜູ້ນັ້ນຜູ້ນີ້ ແລ້ວເຂົາກໍ່ປະຫຼາດໃຈທີ່ພົບວ່າ ສຽງທີ່ດັງສະໝ່ຳສະເໝີ ມາຈາກຫົວໃຈເຈົ້າຊີວິດ ແລະ ທີ່ປຶກສາສາມຄົນນີ້ ໄດ້ຢຸດເຊົາແລ້ວ. ສຽງດັ່ງກ່າວຫາຍໄປໃສຢ່າງໃດ ແລະ ເປັນຫຍັງ?! ຢູ່ດາວປະຫຼາດ ບ່ອນທີ່ບໍ່ມີໃຜແກ່, ບໍ່ມີໃຜເຈັບຫຼືຕາຍນັ້ນ ເລື່ອງນີ້ ມີຄວາມໝາຍໃຫຍ່ໂຕອີ່ຫຼີ.

ທີ່ປຶກສາເຈົ້າຊີວິດ ຄົນທີສີ່ນີ້ຈຶ່ງເອົາແວ່ນຂະຫຍາຍທີ່ທັນສະໄໝທີ່ສຸດອອກມາຈາກຖົງ. ແວ່ນນີ້ສ້າງຂຶ້ນເພື່ອນຳໃຊ້ແສງບໍລິສຸດຈາກໝູ່ດາວ ອັງໂດຣແມດ, ເຂົາໃຊ້ແວ່ນນີ້ສ່ອງເບິ່ງແປ້ງທີ່ເຫຼືອມຍິບຍັບນັ້ນ. ແວ່ນຂະຫຍາຍອັນລ້ຳຍຸກທັນສະໄໝທີ່ສຸດນີ້ ຍັງມີເຄື່ອງໝາຍວັດແທກລັງສີຈາກນອກຈັກກະວານນຳອີກ, ແລະ ໃນທັນທີ ທີ່ແວ່ນເຂົ້າໃກ້ແປ້ງນັ້ນ ເຂັມເຄື່ອງໝາຍວັດແທກກໍ່ໄກວທັງປິ່ນອ້ອມໄປສິບຮອບ, ແກ້ວໜ້າເຄື່ອງໝາຍແຕກຊະ ແລະ ເຂັມຕົກປິ່ອກລົງເທິງແທ່ນ. ປະຊາຊົນທີ່ຢືນຢູ່ໃກ້ແທ່ນຈ້ອງເບິ່ງຢ່າງງົງທືບ ແລະ ເກືອບບໍ່ຫາຍໃຈ.

ບຸລຸດຜູ້ມີປັນຍາ ເລີ່ມເກັບເອົາເຂັມທີ່ຫັກ ແລະ ແກ້ວທີ່ແຕກ ທັງຈົ່ມພຶມພຳກັບຕົນເອງຄ່ອຍໆ " ເກີດຫຍັງຂຶ້ນນີ້ ? ! ເຄື່ອງໝາຍວັດແທກລະເບີດເອງ . . . ພວກເຮົາຕ້ອງເຮັດເຄື່ອງມື ທີ່ເໝາະສົມກັບວຽກໜັກໜ່ວງນີ້ ເຊັ່ນວັດແທກເຄື່ອງທີ່ສະຕິປັນຍາ ຂອງ ດາວໂລກສ້າງຂຶ້ນ ເຂັມຕ້ອງສາມາດປິ່ນອ້ອມໄປ ນັບເປັນຮ້ອຍໆ ຮອບໆ ໂດຍບໍ່ແຕກ ບໍ່ຫັກ . . . ແມ່ນລະ, ແຕ່ວ່າປະຊາຊົນແຫ່ງດາວໂລກກໍ່ຄິດຢາກສົ່ງ ຂອງຂວັນອັນຮ້າຍກາດນີ້ມາໃຫ້ພວກເຮົາອີ່ຫຼືບໍ ? " ພໍມາຮອດຕອນນີ້ ເຂົາເອງກໍ່ລືມລົງເທິງແທ່ນເຊັ່ນດຽວກັນ.

ຕໍ່ມາ ປະຊາຊົນ ແຫ່ງດາວປະຫຼາດ ຜູ້ຊຶ່ງບໍ່ເຄີຍສຳນຶກເຫັນມາກ່ອນຈັກເທື່ອ ກ່ຽວກັບຄວາມແກ່, ຄວາມເຈັບ ແລະ ຄວາມຕາຍນັ້ນກໍ່ເລີຍເສຍສະຕິຄວບຄຸມຕົນເອງແລ້ວກໍ່ຮ້ອງໂຮຂຶ້ນຢ່າງແປກປະຫຼາດ ແລະຢ່າງສັບສົນອົນລະໝ່ານ.

ນາງນ້ອຍຜູ້ສອດຮູ້ສອດເຫັນ ທີ່ເຄີຍຕັ້ງຄຳຖາມຕໍ່ເຈົ້າຊີວິດນັ້ນ ມາບັດນີ້ໄດ້ຢ່າງໜີອອກຈາກແມ່, ນາງປີນຂຶ້ນໄປເທິງແທ່ນ ແລະ ເຂົ້າໄປໃກ້ວັດຖຸປະຫຼາດນັ້ນ.

" ປະຊາຊົນຜູ້ເປັນມະນຸດເຫຼົ່ານັ້ນ ຮູ້ຈັກຄັກແນ່ວິທີເຮັດໃຫ້ພວກເຮົາແຕກຕື່ນປະຫຼາດໃຈ. ແມ່ນຫົວຂອງເຂົາເຈົ້າຫັ້ນຕີ ທີ່ຊ່ອຍເຂົາເຈົ້າເຮັດສິ່ງປະຫຼາດອັນຍິ່ງໃຫຍ່ ຈົນສາມາດລົ້ມຜູ້ຍິ່ງໃຫຍ່ ຢ່າງເຈົ້າຊີວິດພວກເຮົາ? ຂ້ອຍງຶດງຶດ...! "

ນາງນ້ອຍຢ່າງໄປບ່ອນທີ່ຊາຍຫົງຫ້ານອນເດຍລະດາດຢູ່. " ຈັ່ງແມ່ນງາມແຂ້ງນີ້! " ນາງກຳເອົາແຂ້ງໜ້ອຍໜຶ່ງ ແລ້ວເອົາແປະໃສ່ໜ້າ "ທຸກຄົນຊິຄຶດແນວໃດ ເມື່ອເຫັນໜ້າຂ້ອຍບາດນີ້..." ນາງເວົ້າກັບຕົນເອງ ແລະ ງວາກໄປອ້ອມໂຕ. ຢູ່ຕໍ່ໜ້າຕໍ່ຕາຂອງນາງແມ່ນໃບໜ້າເຈົ້າຊີວິດ ທີ່ມີຕຸ່ມດຳໆຫຼາຍຕຸ່ມຫົງຕົ້ງອອກ ແລະ ແຜ່ລາມໄປທົ່ວ. ຢູ່ຕາມຮ່າງກາຍຂອງທີ່ປົກສາທັງສີ່ກໍ່ຄືກັນ ນາງເຫັນຕຸ່ມດຳໆຫຼາຍຕຸ່ມປະກົດຂຶ້ນ ແລະ ແຜ່ລາມຢ່າງໄວວາ. ຟ້າເອີຍ, ແລ້ວນາງນ້ອຍກໍ່ສັງເກດເຫັນຕຸ່ມດຳນ້ອຍໆປະກົດຂຶ້ນຕາມແຂນນາງເອງ ! ຮ່າງກາຍຂອງນາງເລີ່ມສັ່ນສະທ້ານ ແລະ ແລ້ວນາງກໍ່ຫາຍໃຈຟືດຢ່າງທໍລະມານ. ດ້ວຍຄວາມຢ້ານກົວ ແລະ ເຈັບປວດນາງລົ້ມລົງກັບບ່ອນ ແລ້ວຫາຍໃຈປາ.

ແມ່ຂອງນາງຟ້າວແລ່ນຂຶ້ນມາເທິງແທ່ນ, ຫຼຸບໄປໃສ່ລູກສາວແລ້ວຄຳເບິ່ງອາການເຕັ້ນຂອງຫົວໃຈຢ່າງເປັນຫ່ວງເປັນໃຍ.

"ບໍ່ມີຫຍັງເໜັງ, ບໍ່ເໜັງ... ບໍ່ມີເໜັງເລີຍ ສຽງເຕັ້ນຂອງຫົວໃຈ

ມືດງຽບໄປ. ຫົວໃຈລູກສາວຂ້ອຍຢຸດເຕັ້ນແລ້ວ! ໂທ... ລູກສາວຂ້ອຍເປັນຫຍັງ?!"

ສຽງຮ້ອງອັນເຈັບປວດຂອງແມ່ດັງສະນັ່ນໄປເຖິງຝູງຊົນ ເຮັດໃຫ້ສຽງອຶກກະທຶກ ຂອງປະຊາຊົນທີ່ພວມຕື່ນຕົກໃຈນັ້ນມິດງຽບລົງ. ບໍ່ມີສຽງເວົ້າ - ບໍ່ມີສຽງດັງອັນໃດ - ມິດປານຕາຍ.

ຄວາມມິດງຽບເປັນໄປບໍ່ດົນ ແມ່ນວ່າປະຊາຊົນທັງໝົດຂອງດາວປະຫຼາດຈະຕົກຢູ່ໃນພາວະອົກສັ່ນ ແລະ ສັບສົນກໍ່ຕາມ. ແປ້ງທີ່ເຫຼືອມຍິບຍັບນັ້ນ ປິວຂຶ້ນ ແລະ ປິ່ນວົນວຽນໄປກັບລົມ ແລະ ແລ້ວກໍ່ຫຼູບໃສ່ຝູງຊົນປານວ່າໝູ່ເຜິ້ງຮ້າຍບໍ່ມີຜິດ ແລະ ໂດຍບໍ່ໃຫ້ເສຍເວລາເລີຍ ມັນເຂົ້າຕາເຂົ້າຫູ ແລະ ເຂົ້າປາກ ປະຊາຊົນນັບເປັນຮ້ອຍໆ. ເມື່ອປະຊາຊົນລົ້ມລົງດິ້ນຕິດດິນຕໍ່,ຝູງຊົນກໍ່ແຕກຍ່າວ ເພື່ອເອົາຕົວໜີຕາຍ.

" ແປ້ງຈາກດາວໂລກມາທຳລາຍພວກເຮົາແລ້ວ! "

ປະຊາຊົນແຫ່ງດາວປະຫຼາດ ຮ້ອງແຮງໆ ດ້ວຍຄວາມຢ້ານກົວທັງແລ່ນໄປໄກໆ ຈາກບ່ອນນີ້ໄປຍັງບ່ອນນັ້ນ; ອ້ອມໄປວຽນມາຕະຫຼອດມື້ຕະຫຼອດຄືນ. ແປ້ງຂາວນໍລະນະນັ້ນ ເພີ່ມທະວີຂຶ້ນ ແລະ ແຜ່ລາມໄປທຸກທິດທຸກທາງຢ່າງໄວວາ, ທຳລາຍຕົ້ນໄມ້ ແລະ ສັດ ຕະຫຼອດທັງດິນ, ນໍ້າ ແລະ ສິ່ງມີຊີວິດທັງໝົດ ທີ່ມັນປິວໄປຖືກ.

ທຳອິດ ປະຊາຊົນພະຍາຍາມເອົາຕົວລອດໂດຍຂຸດຂຸມເລິກໆ ແລ້ວລົງໄປລີ້ຢູ່ໃຕ້ພື້ນດິນ, ແຕ່ແປ້ງກໍ່ຍັງນຳລົງໄປຮອດ ໄປເຖິງ. ຕໍ່ມາ ເຂົາເຈົ້າພະຍາຍາມຫາບ່ອນປອດໄພ ໂດຍລົງເຮືອລ່ອງໄປຕາມມະຫາສະໝຸດຂອງ



ດາວປະຫຼາດ, ແຕ່ນ້ຳໃນມະຫາສະໝຸດກໍ່ປ່ຽນເປັນສີມ່ວງແຫຼ້ໆ ໜ້າຂີ້ດຽດ, ພວກປາກໍ່ຕາຍ ພູ່ຂຶ້ນຫາຍທ້ອງຂາວໆ ເປັນຈ່ານຜ່ານ.

ບໍ່ມີບ່ອນຫຼົບລີ້ເຫຼືອຢູ່ອີກເລີຍ ເທິງດາວປະຫຼາດ, ປະຊາຊົນຈຶ່ງພ້າວພັ້ງສ້າງຍານອະວະກາດຂະໜາດມະຫຶມາຄ້າຍຄືວ່າວ ເພື່ອຂຶ້ນໄປສູ່ກະແສລົມອະວະກາດ ທີ່ພັດຜ່ານມາໃກ້ດາວປະຫຼາດນີ້.

" ພວກເຮົາຕ້ອງເຮັດວ່າວອະວະກາດ, ພວກເຮົາຈະລອຍໄປຕາມລົມອະວະກາດ ແລ້ວຫຼົບໜີເຂົ້າສູ່ຫ້ວງອະວະກາດໄປຢ່າງໄວທີ່ສຸດ.

ການເດີນທາງ ຂອງພວກເຮົາຈະກິນເວລາດົນນານ, ປະຊາຊົນຫຼວງຫຼາຍຈະພາກັນຂີ່ຍານນີ້ໄປ, ດັ່ງນີ້ພວກເຮົາຈຳເປັນຕ້ອງເອົາອາຫານໄປນຳເປັນຈຳນວນນັບບໍ່ຖ້ວນ ”

ໂດຍເຮັດວຽກບໍ່ມີຍາມເຊົາເປັນເວລາສິບວັນສິບຄືນ, ເຮັດຢ່າງຮີບຮ້ອນທັງຮ້ອງທັງລຳໄປນຳ, ປະຊາຊົນເຫຼົ່ານີ້ໄດ້ພ້ອມພາກັນສ້າງວ່າວອະວະກາດ ຂະໜາດມະຫຶມາຂຶ້ນມາລຳໜຶ່ງ.

ຜູ້ທີ່ເຫຼືອຕາຍທັງໝົດ ໃນດາວປະຫຼາດພາກັນຂຶ້ນຂີ່ຍານແລ້ວກໍ່ບິນຂຶ້ນ ແລະ ລັບຫາຍໄປ. ຂະນະທີ່ວ່າວອະວະກາດ ທະຍານສູງຂຶ້ນເໜືອດາວປະຫຼາດນັ້ນ ພື້ນດິນເບື້ອງລຸ່ມກໍ່ຖືກບົ່ກຄຸມໄປດ້ວຍແປ້ງມະຫາໄພເຕັມໄປໝົດ ທັງຈຸດດຳຊ້ຳໆ ອັນໜ້າຢ້ານກໍ່ປະກົດຂຶ້ນທຸກບ່ອນທຸກທີ່.

“ ພວກເຮົາປອດໄພແລ້ວ! ແຕ່ວ່າ ມີປະຊາຊົນຈຳນວນບໍ່ເທົ່າໃດ ໄດ້ຂຶ້ນຂີ່ວ່າວນີ້ . . . ປະຊາຊົນແຫ່ງດາວປະຫຼາດທັງໝົດ ເຫຼືອເທົ່ານີ້ຫວະ ? ”

ມີເດັກນ້ອຍ ຈຳນວນໜ້ອຍດຽວຢູ່ໃນຍານນີ້. ພວກເຂົາໄດ້ຍິນສຽງເສົ້າໆ ຂອງພວກຜູ້ໃຫຍ່ດັງເຂົ້າຫູບໍ່ມີຍາມເຊົາ ຂະນະທີ່ພວກເຂົາໂບກມືອຳລາ ຢ່າງມິດໆ ງຽບໆ ທັງມືນຕາອອກກ້ວາງ - ອຳລາດາວອັນເປັນບ້ານຂອງພວກເຂົາເອງ ທີ່ພວມລັບຫາຍໄປທາງເບື້ອງລຸ່ມພຸ້ນ.

ນັກປັດຊະຍາຫາຍໃຈໃຫຍ່ແລ້ວກໍ່ເວົ້າຂຶ້ນຄ່ອຍໆ : " ລູກຫຼານທີ່ຮັກແພງເຮີຍ, ພວກເຮົາຄືຈະບໍ່ເຫັນດາວປະຫຼາດ ຂອງພວກເຮົາອີກຈັກເທື່ອແລ້ວ ບໍ່ມີໃຜຮູ້ວ່າ ເປັນຫຍັງວັດຖຸສີເງິນນັ້ນ ຈຶ່ງມາລົງດາວພວກເຮົາ. ພວກເຮົາຄວນຈະພິຈາລະນາຢ່າງຖີ່ຖ້ວນ ແລະ ສືບສວນເບິ່ງໃຫ້ຄັກແນ່ກ່ອນ ທີ່ຈະທົດລອງໄຂມັນອອກ. ບັດນີ້ພວກເຮົາເຫັນແລ້ວວ່າພວກເຮົາບໍ່ສາມາດຮູ້ຈັກສັບພະສິ່ງທັງຫຼາຍ ໃນຈັກກະວານໄດ້ເປັນຢ່າງດີໂດຍໄປທຸບມັນໃຫ້ແຕກອອກຊື່ໆ. "

ຊາຍໜຸ່ມຄົນໜຶ່ງເວົ້າຂຶ້ນວ່າ : " ບັດນີ້ ຢູ່ນອກຈັກກະວານອັນເວີ້ງວ້າງນີ້ ພວກເຮົາຈະໄປໃສ ຈາກບ່ອນນີ້ ? ພວກເຮົາຮູ້ແລ້ວວ່າພວກເຮົາຈະບໍ່ສາມາດດຳລົງຊີວິດ ຢູ່ດາວປະຫຼາດໄດ້ອີກ, ແຕ່ແປ້ງເບື່ອນັ້ນກໍ່ປິວໄປທົ່ວ ອະວະກາດ ເຊັ່ນດຽວກັນ. ບະ ! ວັດຖຸ ສີເງິນນັ້ນມາຈາກໃສນໍ ? "

" ຈາກດາວໂລກຕີ ? " ນັກວິທະຍາສາດວ່າ : " ບໍ່ດອກ, ຈາກດາວອື່ນ. ບໍ່, ພິຈາລະນາເບິ່ງຄວາມໄວ ແລະ ທິດທາງແລ້ວ ມັນຕ້ອງມາຈາກດາວໂລກ. ແຕ່, ບໍ່ນ່າ, ປະຊາຊົນແຫ່ງດາວໂລກ ບໍ່ອາດເຮັດສິ່ງຮ້າຍກາດຈັ່ງຊັ້ນ. ບໍ່ມີສັດມະນຸດໃດໆ ສາມາດມີຊີວິດຍືນຍົງຕະຫຼອດການໂດຍບໍ່ເຖົ້າບໍ່ແກ່ຄືດັ່ງພວກເຮົາ.
ເປັນຫຍັງ ພວກເຂົາຈຶ່ງເຮັດບາງສິ່ງບາງຢ່າງຄືຈັ່ງຊັ້ນ ຖ້າວ່າແນວໃດກໍ່ຕາມ ພວກເຂົາທັງໝົດຕ້ອງຕາຍໃນບັ້ນປາຍຂອງຊີວິດ? ແລະ ຕຳນານບູຮານ ກ່ຽວກັບດາວປະຫຼາດກໍ່ເລີ່ມຕົ້ນດ້ວຍ " ຮຸ່ງສົດໃສ ແລະ ຂຽວອຸ່ມ

ທົ່ມ ໃຕ້ດວງຕາເວັນ ທີ່ອົບອຸ່ນ ແລະ ສະຫວ່າງແຈ້ງ . . . " ເຮັດຈັ່ງໃດ ຈຶ່ງມີບັນຫາບໍ່ພໍອົກບໍ່ພໍໃຈເກີດຂຶ້ນຢູ່ພຸ້ນ " .

ບຸລຸດຜູ້ມີປັນຍາຕອບຢ່າງນຸ່ມນວນ " ນັ້ນລະຄືສິ່ງທີ່ແປກປະຫຼາດ ຍິ່ງ ກ່ຽວກັບປະຊາຊົນແຫ່ງດາວໂລກ. ບັດນີ້, ຄຳເວົ້າທີ່ຂຽນຕິດຂ້າງຈະ ຫຼວດນັ້ນ ແມ່ນອນວ່າເປັນຄຳເວົ້າໃນພາສາຂອງດາວໂລກ. ມີບາງສິ່ງ ບາງຢ່າງບອກຂ້າພະເຈົ້າວ່າ ສິ່ງທີ່ຂຽນໄວ້ນັ້ນ ແມ່ນຄຳເຕືອນ ທີ່ບອກວ່າ ຖ້າແປ້ງມະຫາໄພ ຢູ່ໃນຈະຫຼວດຖືກປ່ອຍອອກມາ ປະຊາຊົນແຫ່ງດາວ ໂລກ ບໍ່ຮູ້ຈັກວິທີທີ່ຈະແກ້ໄຂຄວາມເສຍຫາຍໄດ້ເລີຍ ".

ໝົດທຸກຄົນ ມິດງຽບໄປບຶດໜຶ່ງ, ແລ້ວຕໍ່ມາບຸລຸດຜູ້ຮອບຮູ້ ກໍ່ເວົ້າ ຂຶ້ນຢ່າງຄົມຄາຍ.

"ພວກເຮົາຕ້ອງໄວ້ໃຈສັດມະນຸດຫຼາຍກວ່ານັ້ນ. ຖ້າວ່າບໍ່ມີຄວາມ ໄວ້ເນື້ອເຊື່ອໃຈກັນໃນທົ່ວຈັກກະວານນີ້ແລ້ວ ເຮັດຈັ່ງໃດຊິໃຫ້ດາວລົກ ດາວເຄາະ ຈຳນວນນັບບໍ່ຖ້ວນ ແລະ ສິ່ງມີຊີວິດທັງຫຼາຍດຳລົງຄົງຕົວຢູ່ ໄດ້ ? ບໍ່ມີຜູ້ໃດເວົ້າແບບນີ້ມາກ່ອນເລີຍ, ແຕ່ຂ້າພະເຈົ້າໄດ້ຄົ້ນພົບຂໍ້ ເທັດຈິງອັນໜ້າອັດສະຈັນຄືວ່າກະໂຕຈັກກະວານເອງເກີດຂຶ້ນຍ້ອນຄວາມ ໄວ້ໃຈກັນລະຫວ່າງຈຸລັງນີ້ກັບຈຸລັງນັ້ນ."

" ລ້ວນແຕ່ເລື່ອງໂລເລ ! " ຊາຍໜຸ່ມຮ້ອງຂຶ້ນ, ເຂົາດຶງເສື້ອຈົບ ຂາດອອກຈາກຮ່າງກາຍ ທີ່ປຽກເຫື່ອ ແລ້ວໂຍນຖິ້ມ, ແລະ ຊີ້ໄປຊີ້ປ່ອງ ຢ້ຽມນົນໆ ທີ່ສ່ອງເຫັນກຸ່ມດາວ ຊ້າງເຜືອກທີ່ຮຸ່ງສຸກໃສຢູ່ " ຈັ່ງໃດກໍ່



ຕາມ ຈິ່ງຊອກຫາມະນຸດເຫຼົ່ານັ້ນ, ຄົ້ນເບິ່ງວ່າ ເກີດຫຍັງຂຶ້ນຢູ່ໃນຈັກກະວານ "

ເຖິງຕອນນີ້ ກໍ່ມີສຽງໂສເຫລ້ກັບຂຶ້ນພາຍໃນວ່າວອະວະກາດ.

" ຈົ່ງຊອກຫາມະນຸດເດີນດິນ,

ຊອກຫາ ມະນຸດເດີນດິນ !

ປະຊາຊົນດາວໂລກຄືຄວາມລັບອັນຍິ່ງໃຫຍ່ ໃນຈັກກະວານອັນເວົ້ງວ້າງ.

ດາວປະຖາດຄືແກ້ວມະນີ

ເປັນຄວາມລັບຂອງຄວາມສຸກພວກເຮົາ "

ຂະນະທີ່ເຂົາເຈົ້າທັງໝົດ ພາກັນຮ້ອງເພງດັງໆ ນັ້ນ ວ່າວອະວະກາດລ້ຽວ ແລະ ເຂົ້າໃນເສັ້ນທາງສູ່ດາວໂລກ, ມັນລອຍລົ່ວດ້ວຍຄວາມໄວທີ່ໜ້າງຶດງໍ້ອັດສະຈັນ.

ທັນໃດນັ້ນ.

" ແມ່ນຫຍັງຫັ້ນ ? ! ແມ່ນຫຍັງງງ ? ! "

ທາງອອກໄປກາງອະວະກາດພຸ້ນ ມີຍານອະວະກາດຮູບຮ່າງແປກປະຫຼາດຈຳນວນຫຼວງຫຼາຍລອຍລ່ອງຢູ່ໃກ້ໆກັນ. ຕໍ່ມາ ຄືດັ່ງສັດມີຊີວິດຍານເຫຼົ່ານີ້ເດ່ແຂນທີ່ເປັນໂລຫະອອກເພື່ອຕີ ແລະ ຄວ້າຈັບຊຶ່ງກັນ ແລະກັນ.

" ອາດແມ່ນສົງຄາມຍານອະວະກາດ ທີ່ໃຊ້ເຄື່ອງບັນຊາຢູ່ທາງໆຕາມທີ່ພວກເຮົາເຄີຍໄດ້ຍິນແມ່ນບໍ່? " ບຸລຸດຜູ້ມີປັນຍາເວົ້າ " ບໍ່ມີຜູ້ໃດຂັບຂີ່ມັນ, ແຕ່ມີເຄື່ອງຈັກທີ່ເອີ້ນວ່າ ກອມປິວເຕີຢູ່ໃນຫັ້ນ, ມັນເປັນການສູ້ຮົບລະຫວ່າງເຄື່ອງຈັກ. ຢູ່ໃນນັ້ນບໍ່ມີຫົວຄິດດີຜູ້ລີຊີ້ຈັກລາຍເລີຍ "

ຕໍ່ມາ ພວກເດັກນ້ອຍພາກັນຮ້ອງຂຶ້ນຢ່າງຕື່ນເຕັ້ນ: " ໂຫ້ ! ພຸ້ນດາວໂລກ ! ເບິ່ງແມ້ເປັນສີຂຽວສົດໃສ "

ແຕ່ແມ່ນຫຍັງຫັ້ນນ່າ ? ! ຂະນະທີ່ວ່າວອະວະກາດລອຍເຂົ້າໃກ້ດາວໂລກພວກເຂົາຫຼຽວເຫັນຈະຫຼວດ ແລະ ສ່ວນແຕກຫັກຈາກກອມປິວເຕີພົ້ງອອກຈາກໂຮງງານຂະໜາດໃຫຍ່ ແລະ ພຸ່ງຂຶ້ນອະວະກາດ.



" ທັງໝົດນັ້ນ, ທຸກໆ ອັນເລີຍ ຂຶ້ນມາຈາກດາວໂລກຫວະ ? ເປັນຫຍັງ, ເພື່ອຫຍັງລະ ? ! " ເດັກນ້ອຍພາກັນຮ້ອງເປັນສຽງລະວົນ.

" ເບິ່ງແມະ ! ເບິ່ງສະພາບເງື່ອນໄຂຂອງດາວໂລກ. ພູຜາ ແມ່ນ້ຳ ແລະ ມະຫາສະໝຸດ ທັງໝົດນັ້ນເປື້ອນເປິະຂະໜາດເລີຍ, ເຕັມໄປດ້ວຍຂີ້ເຫຍື້ອ ແລະ ຊ້ຳບໍ່ໜຳມີລັງສີແຜ່ຫຼາຍຈົນມະນຸດເດີນດິນເຮັດຫຍັງບໍ່ໄດ້ເລີຍພາກັນຂີ່ຍານໜີອອກໄປສູ່ອະວະກາດ "

ທັນໃດນັ້ນ ຈະຫຼວດຂະໜາດມະຫຶມາ ທີ່ເຮັດດ້ວຍແກ້ວ ລອຍຜ່ານໜ້າໄປ.

" ເບິ່ງອັນນັ້ນ ! " ພໍ່ຄ້າເຄື່ອງຍ່ອຍຈາກດາວປະຫຼາດຮ້ອງຂຶ້ນ. " ຜູ້ໂດຍສານທັງໝົດໃນຈະຫຼວດລ້ວນແຕ່ແມ່ນຜູ້ເຖົ້າ. ພວກເຂົາໄລ່ຜູ້ເຖົ້າອອກມາ ! ເກີດຫຍັງຂຶ້ນຢູ່ດາວໂລກພຸ້ນນະ ? ! "

ບຸລຸດຜູ້ມີປີກຍາເວົ້າສຽງໜັກໆ ເຈືອປົນດ້ວຍຄວາມເສົ້າໂສກ "ບໍ່ແມ່ນດາວໂລກດອກ, ເພາະໂລກບໍ່ອາດເຮັດແນວຈັ່ງຊັ້ນ. ເອີ ແມ່ນມະນຸດເດີນດິນອີ່ຫຼີ ! ສັດມະນຸດຕວ່ານັ້ນ ! ພວກເຂົາເຮັດສິ່ງນີ້ດ້ວຍນ້ຳມືຂອງພວກເຂົາເອງ. ໂທ ຂ້າພະເຈົ້າຕ້ອງຍອມຮັບວ່າຕົນເອງເຂົ້າໃຈຜິດກ່ຽວກັບສັດມະນຸດເຫຼົ່ານັ້ນ "

ເມື່ອເຫັນຈະຫຼວດ ແລະ ສ່ວນຕ່າງໆ ຂອງກອມປິວເຕີ້ຈຳນວນຫຼວງຫຼາຍ ລອຍລ່ອງຜ່ານກາຍໜ້າໄປ, ມາບັດນີ້ ປະຊາຊົນຢູ່ໃນວ່າວອະວະກາດ ຈາກດາວປະຫຼາດກໍ່ມີທັດສະນະບໍ່ຄືກັນ ໃນການເບິ່ງປະຊາຊົນຢູ່ດາວໂລກ. ຈາກເບື້ອງລຸ່ມພຸ້ນ ມີຈະຫຼວດພຸ່ງຂຶ້ນມາຕື່ມເລື້ອຍໆ, ເຂົາເຈົ້າ

ຫຼຽວເຫັນປ້າຍທີ່ຂຽນວ່າ " ທີ່ນັ້ງນກຳມັນຕະພາບລັງສີອັນຕະລາຍ " ບ່ອນນີ້ມີການສ້າງຈະຫຼວດຈຳນວນຫຼວງຫຼາຍ, ມີຈະຫຼວດ ຊະນິດດຽວກັບທີ່ໄດ້ມາລົງດາວທີ່ເຂົາເຈົ້າຢູ່, ຈະຫຼວດເຫຼົ່ານີ້ ຖືກຈັດໄວ້ເປັນກອງສູງໆ ປານພູເຂົາ ທາງດ້ານນອກຂອງໂຮງງານ, ນອກນັ້ນເຂົາເຈົ້າຍັງເຫັນທໍ່ໃສໆ ພ້ອມດ້ວຍແປ້ງສີຂາວໆ ໄຫຼອອກໄປສູ່ຈະຫຼວດ.

" ນັ້ນລະຄືມະນຸດເດີນດິນ. ມັນແມ່ນມືມະນຸດເອງທີ່ເຮັດວຽກຢ່າງສິນລະວິນຢູ່ຫັ້ນ, ແລະ ອັນທີ່ດັງຢູ່ຫັ້ນ ແມ່ນຄຳເວົ້າຂອງມະນຸດທີ່ເປັ່ງອອກມາຈາກສຽງຂອງມະນຸດເອງ " ບຸລຸດຜູ້ມີປັ້ນຍາສັ່ນບົ້ນໆ ແລ້ວເວົ້າອອກມາແຮງໆ.

" ດາວປະຫຼາດຂອງພວກເຮົາປະກົດວ່າຖືກແຫຍ້ຈາກຜົນກະທົບຂອງຄວາມຈະເລີນສີວິໄລ ທີ່ສ້າງຂຶ້ນໂດຍມວນມະນຸດ. ໂອ ! ທັງໝົດນີ້ໝາຍຄວາມວ່າຢ່າງໃດ ? ວັດຖຸນັ້ນ ທີ່ລ່ວງມາຮອດເາວຂອງພວກເຮົາບໍ່ແມ່ນຂອງຂວັນເລີຍ. ສິ່ງທີ່ມາເຖິງພວກເຮົານັ້ນ ແມ່ນຂີ້ເຖົ່າແຫ່ງຄວາມຕາຍ, ແມ່ນແປ້ງທີ່ປະຫັດປະຫານສິ່ງມີຊີວິດທັງໝົດ. ເຖິງແມ່ນວ່າຢູ່ດາວໂລກບໍ່ມີບ່ອນທີ່ຈະນຳເອົາຂີ້ເຖົ່າໄປຖິ້ມແລ້ວກໍ່ຕາມ, ເປັນຫຍັງພວກເຂົາຈຶ່ງ . . . "

ພວກເຮົາຕ້ອງຢູ່ຫ່າງໆ ຈາກພວກເຂົາ, ຢູ່ໄກສຸດຟາກຟ້າ ມະຫາສະໝຸດແຫ່ງອະວະກາດນີ້ແຫລະ, ຢູ່ໃນໄລຍະຫ່າງໆ ຈາກສັດມະນຸດ, ໄກຈາກສັບພະສິ່ງທີ່ມືມະນຸດສ້າງຂຶ້ນ.

ວ່າວອະວະກາດ ເຂົ້າສູ່ເສັ້ນທາງທີ່ຖອຍຫ່າງຈາກກຸ່ມດາວທາງຊ້າງ

ເຜືອກອອກໄປເລື້ອຍໆ. ເວລານັ້ນເຂົາເຈົ້າຖອຍຫ່າງຈາກດາວໂລກຢ່າງວ່ອງໄວທີ່ສຸດ.

" ເບິ່ງແມະ, ເບິ່ງວັນສຸດທ້າຍຂອງຕຳນານດາວໂລກ ອັນຮຸ່ງເຮືອງ. ແສງມາບແມບສະຫວ່າງແຈ້ງໃຕ້ຟ້າສີຄາມ, ແລະ ກ້ອນເມກຊິງແປກປະຫຼາດນັ້ນ ແນ່ນອນມັນບໍ່ແມ່ນແສງຟ້າແມບ ແລະ ເມກທີ່ທຳມະຊາດສ້າງຂຶ້ນເລີຍ ".

ທຸກໆຄົນ ແລ່ນໄປທີ່ກ້ອງສ່ອງເວລາດຽວກັບທີ່ເມກກ້ອນນ້ອຍໆພວມຂະຫຍາຍອອກເປັນຮູບດອກເຫັດມະຫຶມາ ແລະ ຕໍ່ມາກໍ່ມີເມກຮູບດອກເຫັດອື່ນໆ ປະກົດຂຶ້ນ. ດາວໂລກສີຂຽວໆ ປ່ຽນເປັນສີໝົ່ນໃນເວລາສັ້ນໆ ແລະ ບໍ່ດົນຕໍ່ມາກໍ່ປົກຄຸມດ້ວຍແປວໄຟສີແດງຮຸ່ງແຈ້ງ.

ພໍຮອດເວລາທີ່ວ່າວອະວະກາດ ໄດ້ອອກຫ່າງໄກຈາກດາວໂລກໄປແລ້ວ ສີຂອງດາວທີ່ປະສົບເຄາະຮ້າຍດວງນັ້ນ ກໍ່ປ່ຽນຈາກສີແດງເປັນສີອົດແລ້ວບໍ່ດົນ ມັນກໍ່ເປັນສີດຳໆ ແລະ ໃນທີ່ສຸດມັນກໍ່ຖືກຄວາມດຳມືດກືນເອົາຢູ່ກາງອະວະກາດອັນບໍ່ຽວພອຍ.

✲

ລາກ່ອນ, ປະຊາຊົນແຫ່ງດາວໂລກ. ບໍ່ມີສິ່ງມີຊີວິດໃດໆ ໃນຈັກກະວານນີ້ ທີ່ຕື່ນເຕັ້ນແປກປະຫຼາດຄືພວກເຈົ້າ. ອະວະກາດມີຂອບເຂດ, ແຕ່ເບິ່ງຄືວ່າ ໂລກຂອງມະນຸດເດີນດົນໄດ້ມາຮອດຈຸດອະວະສານ

ແລ້ວອາລະຍະທຳຂອງປະຊາຊົນແຫ່ງດາວໂລກໄດ້ງອກເງີຍຂຶ້ນ ແລະ ປົ່ງບານຂຶ້ນໄປຢ່າງໄວວາ ແລະ ພວກເຮົາຈຳນວນຫຼວງຫຼາຍໃນຈັກກະວານຕ່າງກໍ່ໄດ້ຝາກຄວາມຫວັງໄວ້ກັບດາວໂລກ. ພາຍຫຼັງທີ່ໄດ້ກຳເນີດຂຶ້ນ ແລະ ພັດທະນາມາເປັນພັນໆ ປີ, ມີອາລະຍະທຳຊຶ່ງໄດ້ທຳລາຍລ້າງກະໂຕຜູ້ສ້າງເອງ... ດັ່ງນີ້ ຄວາມກ້າວໜ້າທັງໝົດ ກັບກາຍມາເປັນສິ່ງໄຮ້ປະໂຫຍດອັນໃຫຍ່ຫຼວງ, ເປັນຜົນສຳເລັດອັນຈອມປອມຢ່າງສິ້ນເຊີງ ! ໂທ, ສັດມະນຸດ ເອີຍ ! ອັນທີ່ໜ້າອັດສະຈັນຍິ່ງກວ່າສິ່ງທີ່ມີຂອງເຈົ້າເຮັດຂຶ້ນມາ ກໍ່ຄືຕົວເຈົ້ານັ້ນເອງ ຊຶ່ງເປັນທີ່ໜ້າຕື່ນເຕັ້ນແປກປະຫຼາດທີ່ສຸດ."

ບຸລຸດຜູ້ມີປັນຍາງວາກໄປເບິ່ງປະຊາຊົນທັງໝົດຂອງເຂົາແລ້ວເວົ້າສຽງ ນຸ່ມນວນວ່າ: "ບາງບ່ອນທີ່ພວກເຮົາບໍ່ຮູ້ຈັກ, ບາງແຫ່ງໃນຈັກກະວານອັນກວ້າງໃຫຍ່ໄພສານນີ້ ອາດມີດາວເຄາະຢູ່ດວງໜຶ່ງ ຊຶ່ງເວົ້າກັນແຕ່ຄວາມຈິງອອກມາ, ແລະ ສິ່ງທັງໝົດ ກໍ່ຖືກສ້າງຂຶ້ນ ໂດຍມືອັນນຸ່ມນວນ ແລະ ຊຳນິຊຳນານ. ຫວັງເອົາໄວ້ນໍ! ກະໂຕຄວາມຫວັງເອງ ກໍ່ເປັນຄຳເວົ້າທີ່ສຳຄັນທີ່ສຸດ ສຳລັບສິ່ງມີຊີວິດທັງຫຼາຍ, ໂດຍສະເພາະສຳລັບຊາວໜຸ່ມ. ຖ້າເຈົ້າແນມບໍ່ເຫັນຄວາມຫວັງໃດໆ, ເລື່ອງນີ້ມັນກໍ່ຂຶ້ນຢູ່ກັບເຈົ້າ ທີ່ຈະສ້າງຄວາມຫວັງດ້ວຍຕົນເອງ. ສຳລັບພວກເຮົາ ຄວາມຫວັງຍັງສຳຄັນກວ່າຄວາມແປກປະຫຼາດ."



ປະຊາຊົນຈາກດາວປະຫຼາດ ລອຍລ່ອງໄປເລື້ອຍໆ ໄປຄົ້ນຫາດາວດວງໃໝ່. ບໍ່ມີຜູ້ໃດພໍທີ່ຈະຮູ້ວ່າ ນີ້ແມ່ນພາກສ່ວນໃດຂອງອະວະກາດທີ່ເຂົາເຈົ້າພວມລ່ອງລອຍຢູ່ດຽວນີ້, ຫຼືວ່າໄດ້ຈອດຍານລົງນະ ແຫ່ງໃດ?

ໃນຄວາມດໍາມືດອັນສະຫງົບງຽບຂອງອະວະກາດ, ດວງດາວນັບບໍ່ຖ້ວນສົ່ງແສງສຸກໃສ ເຫຼື້ອມຍິບຍັບ ຄືກັບວ່າບໍ່ຮູ້ໂສກນາດຕະກໍາຂອງດາວປະຫຼາດຈັກດີ້ເລີຍ.

(ແຕ້ມຮູບປະກອບໂດຍ ຕາຈິມາ ກະຊຸໂກະ)



# ໄດໂນເສົາທະເລຊາຍ

ວັນໜຶ່ງ ເມື່ອບໍ່ດົນນານປານໃດ, ມີຂະບວນພໍ່ຄ້າພ້ອມດ້ວຍອູດຕ່າງໄຫນ້ຳມັນຫອມຊັ້ນດີ ເດີນທາງຂ້າມທະເລຊາຍອັນກວ້າງໃຫຍ່ໄພສານ ມຸ່ງໜ້າສູ່ຕະຫຼາດ ເພື່ອຂາຍນ້ຳມັນເປັນເທື່ອທຳອິດ. ເມື່ອເຂົາເຈົ້າໄປຮອດເຄິ່ງກາງທະເລຊາຍ ກໍ່ເກີດມີຄວາມບໍ່ຖືກຕ້ອງຄ່ອງກັນຢ່າງຮຸນແຮງ.

ນີ້ຄືເຫດຜົນທີ່ເຂົາເຈົ້າຕໍ່ສູ້ກັນ, ມາຟັງເບິ່ງຢ່າງຖີ່ຖ້ວນດູ...

ພວກພໍ່ຄ້າໃນຂະບວນເດີນທາງບໍ່ສາມາດຕົກລົງກັນໄດ້ວ່າ ຄວນຈະແບ່ງປັນເງິນກັນຢ່າງໃດ ພາຍຫຼັງຂາຍນ້ຳມັນຫອມແລ້ວ. ຂະນະທີ່ຍ່າງໄປຕາມດິນຊາຍ ເຂົາເຈົ້າກໍ່ຖຽງກັນໄປເລື້ອຍໆ ຫາກບໍ່ສາມາດແກ້ໄຂບັນຫາແຕ່ຢ່າງໃດ. ສຸດທ້າຍ ພໍ່ຄ້າເຫຼົ່ານີ້ກໍ່ຢຸດພັກຢູ່ບ່ອນມີຕົ້ນໄມ້ກາງທະເລຊາຍ ທີ່ເອີ້ນກັນວ່າ ໂອເອຊີສ, ຈັດການລ່າມອູດໃສ່ຕົ້ນພ້າວ ແລ້ວນັ່ງເປັນວົງ ເພື່ອສົນທະນາແກ້ໄຂບັນຫາ.



ຄົນທຳອິດທີ່ເວົ້າ ແມ່ນຊາຍຊະລາຫຼັງກ່ອມ, ແສງຕາເປັນລັອກແລັກ. ໂດຍວາງຕົວເປັນຜູ້ຮູ້ຈັກທຸກສິ່ງທຸກຢ່າງຮອບດ້ານ ເຂົາເລີ່ມເວົ້າດ້ວຍທ່າທາງຈອງຫອງ.

"ເອົາລະ ! ທຸກໆ ຄົນ, ນີ້ແມ່ນວິທີພວກເຮົາແບ່ງປັນເງິນ ທີ່ໄດ້ຈາກການຂາຍນ້ຳມັນຫອມ. ຜູ້ແກ່ກວ່າໝູ່ຄວນເອົາຈຳນວນຫຼາຍກວ່າໝູ່; ຜູ້ແກ່ຮອງລົງມາ ກໍ່ເອົາຈຳນວນອັນດັບສອງ, ແລະຕໍ່ໆ ໄປ. ແບບນີ້



ລະ ທີ່ດົນນານມາແລ້ວ ພະເຈົ້າໄດ້ຕັດສິນວ່າ ແນວໃດຄືອັນທີ່ຄວນເຮັດ. ຈັ່ງຄິດຈັ່ງຊີ້ – ແມ່ນໃຜລະ ທີ່ສັ່ງສອນຊາວໜຸ່ມ ພວກສູກ່ຽວກັບການຊື້ ການຂາຍ? ຖືກລະ, ມັນແມ່ນພວກກູ ຜູ້ເປັນຮຸ່ນອາວຸໂສຂອງພວກສູ ແລະ ນີ້ຢ່າລືມໃດເນີ. ປະຊາຊົນຜູ້ໜຸ່ມນ້ອຍໃນສູ່ມື້ນີ້ ບໍ່ຮູ້ຈັກບຸນຈັກຄຸນ ເລີຍ".

ທັນທີທີ່ຊາຍຊະລາເວົ້າສຸດ ຊາຍໜຸ່ມຮ່າງສູງໃຫຍ່ ມີໜວດໂຄ້ງຄື ເຂົາລົດຖີບ ແລະ ມີຜ້າຂາວຄຽນຫົວ ກໍ່ເວົ້າຂຶ້ນ ໂດຍເລືອກເຟັ້ນຄຳເວົ້າ ຢ່າງລະມັດລະວັງ, ຕາແຫຼມຄົມ ແນມອອກໄປທີ່ຂອບຟ້າ.

" ເລື່ອງນີ້ມັນແຈ້ງຢູ່ແລ້ວນ່າ. ໃນພວກເຮົານີ້ ຜູ້ທີ່ເຮັດວຽກໜັກ ໃນການຂາຍນ້ຳມັນ ຄວນໄດ້ຮັບເງິນຫຼາຍກວ່າໝູ່. ເປັນຫຍັງພວກເຮົາ ຈຶ່ງຊິເອົາເງິນໃຫ້ຜູ້ເຖົ້າຢູ່ໃນໝູ່ພວກເຮົານີ້ຫຼາຍໆ – ຜູ້ເຖົ້າມັກຈົ່ມແຕ່ ປວດຄີງ, ຕ້ອງພັກຜ່ອນ, ຈົ່ມເມື່ອຍ ແລ້ວກໍ່ໃຊ້ເວລາສ່ວນໃຫຍ່ນອນຫຼັບ ສະບາຍ, ມີແຕ່ພວກເຮົາຊາວໜຸ່ມທີ່ເຮັດວຽກ ຢ່າງໜັກໜ່ວງ ລຳບາກ ທັງເວັນ ທັງຄືນ, ຖ້າຕ້ອງແບ່ງເງິນ ໂດຍອີງຕາມໜ້າວຽກທີ່ເຮັດແລ້ວ ແມ່ນພວກເຮົາຊາວໜຸ່ມ ທີ່ເຮັດວຽກຫຼາຍ, ເຮັດວຽກໜັກ."

" ແຕ່ວ່າ . . . ຄືຈັ່ງຊີ້ . . . " ສຽງສັ່ນໆ ດັງມາຈາກຄົນຜູ້ໜຶ່ງ ທີ່ໜ້າມ້ານເຫຼືອງ ນັ່ງຢູ່ນອກວົງ, ສຽງເຂົາເຕັມໄປດ້ວຍຄວາມໂມໂຫ ແລະ ເວົ້າຕໍ່ໄປວ່າ " ເຮົາເວົ້າຈັ່ງຊີ້ມາແຕ່ຕົ້ນ ວິທີດຽວທີ່ຄັກໆ ເພື່ອ ຫຼີກເວັ້ນການຜິດຖຽງກັນແບບນີ້ ແມ່ນຍອມຮັບລະບຽບການ ຂອງສັບ ພະສິ່ງໃນໂລກ ຕາມທີ່ເຄີຍຕັ້ງກັນມາແລ້ວ. ເປັນຫຍັງຈຶ່ງຄິດວ່າ ພວກ

ເຮົາມີລະບຽບແບບແຜນສຳຄັນເຊັ່ນວ່າ " ລຳດັບແຖວ " ແລະ "ຊັ້ນ " ? ແນ່ນອນ, ໃນພວກເຮົານີ້ ຜູ້ທີ່ເກີດໃນຕະກຸນສູງ ແລະ ເປັນຄົນຊັ້ນສູງ ຄວນໄດ້ເງິນຫຼາຍກວ່າໝູ່. ເວົ້າກໍ່ເວົ້າເທາະໝູ່ເອີຍ, ມັນເປັນເລື່ອງໜ້າອາຍບໍ່ແມ່ນຫວະ ທີ່ຈະມາຜິດຖຽງກັນເລື່ອງເງິນ ? ເອີ... ເກືອບລືມບອກວ່າຄອບຄົວພໍ່ເຮົານັ້ນສືບເຊື້ອສາຍ ໂດຍກົງມາຈາກເຈົ້າຊີວິດໃນອານາຈັກຂອງມະຫາລາຊາ ".

" ພໍແລ້ວ ! ຢ່າເວົ້າອີກ ! " ຜູ້ທີສີ່ຮ້ອງຫ້າງໃສ່. ຄົນນີ້ຮ່າງຈ່ອຍບາງ ນຸ່ງເຄື່ອງເກົ່າມອມແມມ, ຜົມຫຍຸ້ງ, ຂະນະເວົ້າກໍ່ເສືອດຕາໄປມາລັອກແລັກ.

" ທັງເໝົດ ພວກເຈົ້ານີ້ ບໍ່ມີຈັກຄົນແຫຼະ ທີ່ມີນ້ຳໃຈຈັກໜ່ອຍ ຖ້າວ່າພວກເຈົ້າມີຄວາມເອື້ອເຟື້ອຢູ່ໃນສັນດານ ຂ້ອຍຄຶດວ່າ ພວກເຈົ້າຈະບໍ່ເວົ້າແບບໃຈດຳເຫັນແກ່ຕົວອອກມາ. ຟັງເດີ, ເຖິງແມ່ນວ່າ ຜູ້ຮັ່ງບໍ່ໄດ້ເງິນຫຼາຍຈາກການຂາຍນ້ຳມັນ, ພວກເຂົາກໍ່ບໍ່ອຶດບໍ່ຢາກ, ບາດນີ້ ຜູ້ທຸກ ມັນຊ້ຳຕ່າງ, ຖ້າຜູ້ທຸກບໍ່ໄດ້ສ່ວນແບ່ງ ກໍ່ແມ່ນວ່າອຶດຢາກຫິວຕາຍໃດເອີ... ຄົນທຸກນັ້ນ ເຂົາເປັນໜ້າສົງສານແທ້ໆ ແຕ່ໃດແຕ່ໃດມາ ຕະຫຼອດປະຫວັດສາດ. ເປັນຫຍັງເນາະ ເກີດມາທຸກມາຍາກ ແລ້ວເຂົາກໍ່ມີຊີວິດຊະນິດກິນບໍ່ອີ່ມບໍ່ເຕັມ... "

ເມື່ອຜູ້ນີ້ ເວົ້າຖ້ອຍຄຳທີ່ເຄືອງຫູຜູ້ອື່ນສິ້ນສຸດລົງ ຕາເວັນກໍ່ພໍດີເລີ່ມຕົກລັບລົງທີ່ຂອບຟ້າໄກພຸ້ນ. ເງົາຂອງພວກພໍ່ຄ້າທີ່ນັ່ງເປັນວົງ ທາບ

ລົງເທິງດິນຊາຍ ທີ່ເຢັນລົງຢ່າງໄວວາ, ແລະ ຄົນເຫຼົ່ານີ້ ກໍ່ຮູ້ແຈ້ງໃນໃຈວ່າ ມັນຊ່າງເມື່ອຍລ້າອີ່ຫຼີ.

" ຖຽງກັນແບບນີ້. . ." ຜູ້ທີ່ຫ້າກອດຂຶ້ນ ທັງລູບໜວດເຄົາສີດອກເລົາຢ່າງຖະໜອມ " ເຫັນບໍ່ລະວ່າຫາບ່ອນສຸດບໍ່ໄດ້ ? ປະກົດວ່າ ພວກເຈົ້າທັງໝົດຍັງດ້ອຍສະຕິປັນຍາຢູ່ແດ່. ດ້ອຍປັນຍານຳໄປສູ່ຄວາມສູນເສຍຫຼາຍຢ່າງໃນຊີວິດ. ຟັງເນີເພື່ອໃຫ້ພໍໃຈໝົດທຸກຄົນ, ເງິນທີ່ໄດ້ມາຈາກເຫື່ອແຮງຂອງພວກເຮົາ ຕ້ອງແບ່ງເທົ່າໆກັນ ລະຫວ່າງພວກເຮົາທັງໝົດ - ອັນນີ້ ແມ່ນວິທີສະຫຼາດທີ່ສຸດ ເພື່ອແກ້ບັນຫາ. ຄວາມໂງ່ຈ້ານັ້ນທຳລາຍໝົດທຸກຢ່າງ ". ເມື່ອເວົ້າສັ້ນໆ ສຸດລົງຢ່າງພໍອົກພໍໃຈແລ້ວເຂົາກໍ່ນັ່ງລົງປຸ່ບປັບ.

ທັນໃດນັ້ນ ຊາຍໜວດດຳຜູດລຸກຂຶ້ນ, ເຂົາເປັນຜູ້ໃຫຍ່ກວ່າໝູ່ເຂັ້ມແຂງກວ່າໝູ່ໃນກຸ່ມພໍ່ຄ້ານີ້, ເຂົາຖອດງ້າວອອກຢ່າງວ່ອງໄວ : " ຜູ້ມີອຳນາດ ບັນຊາ ! " ເຂົາເວົ້າສຽງດັງຂ້ຽວຂາດ ງວາກໄປອ້ອມຕົວ, ແນມເບິ່ງໜ້າໝູ່ໝົດທຸກຄົນ ທີ່ພວມແຕກຕື່ນຕົກໃຈ, ຕາເວັນຄ້ອຍຄ່ຳສ່ອງແສງສີແດງອາບໃບໜ້າ ເຮັດໃຫ້ເຂົາຊົງເປັນຕາຢ້ານເປັນພິເສດ.

" ເຂົ້າໃຈຕວ່າ ? ຜູ້ທີ່ມີແຂນແຂງແຮງທີ່ສຸດ, ມີງ້າວທີ່ແຂງ ແລະຄົມທີ່ສຸດຢູ່ກາງທະເລຊາຍ ຫຼື ໃນຕົວເມືອງ, ຜູ້ນັ້ນ ເປັນເຈົ້າຊີວິດ. ມັນເລື່ອງງ່າຍດາຍ ທີ່ຈະຕັດສິນວ່າ ໃຜຈະບັນຊາ. ທັງໝົດຖອດງ້າວອອກ!" ເວົ້າສຸດ ນັກເລງໜວດດຳໂຍກຕົວຄ່ອຍໆ ແລ້ວໃຊ້ງ້າວແທງຄົນທີ່ຢູ່ຕໍ່ໜ້າ ຊຶ່ງພວມຈະຖອດງ້າວຂອງຕົນອອກ.

ບັດນີ້, ການໂຕ້ຖຽງກັນບໍ່ແມ່ນການປະທະຄາລົມທຳມະດາອີກຕໍ່ໄປ. ທັງຜູ້ແຂງແຮງ ແລະ ຜູ້ອ່ອນແອຖອດເກ້າວອອກ ແລ້ວເລີ່ມຕົບຟາດພື້ນແທງກັນ ແລະ ກັນຢ່າງບ້າເຖື່ອນ.

ເລື່ອງມັນກໍ່ເລີຍກາຍເປັນການອາລະວາດ ຟາດພື້ນກັນ ! ສຽງດັງເປັນອຶກກະທຶກ, ເທດການສັບສົນອົນລະໝ່ານ ເມື່ອຄົນພວກນີ້ຂ້າກັນ ແລະ ກັນ ໂດຍບໍ່ຄິດບໍ່ເຄືອງ, ຂ້າທຸກຄົນ ບໍ່ວ່າຜູ້ໃດ ກໍ່ຕາມ ທີ່ບັງເອີນຕົກເຂົ້າມາໃກ້. ຜູ້ຄົນລົ້ມລົງຄົນຕິດຄົນຕໍ່, ຜູ້ອ່ອນແອລົ້ມລົງກ່ອນ, ບວກເລືອດຄ່ອຍໆ ແຜ່ຊຶມໄປໃນດິນຊາຍ.

ສຽງຮ້ອງຂອງຜູ້ຄົນ ຂະນະທີ່ບຸກຕີກັນ ແລະ ປະກາຍມາບແມບຂອງງ້າວ ທີ່ຕ້ອງກັບແສງຕາເວັນຍາມຄ້ອຍຄ່ຳ ເຮັດໃຫ້ອູດທີ່ລ່າມຕິດຕົ້ນພ້າວໄວ້ນັ້ນກະວົນກະວາຍ ແລະ ສັກຕີນລົງພື້ນເປັນກຶກກັກຢູ່ບໍ່ເຊົາ. ໄຫນ້ຳມັນຫອມຢູ່ຫຼັງອູດກິ້ງຕົກລົງແຕກກັບພື້ນ ແລະ ນ້ຳມັນລາຄາແພງໄຫຼຊຶມລົງດິນຊາຍ. ແຕ່ເຖິງປານນັ້ນກໍ່ຍັງບໍ່ມີຜູ້ໃດສັງເກດເຫັນ. ເມື່ອມົວນຳແຕ່ປະຫັດປະຫານຊຶ່ງກັນ ແລະ ກັນ ພວກເຂົາກໍ່ລືມນ້ຳມັນຫອມໄປເລີຍ.

ພວກເຂົາບຸກຕີກັນດົນປານໃດນັ້ນ ບໍ່ມີຜູ້ໃດເວົ້າໄດ້ຄັກແນ່. ໃນທີ່ສຸດ ພາຍຫຼັງທີ່ພວກເຂົາຫຼາຍຄົນໄດ້ລົ້ມຕາຍລົງລຽນຕິດລຽນຕໍ່ ຈຶ່ງເຫຼືອພຽງແຕ່ຊາຍໜວດດຳ ກັບ ຊາຍໜຸ່ມຜູ້ມີຜ້າຄຽນຫົວເທົ່ານັ້ນ ຍັງຢືນຈັ້ງຢູ່.

ເມື່ອຄວາມມືດຕອນຄ່ຳແລງປົກຄຸມ ໄປທົ່ວທະເລຊາຍ ປະກາຍແສງນາບແນບຍັງປະກົດໃຫ້ເຫັນຢູ່ກາງອາກາດ ທຸກຄັ້ງທີ່ວ້າວກະທົບກັນ

ແນວໃດກໍ່ຕາມ, ບໍ່ດົນ ສຽງດັງທີ່ພວກເຂົາເລວກັນກໍ່ສະຫງົບລົງ ຄົນທັງສອງເຕັ້ນໄປດ້ວຍຮອຍບາດ ຈາກຄົມວ້າວຫຼາຍດວງ ແລະ ແລ້ວຕ່າງກໍ່ລົ້ມລົງ ຍ້ອນເມື່ອຍຈົນປາກບໍ່ໄດ້.

ມາຮອດເວລານີ້ ດວງເດືອນລອຍຂຶ້ນເທິງຟ້າຍາມລາຕີ ຊຶ່ງປະດັບດ້ວຍດາວ ທີ່ພວມສ່ອງແສງເປັນຍິບຍັບຈຳນວນນັບບໍ່ຖ້ວນ. ທີ່ກາງທະເລຊາຍ ຊຶ່ງບັດນີ້ ງຽບສະຫງົບລົງອີກເທື່ອໜຶ່ງ ຂອນຜີຂອງພໍ່ຄ້າຍັງຢາຍໄປທົ່ວ, ໝໍ້ນ້ຳມັນແຕກຊະຊາຍ, ສ່ວນອູດຍັງຄົງລ່າມຕິດກັບຕົ້ນພ້າວ ແລະ ຍືນຢູ່ຢ່າງສະຫງົບງຽບ - ພາບທັງໝົດນີ້ ເບິ່ງເງົາສະຫຼົວພາຍໃຕ້ແສງເດືອນສີຂາວນວນ ເປັນພຸ່ມພູ່.

ມັນແມ່ນເວລານີ້ ທີ່ມີອັນໃດອັນໜຶ່ງເກີດຂຶ້ນ, ຄືດິນຊາຍເລີ່ມຄ່ອຍໆ ສວດຂຶ້ນ, ແລະ ບໍ່ດົນ ກໍ່ກາຍເປັນພູດິນຊາຍຂະໜາດໃຫຍ່ແລ້ວພ້ອມກັບສຽງດິນຊາຍ ນັບເປັນໂຕນໆ ຫຼົ່ງໄຫຼເທລົງນັ້ນ, ໄດໂນເສົາຂະໜາດມະຫຶມາ ກໍ່ປະກົດຕົວຂຶ້ນມາຈາກໃຕ້ພູດິນຊາຍນັ້ນ.

ໄດໂນເສົາ ໂຕນີ້ ນອນຫຼັບຢູ່ໃຕ້ດິນຊາຍເລິກໆ ມາໄດ້ຫຼາຍພັນປີແລ້ວ, ແຕ່ບໍ່ເຄີຍຫິວເຂົ້າຫິວນ້ຳຈັກເທື່ອ, ເພາະຢູ່ກະໂຕເທິງຫົວມັນນັ້ນແມ່ນໂອເອຊິສຂະໜາດໃຫຍ່. ຢູ່ກາງໂອເອຊິສ ນີ້ ມີນ້ຳພຸທຳມະຊາດ,

ແລະ ທຸກໆ ມື້ມີນ້ຳໃສເຢັນພຸ່ງອອກມາ ແລ້ວໄຫຼລົງເຂົ້າປາກໄດໂນເສົາ.

ເທິງຫຼັງສັດມະຫຶມາ ນີ້ ມີໜາມສັນຫຼັງຍາວໆ ປະກົດຄືຈະສຽບແທງທ້ອງຟ້າ ແລະ ຕ້ອງກັບແສງເດືອນເປັນມັນແມັບໆ ຊວນເປັນຕາຢ້ານ. ຕາສອງເບື້ອງໃຫຍ່ໂລ້ ແລະ ເປັນສີແດງໄຟຮຸ່ງ, ໃນປາກມີແຂ້ວ ເປັນແຖວຊິບລິບ ເຫຼັ້ມໃຫຍ່ໆ ແຂງໆ ສາມາດຂົບກ້ອນຫີນໃຫຍ່ໃຫ້ມຸ່ນໄດ້.

ໄດໂນເສົາ ຢືນຢູ່ຄາວໜຶ່ງ, ແລ້ວຄ່ອຍໆ ງວາກມາເບິ່ງຄົນທີ່ລົ້ມເດຍລະດາດຢູ່ເທິງດິນຊາຍ. ຕໍ່ມາມັນຍ່າງຊ້າໆ ເຂົ້າໄປຫາ ອ້າປາກອອກກວ້າງໆ ແລ້ວສວາບກິນໄປເທື່ອລະຄົນ. ໃນຈຳນວນນີ້ ມີບາງຄົນພວມຮ້ອງຄາງ ແລະ ຫາຍໃຈເປັນເທື່ອສຸດທ້າຍ, ຄົນອື່ນໆ ນັ້ນ ເຖິງແມ່ນວ່າ ໄດ້ຮັບບາດເຈັບສາຫັດ ແຕ່ກໍ່ຍັງເໜັງຕີງຢູ່ ແຕ່ວ່າ ໄດໂນເສົາບໍ່ເອົາຫົວຊາ, ມັນກິນໝົດທຸກຄົນ ທັງຄົນເປັນທັງຄົນຕາຍ ທັງທີ່ນເປັນຕາອະເຫຍືອງ ແລະ ພາຍຫຼັງກິນຜູ້ສຸດທ້າຍແລ້ວ ມັນກໍ່ຫົ່ງດັງກະພຶດກະຟາດແຮງໆ ແລ້ວກໍ່ເວົ້າກັບຕົນເອງວ່າ :

" ໂຢ! ຈັ່ງແມ່ນອຶກກະທຶກເວີ້ຍ! ມະນຸດນີ້ ເປັນພວກສັດໂລກທີ່ພິດພີ້ນີ້ນັບອີ່ຫຼີ. ຂ້າແປກໃຈວ່າ ເປັນຫຍັງພວກເຂົາຕ້ອງໂຕ້ຖຽງກັນດັງແຮງປານນັ້ນ! ແລະຕໍ່ມາ ພວກເຂົາກໍ່ມ້ວນທ້າຍ ດ້ວຍການບຸກຕີຊິງກັນແລະ ກັນ. ຂ້າຕັ້ງໃຈຈະຫຼັບຕໍ່ຢູ່ກ້ອງດິນຊາຍຕື່ມອີກ ໕໐.໐໐໐ ປີ, ທັງນີ້ ເພາະຂ້າຄິດວ່າ ເມື່ອຮອດຕອນນັ້ນ ໂລກຈະງຽບສະຫງົບລົງແດ່ ".

ໄດໂນເສົາ ເຮັດສຽງພູ່ ໆ ແຮງ ໆ.

" ເອີ. . . ມັນເປັນໄປຈັ່ງຊີ້ໃດ ມະນຸດພວກນີ້ ຕັ້ງຕົນຖຽງກັນສຽງ ພຶດສະນັ່ນຢູ່ເທິງຫົວຂ້າ ແລະ ປຸກໃຫ້ຂ້າຕື່ນຂຶ້ນ. ແລ້ວບໍ່ທັນດົນ ປະກົດວ່າມີສຽງແລ່ນໄປແລ່ນມາເປັນສິບລະວົນ ແລະ ມີສຽງວ້າວປະທະກັນ, ຈັກໜ່ອຍນ້ຳມັນທີ່ມີກິ່ນຫອມສົດຊື່ນ ກໍ່ມາຕ້ອງດັງຂ້າ. ເຫດການທັງໝົດນັ້ນ ດຳເນີນໄປ ຈົນຂ້າຫຼັບບໍ່ໄດ້, ດັ່ງນີ້ ຂ້າຈຶ່ງຂຶ້ນມາ ແລ້ວກໍ່ພົບອາຫານພໍດີ ".

ແລ້ວໄດໂນເສົາ ກໍ່ກົ່ງຫຼັງ ແລະ ຄ່ອຍໆນັ່ງລົງເທິງດິນຊາຍ, ງໍຫາງຂຶ້ນຢ່າງລະມັດລະວັງ ເພື່ອບໍ່ໃຫ້ນັ່ງຖືກໜາມແຫຼມ, ຕາຫຼຽວເບິ່ງໝູ່ດາວທີ່ສ່ອງແສງຍິບຍັບຢູ່ທ້ອງຟ້າອັນສົດໃສຍາມລາຕີ.

" ໂອ ດວງດາວຢູ່ເທິງພຸ້ນ ບໍ່ປ່ຽນແປງຈັກໜ່ອຍເລີຍ ຕັ້ງແຕ່ເທິງແຕ່ນານມາແລ້ວ ເວລາທີ່ພວກຂ້າໄດໂນເສົາ ບົກຄອງໂລກຢູ່. . . ໃນສະໄໝພວກຂ້ານັ້ນ ການຕົບຕີກັນບໍ່ປະກົດວ່າຈະຢຸດຕິໄດ້ຈັກເທື່ອ ເຊັ່ນດຽວກັນ, ແລະ ໝູ່ເພື່ອນຂອງຂ້າຈຳນວນຫຼວງຫຼາຍ ກໍ່ລົ້ມຕາຍລົງ ເທື່ອລະໂຕສອງໂຕ" ໄດໂນເສົາ ເວົ້າດ້ວຍຄວາມໂສກເສົ້າຢ່າງສຸດຊຶ້ງ " ທຸກ ໆ ໂຕ, ທັງໝົດພວກເຂົາທັ້ນລະ ຕາຍແລະດັບສູນໄປ. . . ທັງອ້າຍ ທັງເອື້ອຍ ແລະ ນ້ອງ, ທັງໝູ່ເພື່ອນ. . . ຕາຍ ໝົດເລີຍ ".

" ພາຍຫຼັງໄດ້ຕົບຕີ ແລະ ສັງຫານມິດສະຫາຍທັງຫຼາຍ ທີ່ຂ້າບໍ່ຖືວ່າເປັນເພື່ອນອີກຕໍ່ໄປແລ້ວນັ້ນ ຂ້າກໍ່ຕັດສິນໃຈນອນຫຼັບ ຢູ່ກ້ອງທະເລ

ຊາຍອັນງຽບສະຫງົບ ຈົນກວ່າການຕົບຕີກັນທັງໝົດຈະໄດ້ຍຸດຕິລົງ. ແຕ່ວ່າ ບາດນີ້ ມັນແມ່ນມະນຸດ, ພວກສັດສອງຂາໂຕນ້ອຍໆ ທີ່ໜ້າສັງເວດ. ພວກເຂົາເພີ່ມຂຶ້ນເລື້ອຍໆ ຈົນວ່າຈະປົກຄຸມໄປທົ່ວດາວໂລກ, ແລະ ບາດນີ້ ພວກເຂົາຕັ້ງຕໍ່ຕີກັນຢູ່ບ່ອນນີ້ບ່ອນນັ້ນ. ຂ້າສາມາດບອກໂລດວ່າ ຈະເກີດຫຍັງຂຶ້ນ, ຖ້າພວກເຂົາເຮັດແນວນີ້ ຕໍ່ໄປຈັກໜ່ອຍມະນຸດຈະສູນພັນ. ໂທ ໜ້າສົງສານ ! ”

ໄດໂນເສົາ ຫຼັບຕາລົງຊ້າໆ ແລະ ກັ້ນລົມໃນທ້ອງໄວ້ ຊື່ງອອກມາຈາກສ່ວນເລິກໆ ຂອງກະເພາະອາຫານຂະໜາດໃຫຍ່, ຕໍ່ມາ ມັນມືນຕາໂລ້ໆ ສີແດງໆ ເຫຼືອດໄປເຫຼືອດມາ ແລະ ປະກົດຄືຄິດຫວນຄືນຫຼັງເຖິງບາງສິ່ງບາງຢ່າງໃນອະດີດຕະການ.

ນ້ຳຕາເມັດໃສໆ ໂຕ່ງໆ ໄຫຼອອກຈາກຕາ, ແລ້ວໄດໂນເສົາໃຫຍ່ໂຕນີ້ ກໍ່ຫາຍໃຈເລິກໆ, ແລະ ໃນທັນໃດນັ້ນ ມັນກໍ່ລົ້ມລົງ ຂ້າງຟາດໃສ່ດິນຊາຍ ສຽງດັງປົ້ມກ້ອງສະນັ່ນ. ພາຍໃນບໍ່ຫຼາຍນາທີ ມັນກັບກາຍເປັນຊາກຫີນຂະໜາດພູເຂົາ.

ເວລານັ້ນ ທ້ອງຟ້າຍາມອະລຸນເໜືອທະເລຊາຍ ປະກົດມີຮຸ້ງກິນນ້ຳມະຫັດສະຈັນ, ມັນໃຫຍ່ຫຼາຍ ຈົນປະກົດວ່າຈະກືນກິນແຜ່ນຟ້າ ແລະດວງດາວທັງໝົດ.

" ນີ້ເປັນພາບລວງຕາບໍ ? " ສຽງພຶມພຳແຜ່ລາມໄປທົ່ວທ້ອງຟ້າເໜືອທະເລຊາຍ ອັນກວ້າງໃຫຍ່, ທອບເອົາລົມໄປຍັງປາຍສຸດຂອງດາວໂລກ ແລະ ໄກອອກໄປພຸ້ນ.

( ຮູບປະກອບ ໂດຍ ກາງວູ - ຢຸ່ນ)





# ລະດູບານໃໝ່ມາແຕ່ໃສ ?

ປີນີ້, ຢູ່ພູລົງ ໄກຈາກບ້ານອ້ອມແອ້ມນີ້ ມີຫິມະຕົກຢ່າງໜັກຕະຫຼອດເວລາຄືກັບວ່າຈະບໍ່ມີຍາມເຊົາຈັກເທື່ອ.

ດານກົຈິ ຫົວໜ້າພູລົງສັ່ນດິດໆ ເມື່ອມັນໂປໂລຫົວອອກຈາກປາກຖ້ຳ ແລະ ຫຼຽວເບິ່ງຟ້າອັນກວ້າງໃຫຍ່. ໄກອອກໄປພຸ້ນ ຫິມະພວມພົມລົງ ເບິ່ງຄ້າຍຄືປະກາຍໄຟສີຂາວຈາກບັ້ງໄຟດອກທີ່ແຕກຢູ່ກາງເວຫາສູງໆ, ມັນບົ່ກຄຸມໂນນພູ ແລະ ທົ່ງພຽງ ຊຶ່ງຕົ້ນໄມ້ບໍ່ມີໃບ ແລະ ຫຍ້າກໍ່ແຫ້ງກະແດ້ງ.

ຂະນະທີ່ ສົ້ງຊອມເບິ່ງພາບເຫຼົ່ານີ້ ດ້ວຍຄວາມອ່ອນອົກອ່ອນໃຈ ດານກິຈິກໍ່ປະກົດໄດ້ຍິນສຽງໃຜຜູ້ໜຶ່ງພາຍໃນຕົວມັນເອງເວົ້າອອກມາວ່າ " ຂໍພຽງແຕ່ໃຫ້ຍອງຫົມະທຸກໆ ອັນເປັນສິ່ງໃດສິ່ງໜຶ່ງທີ່ກິນໄດ້. . ." ພ້ອມກັນນັ້ນມັນກໍ່ຕັ້ງຕົ້ນນັບໂດຍໄລ່ນິ້ວມື.

" ໝາກໂປມ, ໝາກອະງຸ່ນ, ໝາກກໍ່, ໝາກເດື່ອ. . . ແມ່ນລະ, ແລ້ວ ກໍ່ມັນດ້າງ. . . ບະ, ຂ້ອຍເກືອບບໍ່ມີຫຍັງໃສ່ທ້ອງເລີຍ ຕະຫຼອດເດືອນທີ່ຜ່ານມາ. ທ້ອງທີ່ໜ້າສົງສານຂອງຂ້ອຍ ຮູ້ສຶກຄືກັບວ່າມັນແປຈົນໄປ ຕິດຢູ່ສັນຫຼັງ ແລະ ຖ້າວ່າບໍ່ມີຫຍັງດີຂຶ້ນ ຂ້ອຍກໍ່ຈະຕາຍລ້າໆເພາະຫິວ"

ຫົວໜ້າຝູງລີງສັ່ນບົ້ນໆ, ແຂ້ວກະທົບກັນດັງກົ໊ບໆ ແລ້ວມັນກໍ່ງວາກຄືນໄປເບິ່ງພາຍໃນຖ້ຳ.

ທ່າມກາງແສງສະຫຼົວພາຍໃນຖ້ຳນັ້ນ ຈຸ້ມເຈື້ອຂອງດານກິຈິແຫ່ງພູລີງທັງໝົດ, ທຸກຄອບຄົວຫຼືໝູ່ພວກ ຕ່າງກໍ່ບຽດກັນເພື່ອໃຫ້ອົບອຸ່ນ. ພວກລີງນ້ອຍກອດເອິກແມ່ອ້ອນຕ້ອນບໍ່ຍອມວາງ, ພວກລີງໜຸ່ມກັດແຂ້ວກອັດໆ ຢ່າງອາລົມເສຍ, ສ່ວນພວກລີງເຖົ້າເບິ່ງໄປຍັງທີ່ວ່າງເປົ່າທັງແກວ່ງຫົວໄປທາງຂ້າງ. ໃນໝູ່ລີງທີ່ຈ່ອຍ ແລະ ເມື່ອຍອ່ອນເຫຼົ່ານີ້ ມີແຕ່ຕາເທົ່ານັ້ນທີ່ສຸກໃສມີປະກາຍແຫ່ງຊີວິດ ແລະ ຕາເຫຼົ່ານີ້ທັງໝົດເບິ່ງໄປຍັງຫົວໜ້າ ຄືດານກິຈິ ຢ່າງມິດງຽບ ເພື່ອຮ້ອງຂໍສິ່ງໃດສິ່ງໜຶ່ງກິນ.

ດານກິຈິເປັນຫົວໜ້າພູລີງມາຫຼາຍປີແລ້ວ, ບໍ່ພຽງແຕ່ມັນເປັນຜູ້ເກົ່າທີ່ສຸດໃນຈຸ້ມເຈື້ອຂອງມັນເທົ່ານັ້ນ ແຕ່ມັນຍັງມີປັນຍາ, ມີຄວາມກ້າ

ທານ ແລະ ມີໃຈເອື້ອເຟື້ອ, ດັ່ງນີ້ມັນຈຶ່ງໄດ້ຮັບຄວາມນັບຖືຈາກລີງທັງໝົດ ທີ່ມັນບໍ່ກຄອງ. ເວລາໃດລີງສັດຕູ ບຸກໂຈມຕີ ດານກີຈີຢືນຕໍ່ສູ້ຢູ່ແຖວໜ້າສະເໝີ ແລະ ເມື່ອໃດກໍ່ຕາມທີ່ລີງຈຸ້ມເຈື້ອຂອງມັນເອງຕີກັນ ມັນກໍ່ຟ້າວເຂົ້າໄປຈັດການ ໃຫ້ມີຄວາມສະຫງົບທັນທີໂລດ. ແນ່ນອນ, ພ້ອມດຽວກັນນັ້ນມັນກໍ່ເອົາໃຈໃສ່ເບິ່ງແຍງລີງເຖົ້າລີງແກ່, ລີງແມ່ກັບລີງນ້ອຍ.

ດັ່ງນັ້ນ ລີງທັງໝົດຈຶ່ງຝາກຄວາມຫວັງໄວ້ເປັນພາລະອັນໜັກໜ່ວງເຕັງລີງທີ່ປ່າຂອງດານກີຈີ. ດ້ວຍຄວາມຮູ້ສຶກຮັບຜິດຊອບສູງ ຫົວໜ້າກົດແຂ້ວຢ່າງບໍ່ຮູ້ສຶກຕົວ ແລະ ຫຼັບຕາໄວ້ ຂະນະທີ່ຕົນເອງພະຍາຍາມຄົ້ນຄິດຫາຄວາມຄິດປັ່ນຍາອັນດີເລີດ.

ເຖິງແມ່ນວ່າຫຼັບຕາໄວ້ ແລະ ມີຄວາມຍາກສັບສົນປານໃດກໍ່ຕາມໃນການ ພະຍາຍາມຄົ້ນຄິດ ແຕ່ເຫດການບາງຢ່າງ ກໍ່ຍັງຄົງເຄື່ອນໄຫວເຕັ້ນໄປເຕັ້ນມາຢູ່ຕໍ່ໜ້າຕໍ່ຕາຂອງມັນໃນມະໂນພາບ. ມັນແມ່ນເລື່ອງໃດເລື່ອງໜຶ່ງ ທີ່ເກີດຂຶ້ນໃນວັນໜຶ່ງຕອນທ້າຍຂອງລະດູຮ້ອນທີ່ແສນຮ້ອນເມື່ອປີທີ່ແລ້ວ.





24 / VII

ລະດູຮ້ອນປີນັ້ນ ຈັ່ງແມ່ນຮ້ອນພິລຶກ, ຮ້ອນກວ່າປີໃດໆ ທີ່ພວກລິງເຖົ້າເຄີຍປະສົບມາຢູ່ພູລີງ. ຕາເວັນສົ່ງແສງກ້າເຜົາໄໝ້ທ້ອງຟ້າຍາມລະດູຮ້ອນ, ທ້ອງທົ່ງ ແລະ ພູຜາຖືກແດດຈົນແຫ້ງເປັນສີຕອງແຫ້ງ. ເທິງທ້ອງຟ້າສີຄາມກາຍເປັນສີຈາງໆ ເກືອບກາຍເປັນສີຂາວ, ກ້ອນເມືອລອຍລ່ອງສໍ່ສະແດງວ່າຈະມີຝົນ, ແຕ່ແລ້ວຢາດນ້ຳເມັດໜຶ່ງກໍ່ບໍ່ຕົກລົງໃສ່ແຜ່ນດິນທີ່ແຫ້ງກະແດ້ງເລີຍ, ໃຕ້ແສງແດດອັນຮ້ອນເອົ້າ ຮວງເຂົ້າຕາມທົ່ງງອບລົງຢ່າງໄວວາ ແລະ ທັງລີບທັງແຫ່ວ.

ຊາວບ້ານພາກັນຕົກໃຈຢ່າງໃຫຍ່. ຖ້າບໍ່ມີຫຍັງເກີດຂຶ້ນໃນບໍ່ດົນແມ່ນວ່າໄພອຶດຫິວ ຢ່າງບໍ່ເຄີຍໄດ້ຍິນມາກ່ອນຈັກເທື່ອ ຈະເກີດຂຶ້ນຢ່າງຫຼີກເວັ້ນບໍ່ໄດ້. ທຸກໆມື້ ຊາວນາພາກັນໄປຕັກນ້ຳໄກໆ ຈາກຫ້ວຍທີ່ພວມຈະບົກແຫ້ງເພື່ອເອົາໄປໃສ່ນາທີ່ແຫ້ງກະແດ້ງ ທັງພະຍາຍາມຄວັດຫານ້ຳຢູ່ຕາມໜອງບຶງ ທີ່ແຫ້ງແລ້ວ. ເຂົາເຈົ້າອອກແຮງເຮັດວຽກ ເພື່ອໃຫ້ມີຊີວິດຢູ່ລອດ, ແຕ່ພະຍາຍາມປານໃດກໍ່ຍັງບໍ່ເປັນຜົນ.

ເມື່ອຮອດລະດູໃບໄມ້ຫຼົ່ນ ຕົ້ນເຂົ້າກໍ່ລົ້ມລົງດິນ ແລະ ບໍ່ມີເມັດເຂົ້າແມ່ນແຕ່ເມັດດຽວ. ສວນປູກຜັກກໍ່ເປົ່າແປນ, ຫຍ້າ, ແລະ ຕົ້ນໄມ້ຕາມທົ່ງ, ຕາມພູກໍ່ແຫ່ວແຫ້ງຕາຍເຊັ່ນດຽວກັນ.

ປະກົດວ່າ ນ້ຳທັງໝົດໄດ້ພ່າຍໜີໄປບ່ອນອື່ນເອົາຊື່ໆ, ມັນແມ່ນສະພາບເງື່ອນໄຂອັນໃດນໍ ທີ່ນຳເອົາສັດມີຊີວິດທັງໝົດໃຫ້ມາຕົກຢູ່ເຊັ່ນນີ້!

ເມື່ອປະກົດວ່າ ຄວາມຮ້ອນອຸບາດ ຈະບໍ່ສິ້ນສຸດເປັນຈັກເທື່ອ, ດານຈິກິຫິວໜ້າລີງ ຈຶ່ງລົງຈາກພູໄປເພື່ອເບິ່ງວ່າ ທຸກສິ່ງທຸກຢ່າງເປັນແນວໃດ

ຢູ່ບ່ອນທີ່ປະຊາຊົນອາໄສຢູ່. ຢູ່ພູລົງນີ້ຕົ້ນໝາກກໍ່ ແລະ ຕົ້ນໝາກເດື່ອ ບໍ່ເປັນໜ່ວຍເລີຍປີນີ້ ແລະ ດານກິຈິ ຮູ້ວ່າຈຸ້ມເຈື້ອຂອງມັນຈະບໍ່ມີອາຫານກິນພຽງພໍໃນລະດູໜາວທີ່ຈະມາເຖິງນີ້. ດັ່ງນີ້ ມັນຈຶ່ງລົງໄປເພື່ອເບິ່ງວ່າ ພໍຈະລັກເອົາອາຫານໄດ້ແດ່ບໍຈາກທົ່ງໃກ້ໆ ຕົວເມືອງ.

ແລ້ວດານກິຈິກໍ່ພົບວ່າບໍ່ເປັນຕາເຊື່ອເລີຍ ທີ່ອ້ອມແອ້ມບ້ານນັ້ນທຸກສິ່ງທຸກຢ່າງຕົກຢູ່ໃນສະພາບໜ້າຍົນທຸກ. ພື້ນດິນຕາມທົ່ງນາແຫ້ງກະແດ້ງ ແລະ ແຕກແຫງ, ບໍ່ວ່າຢູ່ບ່ອນໃດ ບໍ່ມີຮ່ອງຮອຍບອກວ່າມີເມັດເຂົ້າເລີຍ, ມີແຕ່ຂີ້ຝຸ່ນປິວໄປຕາມລົມ.

ດານກິຈິ ເຫັນພາບສິ່ງອື່ນພົ້ນ, ນັ້ນຄືຊາວບ້ານທີ່ສິ້ນສະຕິ ຍ້ອນຄວາມຮ້ອນ ແລະ ຄວາມຫິວ ນອນສະຫຼົບບໍ່ເໜັງບໍ່ຕິງ ຢູ່ຕາມແຄມທົນທາງ, ຕາຈ້ອງເບິ່ງໄປຢ່າງບໍ່ມີຄວາມໝາຍ. ປະກົດວ່າຢູ່ບ່ອນຮ້ອນອົບເອົ້າ ແລະ ແຫ້ງແລ້ງນີ້ບໍ່ມີໃຜຈັກຄົນ ທີ່ມີເຫື່ອມີແຮງພຽງພໍເພື່ອເຄື່ອນຍ້າຍສົບ ອອກຈາກບ່ອນທີ່ນອນຕາກແສງຕາເວັນ ອັນໄຮ້ຄວາມປານີນັ້ນ. ກະທັ້ງດຽວນີ້ ມີຜູ້ຄົນກະພຸ່ບກະຟາບໄປທີ່ພູເຂົາ ແຕ່ບໍ່ປະກົດວ່າເຂົາເຈົ້າຈະໄປໄດ້ໄກເລີຍ.

ດານກິຈິຈ້ອງເບິ່ງສິ່ງທີ່ປະກົດຕໍ່ສາຍຕາຢ່າງບໍ່ໜ້າເຊື່ອ. ມັນສັ່ນເຊັນ ທັງເຫື່ອກໍ່ອອກທົ່ວຮ່າງກາຍ, ມັນຮ້ອງອອກມາດັງໆ ຈາກຫົວໃຈ: " ບະ, ມັນໂພດໄປແລ້ວ. ປະຊາຊົນເຫຼົ່ານີ້ ໜ້າສົງສານທີ່ມາປະສົບກັບໄພອຶດຫິວຢ່າງທາລຸນ! ຢ່າງໂຊເຊສັບສົນປົ່ນເປແບບນີ້ ພວກເຂົາ

ອາດຖືກພີ່ນ້ອງໄຫດງວກັນເອງຈັບກິນເປັນອາຫານພຸ້ນກໍ່ເປັນໄດ້, ອຸ້ຍ ! ຈັ່ງແມ່ນອະເຫຼືອງ ! "

ມັນໝອບລີງຕ່ຳໆ ເພື່ອໃຫ້ພຸ່ມໄມ້ປົກບັງ ແລ້ວມັນກໍ່ແລ່ນໄປໄວໆ ເທົ່າທີ່ຈະໄວໄດ້ ແລ່ນກັບຄືນໄປຍັງພູລີງ. ມັນຈະຕ້ອງໄປບອກຈຸ້ມເຈືອລີງກ່ຽວກັບໄພອຶດຫິວທັນທີໂລດ ໂດຍບໍ່ໃຫ້ເສຍເວລາ.

ຖ້າເລື່ອງມັນຮ້າຍແຮງສຳລັບປະຊາຊົນຄືແນວນີ້ ອີກບໍ່ດົນຢູ່ພູລີງກໍ່ຈະປະເຊີນກັບຄວາມທຸກຍາກ ທໍລະມານ ແລະ ສັບສົນເຊັ່ນດຽວກັນ. ດານກິຈິກັດແຂ້ວກອັດໆ ແລ້ວແລ່ນສີ່ຂາໄປໄວໆ ທັງຮູ້ສຶກວ່າຄວາມທຸກຮ້ອນເຂັ້ນໃຈມັນອັ້ງແໜ້ນຢູ່ໃນຫົວໃຈ.

" ຕາຍລະ, ຫາກໍ່ຍັງຢູ່ໃນລະດູໃບໄມ້ຫຼົ່ນໃດນີ້. ເມື່ອລົມໜາວກະດ້າງພັດມາ ພວກເຮົາຊິເອົາຊີວິດລອດລະດູໜາວອັນດົນນານຈັ່ງໃດ, ພວກເຮົາຊ້ຳຖືກຕັດຂາດຈາກໂລກພາຍນອກຍ້ອນຫິມະໜາໆ ອີກ. . . ປີທີ່ຜ່ານໆມາ ພວກເຮົາມັກລົງຈາກພູລີງໄປ ຕອນສົ້ນລະດູໃບໄມ້ຫຼົ່ນເພື່ອລັກເອົາອາຫານການກິນ ຈາກຊາວບ້ານ, ແຕ່ປີນີ້ ບໍ່ມີຫຍັງພໍຊິໄປລັກປີ້ມັນແມ່ນພາວະຮ້ອນຮົນແລ້ວຕວ່າ ! "

ທັງແກວ່ງຫົວດ້ວຍຄວາມອຸກອັ່ງ ທັງພະຍາຍາມຄົ້ນຄິດວ່າຈະເຮັດຢ່າງໃດ ດານກິຈິປີນຂຶ້ນພູລີງໄປເທື່ອລະຂັ້ນ, ແລ້ວໃນທັນໃດ ມັນກໍ່ຢຸດຊະງັກກາງຂັ້ນ. ມີສຽງຄ່ອຍໆ ດັງມາ ຄ້າຍໆຄືສຽງໃຜຜູ້ໜຶ່ງພວມເຮັດວຽກ, ສຽງນີ້ມາຈາກປ່າຫຍ້າແຄມຫ້ວຍ. ດານກິຈິໝູບຄານໄປຫາສຽງນັ້ນຢ່າງງຽບໆ.

ສິ່ງທີ່ມັນເຫັນກໍ່ຄືພໍ່ນາຄົນໜຶ່ງ ພວມຕື່ນເຕັ້ນເກັບເອົາສິ່ງໜຶ່ງຈາກພື້ນດິນ ແລ້ວເອົາໃສ່ກະຕ່າທີ່ໜີບໄວ້ຢູ່ກ້ອງຂີ້ແຮ້.

“ ໂຫ ໆ, ແມ່ນແນວກິນຕວ່າ ! ? ” ດານກີຈິຄິດຂະນະທີ່ມັນຈອບເຂົ້າໄປຫາງຫຼັງພໍ່ນາ ເພື່ອສ່ອງເບິ່ງຂ້າງໃນກະຕ່າ ມີເຫັດຄັນຮົ່ມດອກໃຫຍ່ ສີແດງສົດໃສເກືອບເຕັມກະຕ່າເລີຍ.

“ ນີ້, ຖ້າບຶດດຽວ. . . ” ດານກີຈິເວົ້າກັບຕົນເອງແລ້ວເບິ່ງໜ້າພໍ່ນາດ້ວຍຄວາມປະຫຼາດໃຈ “ ເຫັດຄັນຮົ່ມໃຫຍ່ສີແດງເຫຼົ່ານີ້ເປັນເຫັດເບື່ອ ກິນແລ້ວຫິວບໍ່ເຊົາແທ້ໆໃດ. ເຫັດຄັນຮົ່ມເບື່ອເປັນອັນຕະລາຍເຖິງຕາຍໄດ້. ຜູ້ໃດກໍ່ຕາມທີ່ກິນເຫັດເຫຼົ່ານີ້ ຕອນທຳອິດຈະເລີ່ມຕົ້ນຫິວ ແລະເມື່ອອາການຫິວເປັນໄປຢ່າງຄວບຄຸມບໍ່ໄດ້ກໍ່ຈະປ່ວງບ້າໜັກຂຶ້ນ ແລ້ວກໍ່ຈະເສຍຈິດເລີຍ ແລ້ວກໍ່ຕາຍ. ລີງເຖົ້າຜູ້ຊຶ່ງເຄີຍເປັນຫົວໜ້າພູລີງ ເມື່ອຄາວຂ້ອຍຍັງນ້ອຍໆ ໄດ້ເຕືອນວ່າຢ່າກິນເຫັດອັນນີ້ແມ່ນແຕ່ດອກດຽວ. ອີ່ຫຼີໃດ, ມັນແມ່ນເຫັດປະເພດດຽວກັນແທ້ໆ. ”

ດານກີຈິເຊັດເຫື່ອອອກຈາກໃບໜ້າ ແລະ ຈົ່ມພຸມພຳກັບຕົນເອງ: “ແປກປະຫຼາດເວີ້ຍ ຖ້າພໍ່ນາຜູ້ນີ້ຢູ່ອ້ອມແອ້ມໜີ້ ແນ່ນອນລາວຕ້ອງຮູ້ວ່າເຫັດສີແດງສົດໃສເຫຼົ່ານີ້ເປັນເຫັດເບື່ອທີ່ເປັນອັນຕະລາຍເຖິງຕາຍ. ຂ້ອຍງົງຫີບເລີຍ, ມັນເປັນຈັ່ງໃດຫວະ. . . ”

ພໍ່ນາຄົນນັ້ນບໍ່ສັງເກດເຫັນເລີຍວ່າ ມີລີງພວມຈອບເບິ່ງລາວຢູ່ພຸ່ມໄມ້, ລາວມົວແຕ່ເກັບເຫັດເບື່ອແລ້ວເອົາໃສ່ກະຕ່າ.

ຕໍ່ມາພໍ່ນາຍ່າງກັບຄືນ ມຸ່ງໜ້າສູ່ບ້ານ ພ້ອມກະຕ່າເຕັມແຕ່ເຫັດ, ດານກິຈິຍ່າງນຳຫຼັງໄປຢ່າງມິດໆ. ບາງທີ ພໍ່ນາຜູ້ນີ້ອາດຮູ້ວິທີຖອນພິດເບື່ອອອກຈາກເຫັດເພື່ອໃຫ້ກິນໄດ້.

ບໍ່ເຫິງບໍ່ນານ ພໍ່ນາກໍ່ມາຮອດເຮືອນຕູບນ້ອຍໆ ຢູ່ແຄມບ້ານແລ້ວເຂົ້າໄປຂ້າງໃນ. ດານກິຈິໝອບໄປຫາປ່ອງຢ້ຽມນ້ອຍໆ ແລ້ວສ່ອງເບິ່ງ.

ມັນເປັນເຮືອນນ້ອຍໆ ທີ່ໜ້າຢູ່, ທຸກຢ່າງຈັດເປັນລະບຽບຮຽບຮ້ອຍ, ຢູ່ກາງຫ້ອງມີເດັກນ້ອຍຫຼາຍຄົນ. ດານກິຈິເລີ່ມນັບນິ້ວມື " ໜຶ່ງ ສອງ, ສາມ, ສີ່, ຫ້າ, ຫົກ, ເຈັດ. . . ໂທ, ມີອ້າຍເອື້ອຍນ້ອງເຈັດຄົນ ". ເດັກນ້ອຍເວົ້າສຽງເສາະໃສ ຕ້ອນຮັບຜູ້ເປັນພໍ່ທີ່ກັບມາຮອດເຮືອນ. ພວກເຂົາເດ່ມືໄປຮັບເອົາກະຕ່າ, ດານກິຈິອ້າປາກຄ້າງເມື່ອເຫັນແຂນເຫັນມືທີ່ເດ່ໄປນັ້ນຈ່ອຍໆ ບາງໆ ແລະ ອ່ອນນ້ອຍ.

ຜູ້ເປັນພໍ່ຮ້ອງແລ້ວແມ່ກໍ່ອອກມາຈາກເຮືອນຄົວ, ພໍ່ເວົ້າຊຶມໃສ່ຫູຂອງແມ່ກ່ຽວກັບເລື່ອງໃດເລື່ອງໜຶ່ງ. ຢູ່ນອກປ່ອງຢ້ຽມ ດານກິຈິບໍ່ໄດ້ຍິນດອກວ່າ ລາວເວົ້າຫຍັງ, ແຕ່ເຫັນແມ່ເດັກນ້ອຍງຶກຫົວຮັບຊ້າໆ ແລະປະກົດວ່າແມ່ຟັງຄວາມພໍ່ດ້ວຍໃບໜ້າເສົ້າໆ.

ແມ່ຈັບເອົາກະຕ່ານຳພວກເດັກນ້ອຍ ແລະ ເວົ້າອັນໃດອັນໜຶ່ງ ຂະນະທີ່ຍ່າງກັບຄືນໄປເຮືອນຄົວ.

ເມື່ອເດັກນ້ອຍໄດ້ຍິນວ່າແມ່ເວົ້າຫຍັງແລ້ວ ພວກເຂົາກໍ່ຕື່ນເຕັ້ນດີໃຈຂຶ້ນທັນທີທັນໃດ ຈົນວ່າດານກິຈິບໍ່ເຊື່ອສາຍຕາຕົນເອງ. ພວກເຂົາ

ທັງຮ້ອງທັງສັ່ນມືສັ່ນຕີນທີ່ບອບບາງ ແລະ ກໍ້າງຕີລັງກາ ໄປມາຢູ່ໃນຫ້ອງ ຢ່າງມີພະລັງທີ່ໜ້າຕື່ນເຕັ້ນ.

ຢູ່ເຮືອນຄົວ, ເຫັດເຕັມໝໍ້ຂະໜາດໃຫຍ່ ແລະ ມີສຽງດັງເປັນຕາ ແຊບເມື່ອໝໍ້ພືດຢູ່ເທິງໄຟລຸກວືບວາບ.

" ຂ້ອຍຄຶດບໍ່ອອກເລີຍວ່າ ລາວເຮັດຫຍັງເປັນພິເສດ ເພື່ອເອົາ ພິດເບື່ອອອກຈາກເຫັດເຫຼົ່ານີ້. . .ມັນເປັນຈັ່ງໃດກັນຫວະ ຢູ່ໃນເຮືອນນີ້?" ດານກິຈິ ຄິດ ຂະນະທີ່ເຝົ້າເບິ່ງຢ່າງມິດໆ ຢູ່ນອກປ່ອງຢ້ຽມ.

ບໍ່ດົນ ຖ້ວຍນ້ອຍໆ ມີເຫັດເຕັມກໍ່ຖືກນຳໄປໃຫ້ເດັກນ້ອຍເຈັດຄົນ ນັ້ນ. ອາຍຮ້ອນລອຍຂຶ້ນຈາກຖ້ວຍ ແລະ ແຜ່ກະຈາຍໄປທົ່ວຫ້ອງ ຂະນະ ທີ່ໝົດຄອບຄົວ ພວມພາກັນກິນເຂົ້າແລງຢ່າງແຊບນົວ. ພວກເດັກນ້ອຍ ເລີ່ມຕົ້ນກິນ, ຕາຜູ້ໃດກໍມີປະກາຍສົດໃສ ທີ່ໄດ້ກິນອາຫານແຊບ. ພໍ່ນາ ແລະ ເມຍເບິ່ງລູກໆ ດ້ວຍຄວາມຮັກໄຄ່ ແລະ ຢິບອາຫານດ້ວຍໄມ້ທູ່ເຂົ້າ ປາກຊ້າໆ.

" ພໍ່ ອັນນີ້ແຊບຫຼາຍ ! "

" ຊັ້ນຫວະ ? ມີຫຼາຍເດີ, ກິນຫຼາຍໆ ເທົ່າທີ່ລູກໆ ຈະກິນໄດ້ "

" ຄາບເຂົ້າກິນແຊບທີ່ສຸດເທົ່າທີ່ລູກເຄີຍກິນມາ ! "

" ແມ່ ຕັກໃຫ້ລູກອີກແດ່ "

" ພໍ່ພວກເຈົ້າເມື່ອຍຫຼາຍເດີທີ່ເອົາເຫັດນີ້ມາຮອດບ້ານໄດ້ ຈັ່ງຊັ້ນ ຕ້ອງກິນແກງໃຫ້ໝົດ. " ແມ່ວ່າ.

ໝົດຄອບຄົວພາກັນກິນແກງເຫັດໝົດໄປຫຼາຍຖ້ວຍ ທັງຫົວຍິ້ມທັງເວົ້າລົມກັນໄປ. ແລ້ວລູກທັງເຈັດກໍ່ນອນຢຽດລົງເທິງສາດທີ່ພື້ນເຮືອນພ້ອມດ້ວຍຮອຍຍິ້ມດີອົກດີໃຈປະກົດທີ່ໃບໜ້າ.

ດານກີຈີຍືນສະຫງົບງຽບ ແປກປະຫຼາດໃຈ ແລະ ບໍ່ແນ່ໃຈວ່າຈະເກີດຫຍັງຂຶ້ນຕໍ່ໄປ ແລະ ສິ້ງຊອມເບິ່ງໃບໜ້າຂອງພໍ່ນາຍ່າງຕັ້ງອົກຕັ້ງໃຈ. ແມ່ນແຕ່ເວລາທີ່ພໍ່ນາແນມເບິ່ງພວກລູກໆ ດ້ວຍໃບໜ້າຍິ້ມແຍ້ມ ນ້ຳຕາເມັດໃຫຍ່ກໍ່ປະກົດທີ່ຮີມຕາແລ້ວໄຫຼລົງຕາມແກ້ມ ແລະ ຕົກລົງໃສ່ຖ້ວຍແກງເບົ້າຂອງລາວ.

ແລ້ວໃນທັນໃດ

" ຮະຮາ ຮະຮາຮາ ! ຮະຮາຮາ ! "

" ຮະຮາ ! ຮະຮາຮາຮາ . . . ! "

ໝົດຫ້ອງເຕັມໄປດ້ວຍສຽງຫົວຢ່າງໄວວາ, ແຕ່ປະກົດວ່າຄືບໍ່ແມ່ນສຽງມະນຸດ. ພໍ່ເອົາມືລູບທ້ອງຂະນະທີ່ຫົວອອກມາດັງໆ, ບຶດໜຶ່ງຕໍ່ມາສຽງຫົວຂອງຜູ້ເປັນເມຍ ແລະ ເດັກນ້ອຍທັງເຈັດກໍ່ລະເບີດຂຶ້ນດັງຄັບຫີບຢ່າງບໍ່ເປັນຕາເຊື່ອ.




" ຣະຣາ ໆ. . . ຣະຣາ ໆ. . .ຣາຣາຣາ ! "

" ຣະຣາຣາ, ເອີ ຣະຣາ, ເອີຣະຣາ ! "

ທ້າວໝິດພາກັນໂຈມທ້ອງ ແລະ ອ້າປາກກວ້າງໆ ທ້າວກົ້ງເກືອກໄປຕາມພື້ນ, ຫົວກັນຢ່າງຄວບຄຸມບໍ່ຢູ່, ເຊໄປຕຳອັນນີ້ອັນນັ້ນ, ກະເດັນອອກມາຈາກຝາ ແລ້ວກໍ່ພາກັນຫົວແຮງຂຶ້ນ ແຮງຂຶ້ນຈົນໜ້າຕາບິດບ້ຽວ ແລະເຄົ້າຕົວເປັນຮູບແປກປະຫຼາດ.

ພາບທີ່ຕິດຕາມມານັ້ນ ເປັນໜ້າສະທຍິດສະທຍອງຫຼາຍຈົນວ່າ ພາຍຫຼັງມາພຽງແຕ່ນຶກເຫັນພາບດັ່ງກ່າວນັ້ນ ກໍ່ເຮັດໃຫ້ດານກິຈິ ຂົນໜາວລຸກຊັນໄປທົ່ວຮ່າງກາຍ ແລະ ຮູ້ສຶກເຢັນວາບໃນສ່ວນເລິກຂອງຫົວໃຈ.

ຂະນະທີ່ສຽງຫົວປ່ຽນເປັນສຽງໂອຍຄາງທີ່ປະຫຼາດ ແລະ ບາດໃຈນັ້ນ ໃບໜ້າທີ່ມີແວວສະຫຼາດ ແລະ ໜ້າຮັກໜ້າແພງຂອງເດັກເຫຼົ່ານັ້ນ ກໍ່ເລີ່ມຕົ້ນປ່ຽນເປັນສີແດງຊ້ຳ. ຕໍ່ມາ ມີເລືອດໄຫຼອອກຈາກປາກພວກເຂົາເປັນຟອດ ແລ້ວພວກເຂົາກໍ່ລົ້ມຕຶງລົງພື້ນ, ແຂນຂາສັ່ນແງັກໆ. ພວກເຂົາຕາຍເດຍລະດາດ, ແລະ ສຽງຫົວກໍດັບໄປພ້ອມ.

ດານກິຈິຢືນຈ້ອງເບິ່ງຢູ່ຫັ້ນ, ມືນຕາອອກກວ້າງໆ ຈົນເທົ່າກັບຈານນ້ອຍ, ໃບໜ້າປ່ຽນເປັນສີຂຽວຊ້ຳ ແລະ ຕົນຕົວມັນເລີ່ມສັ່ນຍຶກໆ. ເມື່ອມັນຕຶງຕົວເໜັງໄດ້ອີກ ມັນກໍ່ຖອຍຫ່າງອອກຈາກບ່ອງຢ້ຽມແລ້ວກໍ່ແລ່ນໄປໄວໆ ເທົ່າທີ່ຈະໄວໄດ້ ເບັດໜ້າໃສ່ພູລົງ.

" ໂທ, ໃຜຊິຄາດຄິດເຖິງປານນັ້ນ. . . ຂ້ອຍບໍ່ເຊື່ອເລີຍ! ພວກເຂົາຕາຍທັງໝົດ, ແມ່ນແຕ່ພວກເດັກນ້ອຍໜ້າຮັກເຫຼົ່ານັ້ນ. . . ເອີ, ແຕ່ວ່າແທນທີ່ຈະຄ່ອຍໆຕາຍຢ່າງທໍລະມານ ໃນເວລາເກີດໄພອຶດຫົວຄັ້ງຮ້າຍກາດນີ້, ບາງທີຕາຍໄວໆ ແລະ ຕາຍພ້ອມໆກັນພາບດຽວ ຄືດັ່ງຄອບຄົວຂອງພໍ່ມາຜູ້ນີ້ ແນວໃດກໍ່ຊິດີກວ່າໃດບໍ່. ຢ່າງໜ້ອຍໃນຕອນທ້າຍຂອງຊີວິດ ພວກເຂົາຍັງມີອາຫານກິນເຕັມທ້ອງ. . . ແມ່ນ, ແມ່ນລະ, ນັ້ນແມ່ນວິທີ. . .ບໍ່, ນັ້ນເປັນໄປບໍ່ໄດ້ ການເຮັດໃຫ້ເດັກນ້ອຍຜູ້ບໍລິສຸດມ່ວນຊື່ນແລ້ວກໍ່ຂ້າພວກເຂົາ – ອັນນັ້ນມັນບາບ, ເປັນສິ່ງທີ່ຜີປອບມັກເຮັດ . . .

ເອີ, ແຕ່ວ່າຢ່າງນັ້ນມັນກໍ່ດີກວ່າ ການທີ່ໃຫ້ພໍ່ແມ່ເບິ່ງລູກຕາຍໄປເທື່ອລະຄົນ ຫຼືຖ້າວ່າພໍ່ແມ່ຕ້ອງຕາຍ ແລະ ປະເດັກນ້ອຍຜູ້ໜ້າສົງສານໃຫ້ຫິວຕາຍຕາມລຳພັງທີ່ຫຼັງ ? ເມື່ອຄິດໄປຫາໂສກນາດຕະກຳຈັ່ງຊັ້ນ ຂ້ອຍນີ້ທົນບໍ່ໄດ້. ຂ້ອຍບໍ່ເຄີຍຄິດມາກ່ອນຈັກເທື່ອກ່ຽວກັບເລື່ອງເປັນຕາຢ້ານຂົນຫົວລຸກ ເຊັ່ນການດັບຊີວິດຕົນເອງ ຫຼືຮ້າຍໄປກວ່ານັ້ນ ແມ່ນຂ້າລູກຕົນເອງ... ໂທ ຜູ້ຄົນນີ້ເຮັດແນວສະຫຍົດສະຫຍອງນໍ ! ”

ດານກິຈິ ແລ່ນລົ້ວໄປຍັງພູ ພ້ອມດ້ວຍອາການໜ້າຫຼາຕາຕາຍ. ທັນໃດ ມັນຢຸດກັບທີ່ ແລະ ເບິ່ງໄປທາງຊ້າຍ ແລະ ຂວາ ແລະ ແລ້ວກໍ່ລ້ຽວເຂົ້າທາງນ້ອຍໆ ຢ່າງໄວວາ. ມັນລົງໄປແຄມຫ້ວຍ ແລະ ເກັບເອົາເຫັດເບື່ອສີແດງສົດໃສ ແລ້ວເຊື່ອງໄວ້ຂຸມທີ່ຕີນຕົ້ນໄມ້ໃກ້ໆ.

## ໑໕

“ ຂ້ອຍເກັບເຫັດເບື່ອໄດ້ກອງໜຶ່ງ ແລ້ວເອົາເຊື່ອງໄວ້ຂຸມທີ່ຕີນຕົ້ນໄມ້ຕົ້ນນັ້ນ ແມ່ນຊັ້ນຕວ່າ. . . ” ດານກິຈິຫົວໜ້າລີງ ຖອນຫາຍໃຈຂະນະທີ່ແນມເບິ່ງທີມະຕິກລົງສູ່ພູຜາ ແລະ ທົ່ງພຽງເບື້ອງລຸ່ມພຸ້ນ.

ດານກິຈິລະມັດລະວັງຕົວເພື່ອບໍ່ໃຫ້ລີງທັງຫຼາຍຮູ້ສຶກ ແລະ ສັງເກດວ່າຜູ້ເປັນຫົວໜ້າມີຄວາມສັບສົນວຸ່ນວາຍຢູ່ພາຍໃນເລິກໆ ຂະນະທີ່ມັນນັ່ງຢ່າງຜູ້ມີກຽດຕາມປົກກະຕິຢູ່ປາກປະຕູເຂົ້າໄປຫາຖ້ຳ.

" ຫິວໜ້າ ! " ໃຜຜູ້ໜຶ່ງຮ້ອງມາໃສ່. ດານກິຈິງວາກໄປຫາ ແລະ ເຫັນ ກິງຕະ ຜູ້ເກົ່າທີ່ສຸດໃນບັນດາລີງໜຸ່ມຊຶ່ງນັ່ງຖົດຫຼັງມັນໄປທາງໃນຖ້ຳ.

" ແມ່ນຫຍັງ ກິງຕະ ? ໂຕຄືປະກົດວ່າມີສິ່ງຂັດຂ້ອງໝອງໃຈ. ມາພີ້ ມານັ່ງຢູ່ໜີ້ມີຫຍັງຢູ່ໃນໃຈກໍ່ເວົ້າສູ່ຟັງດູ". ໂດຍສັງເກດວ່າຕາຂອງລີງໜຸ່ມເປັນສີແດງໆ ແລະ ສີໜ້າບູດບຶ້ງດານກິຈິຮູ້ສຶກເຢັນວາບໄປທົ່ວຮ່າງກາຍ ແຕ່ກໍ່ພະຍາຍາມເວົ້າດ້ວຍນ້ຳສຽງທີ່ເຊື່ອໝັ້ນ ແລະ ເປັນທຳມະດາ.

ກິງຕະ ເວົ້າໂດຍທີ່ຍັງຢືນຢູ່, ສຽງຂອງມັນອ່າວຮຸນແຮງ "ຫົວໜ້າ, ພວກເຮົາທົນອີກຕໍ່ໄປບໍ່ໄດ້ແລ້ວ... ພວກເຮົາຢາກໃຫ້ຫົວໜ້າ ຮຽກໂຮມ ກັນມາຊຸມນຸມ ເພື່ອຈະໄດ້ພ້ອມກັນປຶກສາຫາລືບັນຫາວ່າຈະເຮັດຢ່າງໃດ ".

" ເອົາລະ ມັນເຖິງເວລາແລ້ວ " ດານກິຈິຄຶດໃນໃຈ ໃນຂະນະທີ່ຕອບໄປວ່າ " ດີລະ, ບໍ່ພຽງແຕ່ໂຕເທົ່ານັ້ນ ທີ່ແວວຕາເຕັມໄປດ້ວຍຄວາມອຸກອັ່ງ, ເຮົາເອງກໍ່ເຫັນເປັນຄືກັນໝົດ ໃນໝູ່ລີງໜຸ່ມນ້ອຍຢູ່ຖ້ຳພວກເຮົານີ້. ມັນແມ່ນເວລາທີ່ຈະຕອບຄຳຖາມ ທີ່ສະແດງອອກຢູ່ໃນຕາພວກເຈົ້າແລ້ວ. ຈັດປະຊຸມພວກຜູ້ອາວຸໂສ ແລະ ພວກຜູ້ນຳເຫາະ. ສະມາຊິກໜຸ່ມນ້ອຍຂອງຈຸ້ມເຈື້ອ ຈະບໍ່ໄດ້ຮັບອະນຸຍາດໃຫ້ເວົ້າ, ແຕ່ພວກເຂົາເຂົ້າຮ່ວມ ແລະ ຟັງໄດ້ "

ຂະນະທີ່ ດານກິຈິເວົ້າຄຳສັບເຫຼົ່ານີ້ດ້ວຍສຽງທຸ້ມໆ ໜັກແໜ້ນອອກໄປ ບັນຍາກາດອັນເຄັ່ງຕຶງແຜ່ລາມໄປທົ່ວຖ້ຳຢ່າງມິດໆ.

ພວກແມ່ລີງກອດລູກນ້ອຍຈ່ອຍໆ ຕິດແໜ້ນກັບເອິກ ແລະ ຊຸກພວກລີງໜຸ່ມອອກໄປທາງໜ້າ. ແລ້ວ ພວກລີງ ເຖົ້າກໍ່ຢຽດແຂ່ງຢຽດຂາ ແລະ ຄ່ອຍໆ ລຸກອອກຈາກບ່ອນ ທີ່ພວກມັນນອນຢູ່ໜື້ງແຈຖ້ຳ, ສ່ວນພວກຜູ້ນຳ ຈຸ້ມເຈື້ອລີງກໍ່ພາກັນລຸກອອກຫ່າງຈາກ ພວກລີງໜຸ່ມທີ່ພວມຫາເຫົາຢູ່ນຳຂົນໃຫ້ກັນ ແລະ ກັນ. ຕີນທີ່ຍ້າຍຍ່າງອື່ລາກອື່ເລືອພາເອົາຮ່າງກາຍທີ່ອ່ອນເພຍໄປຢ່າງຊ້າໆ ມຸ່ງໜ້າໄປທີ່ປາກທາງເຂົ້າຖ້ຳ, ໃບໜ້າຂອງລີງແຕ່ລະໂຕ ສະທ້ອນໃຫ້ເຫັນວ່າ ການສົນທະນາຈະເປັນໄປຢ່າງເຄັ່ງຂຶມເອົາຈິງເອົາຈັງ. ມີແຕ່ຕາເທົ່ານັ້ນເປັນປະກາຍແວວວາວ ຢູ່ກາງໃບໜ້າອັນໝົ່ນໝອງເຫຼົ່ານັ້ນ.

" ນີ້ນ່າ ເຮົາຄິດວ່າພວກເຈົ້າທັງໝົດ ຮູ້ແລ້ວວ່າເປັນຫຍັງພວກເຮົາຈຶ່ງມາໂຮມກັນຢູ່ໜີ້. ພາຍຫຼັງລະດູຮ້ອນ ແລະລະດູໃບໄມ້ຫຼົ່ນທີ່ຮ້ອນເອົ້າ ແລະ ແຫ້ງແລ້ງ ພວກເຮົາກໍ່ເລີຍບໍ່ມີຫຍັງຊິກິນໃນລະດູໜາວນີ້. ຄືດັ່ງທີ່ພວກເຈົ້າຮູ້ຕົ້ນເດືອ ແລະ ຕົ້ນກໍ່ນັ້ນໃບຫຼົ່ນຖິ້ມໝົດ ແລະ ບໍ່ອອກໝາກອອກໜ່ວຍເລີຍ. ຢູ່ທົ່ງພຽງລຸ່ມພຸ້ນ ທົ່ງນາ ແລະ ສວນແຫ້ງກະແດ້ງໝົດ, ສ່ວນຜູ້ຄົນທີ່ອາໄສຢູ່ແຖວນັ້ນ ກໍ່ພາກັນຕາຍແລ້ວແຕ່ດົນ. ອັນນີ້ມັນເປັນເລື່ອງທີ່ພວກເຮົາບໍ່ເຄີຍປະສົບມາກ່ອນຈັກເທື່ອ. ແນວໃດກໍ່ຕາມ ພວກເຮົາໄດ້ພະຍາຍາມຊ່ອຍກັນຊອກເກັບເອົາອາຫານຈົນພຽງພໍລ້ຽງຊີບສືບຕໍ່ມາຮອດສູ່ມື້ນີ້, ແຕ່ວ່າ ເບິ່ງຊິງແລ້ວຫິມະນີ້ຈະຕົກຕໍ່ໄປຕະຫຼອດການພຸ້ນໃດ ! ເອົາລະ, ຈັ່ງຊັ້ນໃນໝູ່ພວກເຮົານີ້ມີໃຜແດ່ ມີຫົວຄິດປັນຍາທີ່ສາມາດບອກວ່າ ຕ້ອງເຮັດສິ່ງໃດສິ່ງໜຶ່ງລົງໄປ ".





ກ່ອນທີ່ຄຳເວົ້າຄຳສຸດທ້າຍຂອງດານກິຈິຈະງຽບລົງ ບ່າວກິງຕະກໍ່ຢືນຂຶ້ນສູງໆ, ມັນແອນບ່າໄຫຼ່ໄປທາງຫຼັງເພື່ອຫາຍໃຈເລິກໆ ແລະ ເໜັງຄໍອຍຶກຍັກຂຶ້ນໆ ລົງໆ ວັບໆ ແລ້ວກໍ່ຕັ້ງຕົ້ນເວົ້າ:

" ພວກເຮົາສະມາຊິກໜຸ່ມນ້ອຍ ຂອງຈຸ້ມເຈືອລົງໄດ້ຕົກລົງໃຈແລ້ວວ່າ ການປົກປັກຮັກສາສາຍເລືອດ ຂອງລົງພູເຂົາເປັນເລື່ອງສຳຄັນທີ່ສຸດ ເພື່ອເຫັນແກ່ຮຸ່ນລົງໃນອະນາຄົດ ພວກທີ່ແຂງແຮງຕ້ອງເອົາຊີວິດລອດສ່ວນພວກອ່ອນແອຕ້ອງຕາຍ. ນັ້ນເປັນສິ່ງຈະແຈ້ງ, ບໍ່ແມ່ນຫວະ ? ຖ້າພວກເຮົາເຊົາສິ້ນເປືອງ ໂດຍບໍ່ເອົາອາຫານໃຫ້ຜູ້ເຖົ້າ ແລະ ເດັກນ້ອຍກິນ , ຜູ້ທີ່ແຂງແຮງກໍ່ອາດມີຊີວິດຍືນຍາວຕໍ່ໄປ ".

" ຈີ໊ກກກ !... " ສຽງຮ້ອງບໍ່ພໍໃຈດັງມາຈາກລົງເຖົ້າໂຕໜຶ່ງ ທີ່ໂບກມືໂບກຕີນໄວໆ, ເບິ່ງແລ້ວຕີນມືຈ່ອຍໆ ນັ້ນຄ້າຍຄືກິ່ງໄມ້ແຫ້ງໆ.

" ມິດ ! ບັກນ້ອຍ, ພວກສູບໍ່ມີສິດເວົ້າຢູ່ໜີ້ ! "

" ແມ່ນຫຍັງ ? ! " ລົງໜຸ່ມດົດໂດ່ງ ແລະ ທຳໜ້າຕາບຶ້ງຕຶງເພື່ອຂົ່ມຂູ່, ມັນຍ່າງເຂົ້າໄປຫາລົງອາວຸໂສ.

" ເຊົາ ເຊົາ ! ພໍແລ້ວ " ດານກິຈິສັ່ງ " ສິ່ງທີ່ພວກເຮົາຕ້ອງການດຽວນີ້ແມ່ນທິວຄິດ, ບໍ່ແມ່ນຄວາມຮຸນແຮງ ພວກເຮົາຊິອະນຸຍາດໃຫ້ສະມາຊິກໜຸ່ມນ້ອຍປາກເວົ້າໄດ້. ແມ່ນຕວ່າກິງຕະ, ອະທິບາຍຄວາມຄິດຂອງໂຕເບິ່ງຕໍ່ໜ້າພວກເຮົາທັງໝົດນີ້ ".

" ມັນຄືຈັ່ງຊີ້, ເອີ... ແທນທີ່ຊິໃຫ້ພວກເຮົາທັງໝົດທົ່ວຕາຍ, ອື... ເຫັນຕວ່າ... ຈັ່ງຊັ້ນພວກທີ່ໜຸ່ມ ແລະ ແຂງແຮງທີ່ຖືກຄັດເລືອກ

ໄວ້ແລ້ວນັ້ນ ຊຶ່ງເປັນຜູ້ມີປະໂຫຍດຫຼາຍທີ່ສຸດຕໍ່ຈຸ້ມເຈືອລີງພວກເຮົາຕ້ອງມີຊີວິດຕໍ່ໄປ ແມ່ນແຕ່ວັນດຽວກໍ່ຕາມ, ພວກເຮົາຈະຕ້ອງປະຖິ້ມອັນພວກອ່ອນແອນັ້ນນ່າ. . . "

"ບັກຜີບ້າ, ກູວ່າມຶງຕື່ນເຕັ້ນແນວໃດແນວໜຶ່ງ ຈຶ່ງເວົ້າຈັ່ງຊັ້ນອອກມາ ! " ລີງອາວຸໂສຮ້ອງທັ່ງໃສ່ທ້າຍກໍາປັ້ນສັ່ນຢ່າງໂມໂຫ.

ດານກີຈີພະຍາຍາມລະງັບອາລົມຮ້ອນຂອງໝູ່ລີງ ແລະ ເວົ້າວ່າ " ຈັ່ງຊັ້ນໂຕກໍ່ເວົ້າແມ່ນບໍ່ວ່າ ຖ້າພວກເຮົາໄດ້ອາຫານການກິນ ພວກເຮົາຈະບໍ່ເອົາໃຫ້ພວກລີງອ່ອນແອກິນຈັກໜ່ອຍເລີຍ, ກົງກັນຂ້າມມີແຕ່ຊິເບິ່ງພວກເຂົາຕາຍໄປຕໍ່ໜ້າຕໍ່ຕາຊັ້ນຫວະ ? "

" ອື . . . ຊັ້ນລະ, . . "

" ນັ້ນມັນຂັດກັບກົດເກນຂອງພູລີງ ! ແທ້ໃດ, ມັນຜິດກົດໝາຍ ! " ລີງອາວຸໂສອີກໂຕໜຶ່ງສົ່ງສຽງດັງແທບໆ.

ອີກເທື່ອໜຶ່ງ ດານກີຈີ ຕ້ອງເວົ້າເພື່ອລະງັບສຽງຂົ່ມຂູ່ຂອງຜູ້ປະທ້ວງ " ບໍ່ແມ່ນເວລາທີ່ຈະມາເວົ້າເລື່ອງກົດໝາຍ, ກົດລະບຽບໃດເນີ, ເຖິງແມ່ນວ່າພວກເຮົາ ຕ້ອງກິນພວກອ່ອນແອ ມັນກໍ່ຈໍາເປັນເພື່ອວ່າ ພວກລີງທີ່ເຂັ້ມແຂງ ແລະ ຂັ້ນຫິວໜ້າຈະໄດ້ມີຊີວິດຕໍ່ໄປ, ຖ້າບໍ່ດັ່ງນັ້ນ ສາຍເລືອດຂອງພູລີງຈະສູ້ງສຸດລົງພ້ອມກັບຮຸ່ນພວກເຮົານີ້ໝົດ."

" ເວົ້າເຮັດຫຍັງຫວະ ເລື່ອງສາຍເລືອດນີ້ ? ເປັນຫຍັງຈຶ່ງຕ້ອງປົກປັກຮັກສາພວກເຂົາໄວ້ ເຖິງຂັ້ນວ່າເປັນຫຍັງກໍ່ເປັນກັນ ? ຣະ ! ອັນພວກ

ໜຸ່ມຈອງຫອງເວົ້າກໍ່ແມ່ນວ່າພວກມັນຕ້ອງມີຊີວິດຕໍ່ໄປ ພວກອື່ນຕາຍກໍ່ຊ່າງ ! ຮູ້ຍຍຍ ! ! "

ບັນຍາກາດອັນສັບສົນວຸ່ນວາຍເລີ່ມແຜ່ລາມໄປທົ່ວຖໍ້າ. ດວງຕາທີ່ໄຮ້ແວວຍ້ອນຄວາມຫິວ ແລະ ຄວາມສິ້ນຫວັງຈ້ອງເບິ່ງຕາກັນເອງ ຂະນະທີ່ລີງເຫຼົ່ານີ້ເຝົ້າເບິ່ງການຕໍ່ສູ້ທີ່ຈະເລີ່ມຂຶ້ນ ອັນເປັນການຕໍ່ສູ້ທີ່ຈະຕັດສິນບັນຫາຊ້ຳງຜູ້ໄດ້ປຽບກໍ່ແມ່ນຜູ້ເຂັ້ມແຂງ.

ດານກິຈິນັ່ງໂດຍຫຼັບຕາໄວ້ເຄິ່ງໜຶ່ງ ເບິ່ງອອກໄປນອກຖໍ້າ ແລະ ເວົ້າກັບຕົນເອງສຽງໃຫຍ່ໆ ວ່າ " ຖ້າການຕໍ່ສູ້ກັນລະເບີດຂຶ້ນຢູ່ບ່ອນນີ້ ຜູ້ອອນແອຈະຖືກຂ້າຕາຍ ແລະ ຊີ້ນຂອງເຂົາຈະແຫ້ງ ກະແດ້ງ. ມັນກໍ່ຄືຢູ່ໃນນິທານເກົ່າແກ່ເລື່ອງ " ຊີ້ນລີງແຫ້ງ. " ຄັ້ງໜຶ່ງພວກລີງຫິວພາກັນຊີມຊີ້ນນັ້ນ ພວກມັນເລີຍບໍ່ລືມລົດຊາດນັ້ນຈັກເທື່ອ. ເຊັ່ນດຽວກັນ ຄອບຄົວລີງຊຶ່ງຖືກເຂົາກິນນັ້ນຈະອາຄາດບາດໝາງ ຄອບຄົວອື່ນຕະຫຼອດໄປ ແລະການຕໍ່ສູ້ກັນກໍ່ຈະບໍ່ມີບ່ອນສິ້ນສຸດ ແລ້ວການຂ້າຟັນກັນຈະດຳເນີນຕໍ່ໄປຈົນເຫົ້າມີລີງເຫຼືອພຽງໂຕດຽວ ແລະ ນັ້ນຈະເປັນຈຸດອະວະສານຂອງຈຸ້ມເຈືອລີງພວກເຮົາ. ໂອ ຂ້ອຍຈະບໍ່ປະໃຫ້ພູລີງ ແລະ ຈຸ້ມເຈືອຂອງຂ້ອຍພົບຈຸດຈົບແບບນັ້ນ. ຂ້ອຍຂໍຕາຍດີກວ່າ ທີ່ຈະເຫັນມັນເກີດຂຶ້ນຈັ່ງຊັ້ນ ".

ຫິມະ ຕົກຕໍ່ໄປ ຫຼີນລີງໄວຂຶ້ນໄວຂຶ້ນ, ປົກຄຸມທົ່ວໜ່ວຍພູ ທີ່ດານກິຈິໄດ້ປົກຄອງມາຫຼາຍຟ້າຫຼາຍປີແລ້ວ.

" ເຫັດເບື່ອກິນແລ້ວຫິວ. ແມ່ນລະ, ຂ້ອຍຈະໃຊ້ອັນນັ້ນລະ ຂ້ອຍຈະໄປເອົາເຫັດດັ່ງກ່າວ ທີ່ເຊື່ອງໄວ້ຂຸມກ້ອງຕົ້ນໄມ້ພຸ້ນມາ ແລ້ວບໍ່ວ່າຜູ້ໃດກໍ່ຈະກິນເຕັມອີ່ມແລ້ວກໍ່ຈະຫິວຈົນຕາຍ. ແບບນີ້ດີກວ່າໃຫ້ເຂົາຂ້າກັນເອງຕາຍ ".

ຂະນະທີ່ດານກິຈິຄິດເລື່ອງນີ້ຢູ່ໃນໃຈຜູ້ດຽວ, ພານຂອງເດັກນ້ອຍເຈັດຄົນ ທີ່ຕາຍໂດຍບໍ່ຮູ້ສຶກຕົວໂດຍໃບໜ້າເປັນສີແດງຊ້ຳ ແລະ ແກ້ມກໍ່ໂຕ້ນໆ ກໍ່ປະກົດຕໍ່ສາຍຕາອີກ.

" ໂທ, ຈັ່ງຊັ້ນບໍ່ເປັນເດັດຂາດບໍ່ເປັນຈັ່ງຊັ້ນ ! ຂ້າເຂົາທັງໝົດ, ແມ່ນແຕ່ ລີງນ້ອຍຜູ້ບໍລິສຸດ,ມັນໂຫດຫ້ຽມໂພດ, ເປັນສິ່ງທີ່ຂ້ອຍເຮັດບໍ່ລົງ, ພວກເຮົາບໍ່ຄືມະນຸດໃດ ".

ດານກິຈິຜູ້ໜ້າສົງສານ ຮູ້ສຶກເສົ້າໝອງໃນຫົວໃຈ ຈົນປ່ອຍສຽງໂອຍຄາງດ້ວຍຄວາມເຈັບປວດດັງລອດອອກຈາກຮູດໍ.

" ເປັນຫຍັງປີນີ້ ລະດູບານໃໝ່ຈຶ່ງບໍ່ມາ?! "

ພາຍໃນຖ້ຳ ທຸກສິ່ງທຸກຢ່າງຢຸດໄຫວຕິງ ແລະ ງຽບສະຫງົບ.

" ແມ່ເຮີຍ ລະດູບານໃໝ່ມາແຕ່ໃສ? " ສຽງເສາະໃສຂອງລີງນ້ອຍທີ່ກອດອ້ອນຕ້ອນຢູ່ເອິກແມ່ ດັງມາຈາກຂ້າງຫຼັງຖ້ຳ.

ບັນຍາກາດອັນເຄັ່ງຕຶງສຸດຂີດພາຍໃນຖ້ຳ ຜ່ອນເບົາລົງທັນໃດ, ແລ້ວລີງທັງໝົດກໍ່ເລີ່ມຕົ້ນປາກເວົ້າລົມກັນສຽງຂຶ້ນສຽງລົງ.

" ລະດູບານໃໝ່ມາຈາກແຫ່ງໃດ ແຫ່ງໜຶ່ງໄກໆ ພຸ້ນ, ໄກຈາກບ່ອນນີ້ຫຼາຍ " ລີງແມ່ຕອບລູກນ້ອຍ.

" ແຫ່ງໄກໆ ນັ້ນຢູ່ໃສ ? "

" ຢູ່ຟາກເບື້ອງນັ້ນ ຂອງພູຂາວໆ ທີ່ປົກຄຸມດ້ວຍຫິມະພຸ້ນ. ແນ່ນອນ ລະດູບານໃໝ່ມາຮອດຟາກພູເບື້ອງນັ້ນແລ້ວ, ຢູ່ພຸ້ນ ຫິມະເປື່ອຍແລ້ວ ແລະ ບາງທີດອກໄມ້ອາດບານແລ້ວກໍ່ເປັນໄດ້ "

ດານກິຈິ ຮູ້ສຶກວ່າໃນອົກຂອງຕົນເຕັມໄປດ້ວຍຄວາມອົບອຸ່ນຍິນດີ " ເລື່ອງມັນຈະຊົ່ວຮ້າຍແນວໃດບໍ່ສຳຄັນ ແຕ່ລີງນ້ອຍໜ້າຮັກເຫຼົ່ານີ້ ມີຄວາມປາຖະໜາທີ່ຈະມີຊີວິດຕໍ່ໄປຢູ່ສະເໝີ, ກໍ່ຄືກັບດອກໄມ້ເດໄປຫາຕາເວັນທັ້ນລະ, ຂ້ອຍບໍ່ອາດທຳລາຍ ຊີວິດຂອງສັດໂລກພວກນີ້ ທີ່ພະຍາຍາມບີນຕົວເພື່ອມີຊີວິດຕໍ່ໄປ. ຕ້ອງປ່ອຍໃຫ້ເຂົາມີຊີວິດ, ພວກເຂົາຕ້ອງມີຊີວິດ... "

" ລະດູບານໃໝ່ ຈະມາຮອດເວລາໃດເວລາໜຶ່ງໃນປີນີ້, ແມ່ນທວະ ? ແຕ່ວ່າ ແມ່ເອີຍ, ລູກຖ້າບໍ່ໄດ້. ຖ້າລະດູບານໃໝ່ບໍ່ມາຫາພວກເຮົາເດ້, ພວກເຮົາທັງໝົດກໍ່ໄປຊອກຫາມັນລະບໍ ! "

" ເດັກນ້ອຍປາກກ້າງບັກນີ້ເວົ້າມະລຳມະລອຍ !" ລີງເຖົ້າໂຕໜຶ່ງເວົ້າຂຶ້ນດ້ວຍຄວາມບໍ່ພໍໃຈ " ຂ້າບໍ່ເຄີຍໄດ້ຍິນຈັກເທື່ອ ອັນເລື່ອງອອກໄປຫາລະດູບານໃໝ່. ນັບແຕ່ບູຮານນານມາແລ້ວ ພວກເຮົາຄອງຖ້າຢູ່ພູລີງນີ້ໃຫ້ລະດູບານໃໝ່ມາຮອດ ແລະ ມັນກໍ່ມາຮອດສະເໝີໆ. ເຂົ້າໃຈບໍ່ບັກຫຼ້າ ? ພວກເຮົາມີແຕ່ຖ້າທໍ່ນັ້ນ ".

" ເປັນຫຍັງ ? ຖ້າລະດູບານໃໝ່ ບໍ່ມາຫາພວກເຮົາ ພວກເຮົາກໍ່ຕ້ອງໄປຊອກຫາມັນ. ຂ້ອຍຊິໄປກ່ອນໃດ. ຂ້ອຍຈະລົງຈາກພູນີ້ ແລະໄປທັກທາຍກັບລະດູບານໃໝ່ "

" ລົງຈາກພູໜ່ວຍນີ້ໄປຫວະ ?! ດານກິຈິເຕັ້ນໂດ່ງດ້ວຍຄວາມປະຫຼາດໃຈ " ຖ້າພວກເຮົາໜີຈາກພູລົງໄປ, ພວກເຮົາຊິບໍ່ສູນເສຍທຸກສິ່ງທຸກຢ່າງທີ່ມີຢູ່ນີ້ບໍ່ ? ຈະປະລະພູງົດງາມແຫ່ງນີ້ຖິ້ມ ບ່ອນທີ່ຂ້າປີກຄອງມາຕັ້ງດົນນານຊັ້ນຫວະ ? ! ບໍ່ມີທາງ ! "

24 / VII
ຫ້າມຈຳໜ່າຍ


R.T

ແລ້ວຕໍ່ໜ້າຕໍ່ຕາທີ່ໃນໂຫຣ້ອນແຮງຂອງດານກິຈິ, ລີງນ້ອຍໂຕທີ່ເວົ້າຈ້ອຍໆ ນັ້ນກໍ່ຫຼຸດຈາກມືແມ່ແລ່ນລີ້ວໄປທີ່ປາກຖ້ຳ. ຕໍ່ໄປພວກລີງນ້ອຍໂຕອື່ນໆ ກໍ່ແຫ່ກັ້ນມັນໄປຕິດໆ ຕໍ່ໆ ກັນ. ພວກມັນແລ່ນອອກໄປຂ້າງນອກ ແລະ ເບັດໜ້າສູ່ພູໜ່ວຍໄກໆ ທີ່ແມ່ລີງໄດ້ຊີ້ບອກ, ແຄ່ງຂານ້ອຍໆ ຍ່ຳລີງເທິງຫິມະທີ່ປົກຄຸມຕາມເບີ້ນພູ,ຢູ່ຂ້າງຫຼັງນັ້ນ ພວກແມ່ລີງຕິດຕາມພວກລີງນ້ອຍໄປຕິດໆ.

ດານກິຈິແນມເບິ່ງດ້ວຍສີໜ້າຈິງຈັງ, ແລ້ວທັນໃດກໍ່ງວາກໄປອ້ອມໂຕ ແລະ ຮ້ອງໃສ່ລີງທັງໝົດທີ່ຢູ່ໃນຖ້ຳ.

" ຕິກລີງ, ທັງໝົດລີງຈາກພູ! ພວກເຮົາຈະໄປຫາລະດູບານໃໝ່ກັນ! ກ່ອນອື່ນໝົດພວກເຮົາຕ້ອງຂ້າມພູທີ່ຢູ່ຕໍ່ໜ້ານັ້ນ "

ບໍ່ດົນ ລີງທັງໝົດກໍ່ເຕົ້າໂຮມກັນຢູ່ປາກຖ້ຳ ພວກລີງໜຸ່ມຍືນເປັນແຖວຢູ່ທາງຫຼັງພວກແມ່ລີງ, ຕໍ່ມາກໍ່ແມ່ນຜູ້ນຳຈຸ້ມເຈື້ອລີງ ແລະ ແມ່ນກະທັ້ງພວກລີງເຖົ້າແກ່ອາວຸໂສ ກໍ່ມາສົມທົບກັບຂະບວນນີ້.

ທັນທີ ທີ່ໄດ້ກວດເບິ່ງຈົນແນ່ໃຈວ່າ ລີງໂຕສຸດທ້າຍໄດ້ອອກຈາກຖ້ຳແລ້ວ ດານກິຈິກໍ່ແລ່ນຜ່ານກາຍພວກລີງທັງໝົດ ເພື່ອໄປປະຈຳທີ່ຢູ່ຫົວຂະບວນ ແລ້ວເລີ່ມແຜ້ວທາງລຸຍຫິມະເລິກໆ ໄປແບບຕະລຸມບອນ.

ດານກິຈິກັບຈຸ້ມເຈື້ອລີງຜ່ານທົ່ງພຽງ, ຂ້າມຫ້ວຍທີ່ນ້ຳແຂງກ້າມຍ່າງອີ່ລາກອີ່ເລືອຜ່າປ່າອັນໜາວເຢືອກເຢັນ.

ບໍ່ດົນ ຖັນແຖວຂອງລີງກໍ່ຈະຈັດກະຈາຍອອກ, ແຕ່ແລ້ວ ພວກລີງໜຸ່ມທີ່ແຂງແຮງກວ່ານັ້ນກໍ່ຮັບເອົາລີງນ້ອຍໆ ຈາກອ້ອມແຂນຂອງແມ່





ລົງແລ້ວເອົາເຈ່ຍໃສ່ຫຼັງ ທັງຈູງແຂນລົງເຖົ້າທີ່ຍ່າງໂຊເຊເພື່ອຊ່ອຍໃຫ້ໄປຖືກທາງ.

ເຖິງປານນັ້ນກໍ່ຕາມ, ບໍ່ອາດນຶກວາດພາບໄດ້ເລີຍວ່າ ຄວາມລຳບາກກາກກຳມີສ່ຳໃດທີ່ຈຸ້ມເຈື້ອລົງ ຕ້ອງໄດ້ປະເຊີນໜ້າ ໃນການເດີນທາງຄັ້ງນີ້ ແລະ ມີລົງຈຳນວນເທົ່າໃດທີ່ລົ້ມລົງຍ້ອນໝົດເຫື່ອໝົດແຮງຢູ່ກາງຫິມະ. ແນວໃດກໍ່ຕາມ ຂະບວນກໍ່ດຳເນີນຕໍ່ໄປໂດຍບໍ່ຢຸດ, ບໍ່ມີແມ່ນແຕ່ການຫຼຽວຫຼັງພຽງຄັ້ງດຽວ, ໄປໜ້າເລີຍໆ ສູ່ລະດູບານໃໝ່, ສູ່ການເລີ່ມຕົ້ນໃໝ່. . .

໑໕

ຈະໃຊ້ເວລາດົນປານໃດນໍ ? ສຳລັບພວກໜຶ່ງມັນປະກົດຄືວ່າຕະຫຼອດການ, ສຳລັບອີກພວກໜຶ່ງ ເວລາບໍ່ມີຄວາມໝາຍໃດໆ.

ວັນໜຶ່ງລົງນ້ອຍຮ້ອງຂຶ້ນດັງໆ ວ່າ " ເຮີ້ຍ ! ຂ້ອຍເຫັນບ່ອນແປນໆ ຢູ່ເທິງພູຕໍ່ໜ້າພຸ້ນ ປະກົດວ່າບໍ່ມີຫິມະ ຢູ່ພຸ້ນນະ ແລະ . . . ໂທ ! ຈັ່ງແມ່ນກິ່ນຫອມສົດຊື່ນລອຍມາກັບສາຍລົມເຢັນແທ້ ໆ ! "

ເມື່ອໄດ້ຍິນແນວນັ້ນ ດານກົຈິຮູ້ສຶກທັນທີວ່າ ຮ່າງກາຍອ່ອນເປ້ຍໝົດແຮງ " ໂທ ນີ້ແມ່ນສາຍລົມລະດູບານໃໝ່ອີ່ຫຼີ "

ເມື່ອສາຍລົມອຸ່ນໆ ພັດຕ້ອງຕາມແກ້ມເບົາໆ ດານກິຈິ ຜູ້ຊຶ່ງນຳພາຈຸ້ມເຈື້ອລີງໄປທັງເວັນ ທັງຄືນໂດຍລຸຍຜ່າຫິມະເລິກໆ ກໍ່ຮູ້ສຶກວ່າໝົດກຳລັງວັງຊາ, ຫິວເຂົ້າກໍ່ອ່ອນພັບຈົ່ງລົ້ມຟຸບລົງທ່າມກາງຫິມະ.

" ລະດູບານໃໝ່ ! ລະດູບານໃໝ່ ! "

" ເຮີຍ ! ພວກເຮົາມາຮອດລະດູບານໃໝ່ແລ້ວ ! "

ສຽງພວກລີງນ້ອຍດັງກ້ອງສະນັ່ນຍ້ອງເບີກບານມ່ວນຊື່ນ ຂະນະທີ່ພວກເຂົາພາກັນປີ່ນປ່າຍຂຶ້ນຫຼັງດານກິຈິທີ່ລົ້ມຟຸບຢູ່. ທັງລີງໜຸ່ມລີງເຖົ້າຕ່າງກໍ່ໂດດຂ້າມຜູ້ນຳຂອງເຂົາ ແລ້ວກໍ່ແລ່ນໄປໄວໆ ເທົ່າທີ່ຂາອັນເມື່ອຍລ້າຈະພາໄປໄດ້.

ດານກິຈິຊຶ່ງຖືກປະໃຫ້ຢູ່ຜູ້ດຽວກາງຫິມະນັ້ນ ຮ້ອງຂຶ້ນດັງໆດ້ວຍຄວາມມ່ວນຊື່ນ. ເມື່ອໄດ້ຍິນສຽງທີ່ເຕັມໄປດ້ວຍຄວາມສະໜຸກສະໜານຂອງພວກລີງນ້ອຍ ດານກິຈິກໍ່ວາດມະໂນພາບເຫັນ ພວກລີງນ້ອຍຫຼິ້ນຢອກໃຍກັນຢ່າງມ່ວນຊື່ນ ທັງແລ່ນທັງເຕັ້ນຢູ່ກາງທົ່ງ ທີ່ດອກໄມ້ພວມບານເຮືອງເຮື່ອຕອນລະດູບານໃໝ່.

" ຢູ່ຍືນເດີ ພວກເຈົ້າລີງນ້ອຍຜູ້ແຂງແຮງ ແລະ ສົມບູນ. . ."

ເມື່ອປ່ອຍຄຳເວົ້າເຫຼົ່ານີ້ອອກມາຄ່ອຍໆ ເບົາໆ ດານກິຈິກໍ່ຫາຍໃຈຄັ້ງສຸດທ້າຍ ແລ້ວກໍ່ມິດຊ້ອຍນ້ອຍ.

" ຖ້າລະດູບານໃໝ່ບໍ່ມາຫາພວກເຮົາ ພວກເຮົາຕ້ອງໄປຫາມັນ "

(ແຕ້ມຮູບປະກອບໂດຍ ຊຸດາ ໂຮໂຕ)

ພິມທີ່ ວິສາຫະກິດການພິມຈຳໜ່າຍສຶກສາ.